# ຂ່າວປະເສີດແມ່ນຫຍັງ?

## ບົດຮຽນທີ 1

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ໂຣມ 1:1-17

<u>ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:</u> ໂຣມ 1:1-17

<u>ຈຸດສໍາຄັນຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຈົ້າໂຜດປະທານຊີວິດໃຫ້ທຸກຄົນເມື່ອໄດ້ຮັບເອົາຂ່າວປະເສີດ

<u>ຄໍາຖາມເພື່ອການສໍາຣວດ:</u> ພຣະເຈົ້າໂຜດປະທານສິ່ງສໍາຄັນອັນໃດໃຫ້ທ່ານແລະທຸກຄົນ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຮອບຮອມຄວາມສໍາຄັນຂອງຂ່າວປະເສີດຕໍ່ຊີວິດຂອງທ່ານ

<u>ເຣື່ອງທີ່ກໍາລັງເນັ້ນຫນັກໃນເທັກຊັດ:</u>

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ.
- ຮັບໃຊ້ຄວາມຕ້ອງການຂອງເພື່ອນມະນຸດໃນພຣະນາມຂອງພຣະເຢຊູຄຣິດ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະ ທົ່ວໂລກ
- ຊ່ວຍອຸປຖັມໂບດທີ່ມີຢູ່ແລ້ວໃຫ້ເຂັ້ມແຂງແລະເລີ້ມຕັ້ງໂບດໃຫມ່ຕໍ່

## <u>ຄໍານໍາ</u>

ພຣະເຈົ້າຊົງປ່ຽນຊີວິດແລະສະພາບຜູ້ທີ່ຍອມຖວາຍຕົນເອງທຸກຄົນໃຫ້ພຣະອົງໃນມື້ນີ້ ໃຫ້ມີຊີວິດແລະຄວາມປະພຶດແຕກຕ່າງກັບເມື່ອກ່ອນ ທັງນີ້ກໍເພື່ອນໍາເອົາຂອງພຣະຣາຊທານໄປສູ່ຄົນອື່ນໆທີ່ຍັງບໍ່ຮູ້ຈັກກັບພຣະອົງ

## <u>ຢັ້ງຢືນໂດຍຂ່າວປະເສີດ (1:1-6)</u>

ໂຊໂລມີໃຈຮ້ອນຣົນຢາກຈັບທຸກຄົນທີ່ຮູ້ຈັກແລະສັຣເສີນພຣະເຈົ້າໄປຂັງຄຸກ ໂດຍທີ່ບໍ່ຄໍານຶງເຖິງສິ່ງໃດ ຈຶ່ງຕັດສິນໃຈໃຊ້ກົດຫມາຍບີບບັງຄັບເປັນທາງການ. ວັນນຶ່ງໂຊໂລກໍາລັງເດີນທາງໃກ້ຈະເຖິງເມືອງດາມາເຊເພື່ອຈັບມັດຄຣິສຕຽນໄປຍັງກຸງເຢຣູຊາເລັມ ໃນທັນໃດນັ້ນມີແສງສວ່າງມາບມາຈາກທ້ອງຟ້າເລັ່ງໃສ່ໂຕຂອງໂຊໂລຈຶ່ງຕົກລົງຈາກຫລັງມ້າແລະໃນທັນໃດນັ້ນຕາທັງສອງຂ້າງຂອງໂຊໂລກໍບໍ່ເຫັນຮຸ່ງເລີຍ ພຣະເຈົ້າຈຶ່ງບອກທາງເດີນໃຫ້ແກ່ໂຊໂລ (ກິຈການ 9:1-19)

ຈາກໂຊໂລຜູ້ກົດຂີ່ຂົ່ມເຫັງຄຣິສຕຽນກາຍມາເປັນໂປໂລຜູ້ຮັບໃຊ້ພຣະເຢຊູຄຣິດ (ໂຣມ 1:1) ຄັ້ງນຶ່ງໂປໂລມີຄວາມຍະໂສໃນການເປັນສັນຊາດໂຣມັນ, ມີຄວາມຮູ້ສູງທັງເປັນຜູ້ສໍາຄັນໃນຕໍາແໜ່ງຜູ້ປົກຄອງທາງສາສນາຂອງຈັກກະພັດໂຣມ, ທ່ານກາຍມາເປັນພາຊະນະຮັບໃຊ້ອົງພຣະເຢຊູຄຣິດຈົນຫມົດຈິດຫມົດໃຈແລະກາຍມາເປັນຜູ້ຮັບໃຊ້ຕົວຢ່າງທີ່ດີຂອງຜູ້ຮັບໃຊ້ທົ່ວໄປ. (ຈາກສັຕຣູຜູ້ຍິ່ງໃຫຍ່ໄດ້ກາຍມາເປັນຜູ້ຮັບໃຊ້ທີ່ສໍາຄັນ) ໂປໂລເຊື່ອວ່າພຣະເຈົ້າຊົງເອີ້ນໃຫ້ເປັນອັຄສາວົກ (ໂຣມ 1:1; ຄາລາເຕັຽ 2:16) ການເອີ້ນຍ່ອມໄດ້ຮັບອໍານາດໃນການສອນ, ເທສນາ, ແລະການບັນທຶກເຣື່ອງຂອງພຣະເຈົ້າ. ໂປໂລໄດ້ຖ່ອມຕົວທີ່ສຸດ (1ໂກຣິນໂທ 15:9).

ໂປໂລມີທັງອໍານາດແລະຄວາມຮູ້ສູງທາງດ້ານສາສນາແລະການປົກຄອງຂອງຈັກກະພັດໂຣມ. ທ່ານໃຊ້ເວລາແບ່ງແຍກຈັບມັດຄຣິສຕຽນໄປຂັງຄຸກ. ເມື່ອທ່ານໄດ້ຮັບການຊົງປ່ຽນແປງແລ້ວທ່ານກໍໄດ້ປ່າວປະກາດຂ່າວປະເສີດເຣື່ອງພຣະເຈົ້າແລະເຣື່ອງພຣະເຢຊູຄຣິດ ໂດຍບໍ່ມີຄວາມລະອາຍ (ໂຣມ 1:1,9) ຂ່າວປະເສີດຂອງພຣະເຈົ້າ

**ສຶກສາພຣະຄັມພີພາສາລາວ**

Copyright © 2000 by BAPTISTWAY.
ສງວນລິກຂະສິດ

ອະນຸຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY, Baptist General Convention of Texas, 333 North Washington, Dallas, TX 75246-1798.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒000

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, State Missions Commission: James Semple
Director, Bible Study/Discipleship Division: Bernard M. Spooner

Publishing consultant: Ross West, Positive Difference Communications

Language Materials Team

Bible Comments Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Unit 1
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Comments Writer for Unit 2&3
Sidney Kahn, Saginaw Community Church, Fort Worth, Texas
Editor for Unit 2&3
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Comments Writer for Unit 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Unit 4
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the Laotian Team
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, New Work Consultant, Multi-Ethnic, Baptist General Convention of Texas
Nelda P. Williams, Facilitators Coordinator, Consultant, Bible Study/Discipleship Division, Baptist General Convention of Texas

(ໂຣມ 1:1) ໄດ້ ເປີດເຜີຍຄວາມຈິງເຣື່ອງພຣະເຈົ້າ. ໂປໂລຫວັງໃຫ້ຄົນຢິວອ່ານແລະຄິດເຖິງຄຳທຳນວາຍໃນສມັຍກ່ອນພຸ້ນ (1:2) ຊຶ່ງຊີ້ໃຫ້ເຫັນຄຳສັນຍາໃນການສະເດັດມາຂອງພຣະເຢຊູຈາກເຊື້ອສາຍຂອງດາວິດ (1:3)

ຫລັງຈາກໂປໂລຮູ້ຈັກກັບພຣະເຢຊູ, ຈຶ່ງຮູ້ວ່າຕົນເອງເປັນຄົນຜິດບາບຢ່າງໃຫຍ່ຫລວງ ແລະກໍຮູ້ວ່າຕົນເອງເປັນຄົນອວດອ້າງຈອງຫອງໃຊ້ອຳນາດຈັບກຸມຄຣິສຕຽນໄປຂັງຄຸກ, ແຕ່ເປັນດ້ວຍຄວາມຮັກແລະພຣະຄຸນຂອງພຣະເຈົ້າໂປໂລຈຶ່ງຖືກຊົງໄຖ່ໃຫ້ພົ້ນ ແລະກໍກາຍມາເປັນອັຄສາວົກທີ່ໄດ້ປະກາດເຣື່ອງຂອງພຣະເຢຊູຄຣິດ ເພື່ອຄົນທັງຫລາຍຈະກັບໃຈຫັນໜີຈາກທາງຊົ່ວຮ້າຍເຫມືອນດັ່ງທີ່ທ່ານໄດ້ເຮັດໃນເມື່ອກ່ອນ (1:5)

## ຈົດໝາຍຖາມຂ່າວ (1:7)

ໂປໂລຂຽນ ຈ.ມ ຈາກກຸງໂຣມໃນຖ່າມກາງສັຕວັດທີ່ນິ່ງໄດ້ເວົ້າວ່າ ພຣະເຈົ້າໄດ້ຊົງເອີ້ນຄົນໃນກຸງໂຣມມາເຊື່ອພຣະອົງແລະສອນໃຫ້ພວກເຂົາເຈົ້າຮັກກັນແລະກັນເໝືອນພຣະອົງຊົງຮັກ(1ໂຢຮັນ 4:19) ເມື່ອພຣະອົງ ຊົງເອີ້ນຜູ້ໃດມາເຊື່ອໃນພຣະອົງແລ້ວຄົນນັ້ນກໍກາຍເປັນໄພ່ພົນຂອງພຣະອົງ. ຄຳວ່າໄພ່ພົນຂອງພຣະອົງບໍ່ໄດ້ໝາຍຄວາມວ່າຄົນນັ້ນມີຄວາມເຊື່ອອັນໃຫຍ່ຫລວງ ແຕ່ໝາຍຄວາມວ່າ ພຣະເຈົ້າຊົງຊຳຣະແລ້ວ. ພວກເຂົາເຈົ້າຖືກເອີ້ນມາເພື່ອຈະມີຊີວິດທີ່ບໍຣິສຸດເໝືອນພຣະອົງຊົງບໍຣິສຸດ, ພວກເຂົາເຈົ້າຖືກເອີ້ນມາກໍເພື່ອສັມພັນກັບພຣະອົງ ແລະຮັບໃຊ້ພຣະອົງ. ດັ່ງນັ້ນພວກທີ່ພຣະອົງຊົງ ເອີ້ນມາຈຶ່ງກາຍເປັນຄົນບໍຣິສຸດໂດຍການຖືກຊຳຣະແລ້ວໂດຍພຣະໂລຫິດຂອງພຣະເຢຊູ.

ຄວາມໝາຍຂອງໂປໂລມີຢູ່ວ່າ ທຸກຄົນທີ່ເຊື່ອໃນພຣະອົງກໍເປັນຄອບຄົວດຽວກັນໃນພຣະເຈົ້າ, ພຣະອົງເອີ້ນມາເພື່ອເຮັດການດີ ລະທຸກຄົນຜູ້ທີ່ປະຕິບັດຕາມຄຳສອນກໍກາຍເປັນຜູ້ບໍຣິສຸດໃນພຣະເຈົ້າ, ລະຄົນຈຳພວກນີ້ແມ່ນພຣະເຈົ້າໄດ້ຈັດຕຽມໄວ້ເພື່ອຕິດຕາມແລະປະກາດເຣື່ອງຂອງພຣະອົງໃຫ້ແກ່ຄົນທົ່ວໂລກ

## ພຣະອົງພໍພຣະທັຍເມື່ອເຮົາເປັນພະຍານ ( 1:8-13 )

ໂປໂລມີຄວາມພູມໃຈແລະຂອບພຣະຄຸນພຣະເຈົ້າທີ່ເຫັນຄວາມເຊື່ອຂອງພວກເຂົາເຈົ້າຈະເຣີນແລະມີຂ່າວຊ່າລືໄປທົ່ວໂລກ (1: 8) ທຸກຄັ້ງທີ່ໂປໂລອ້ອນວອນທ່ານກໍໄດ້ອ້ອນວອນເພື່ອພວກເຂົາເຈົ້າຢູ່ສເມີ. ໃນໂບດຫລາຍຄົນໄດ້ຕົບມືເມື່ອສຽງເພງຈົບລົງ ຫລັງຈາກການນະມັສການຍິງໜຸ່ມຄົນນຶ່ງຖາມຂ້າພະເຈົ້າ ວ່າ ເປັນຫຍັງພວກເຮົາຈຶ່ງຕົບມືໃຫ້ກັບນັກຮ້ອງແຕ່ບໍ່ໄດ້ຕົບມືໃຫ້ກຽດພຣະເຢຊູເລີຍ? ເຮົາຮູ້ຢູ່ຫາກບໍ່ມີພຣະເຢຊູເຮົາກໍບໍ່ມີສິ່ງໃດເລີຍແລະຍັງຕ້ອງຕາຍໃນຄວາມບາບຕລອດໄປດ້ວຍ ຂ້າພະເຈົ້າມັກຈະຕົບມືໃຫ້ຫລາຍຄົນທີ່ເຮັດໃຫ້ຂ້າພະເຈົ້າພໍໃຈຄືນັກຮ້ອງທີ່ຮ້ອງຈົບໄປວ່າງກີ້ນີ້ແລະກໍຍັງຕົບມືໃຫ້ນັກເທດທີ່ເທດຖືກໃຈຂ້າພະເຈົ້າ ແຕ່ຂ້າພະເຈົ້າບໍ່ໄດ້ຕົບມືເພື່ອຂອບພຣະຄຸນພຣະອົງເລີຍ.

ໂປໂລໄດ້ຕັ້ງຄຳໝັ້ນສັນຍາເອົາການປະກາດຂ່າວປະເສີດເປັນການສຳຄັນກ່ວາສິ່ງໃດໆໃນຊີວິດຂອງທ່ານ (1:9-10) ທ່ານຢາກໄປຫາພີ່ນ້ອງໃນກຸງໂຣມທຸກໆຄົນເພື່ອຈະນຳຂອງປະທານຈິດວິນຍານມາເຖິງພວກເຂົາເຈົ້າ (1:11). ໂປໂລຕັ້ງຢາກສອນເຣື່ອງການດຳເນີນຊີວິດໃໝ່ໃນທາງຂອງພຣະເຢຊູຄຣິດ (ໂຣມ 1:1-8)

## ຈົ່ງປະກາດແກ່ທຸກຄົນ (1:14-17)

ໂປໂລເຊື່ອວ່າພຣະເຈົ້າໄດ້ວາງໃຈມອບໃຫ້ທ່ານເປັນຜູ້ປະກາດຂ່າວປະເສີດດັ່ງນັ້ນທ່ານຈຶ່ງກ່າວວ່າ ເຮົາເປັນໜີ້ພວກສີວິໄລແລະພວກຕ່ຳຊ້າ (1:14) ທ່ານບໍ່ໄດ້ຈຳກັດເລືອກໜ້າຊົນຊາດໃດໃນການປະກາດຂ່າວປະເສີດ.

ໃນຣັຖເທັກຊັດກໍມີຫລາຍຊາດຫລາຍພາສາເຂົ້າມາຢູ່ແຕ່ລະມື້ ພຣະເຈົ້າໄດ້ເອີ້ນໃຫ້ໄພ່ພົນຂອງພຣະອົງຮ່ວມແຮງຮ່ວມໃຈກັນໃນການປະກາດໂດຍບໍ່ມີຄວາມລະອາຍເພື່ອຄົນທັງຫລາຍເຫລົ່ານີ້ຈະໄດ້ຮູ້ຈັກກັບພຣະອົງ ໂດຍບໍ່ຄຳນຶງເຖິງເຊື້ອຊາດແລະຂະນົບທຳນຽມພວກເຂົາເຈົ້າ. (1:16). ໂປໂລໄດ້ປະກາດໃຫ້ຄົນທຸກຊາດພາສາເພາະຂ່າວປະເສີດບໍ່ຈຳແນກຊົນຊາດແລະຖານະຕຳແໜ່ງ ແລະການພິພາກສາລົງໂທດກໍບໍ່ເລືອກໜ້າຜູ້ໃດ ດັ່ງນັ້ນເຮົາທັງຫລາຍເປັນຜູ້ທີ່

ພຣະເຈົ້າຊົງເລືອກໃຫ້ປະກາດໃຫ້ຄົນທັງຫລາຍກັບໃຈກ່ອນວັນພິພາກສາຈະມາເຖິງ.

## ຜົນຂອງຂ່າວປະເສີດ

ໃນພິທີຮັບສິນບັບຕິສມາຂ້າພະເຈົ້າໄດ້ອະທິບາຍກ່ອນໜ້າໃຫ້ບັບຕິສມາຊາຍໜຸ່ມຄົນນຶ່ງວ່າ ເຮົາທັງຫລາຍໄດ້ຕາຍແລ້ວໃນພຣະອົງກັບນ້ຳບັບຕິສມາ ແລະກໍຄືນມາຮັບຊີວິດໃໝ່ໃນພຣະເຢຊູຄຣິດ. ຊາຍໜຸ່ມຄົນນີ້ໄດ້ເຂົ້າໃຈຄວາມໝາຍຢ່າງເລິກຊຶ້ງເຖິງການຕາຍຈາກຊີວິດເກົ່າ. ເໝືອນດັ່ງໂປໂລໄດ້ຝັງຊີວິດເກົ່າຂອງທ່ານໄວ້ກັບກາງແຂນພຣະເຢຊູແລະທ່ານໄດ້ຈຸ່ມຕົນເອງລົງໃນຂ່າວປະເສີດເພື່ອຊຳລະຕົນເອງແຕ່ລະວັນດັ່ງນັ້ນທ່ານຈຶ່ງກາຍເປັນຄົນບໍຣິສຸດແລະເຂັ້ມແຂງໃນພຣະເຢຊູຄຣິດນັບມື້ນັບທະວີຂຶ້ນ.

## ຄຳຖາມ

- ໂປໂລຮູ້ວ່າທ່ານເອງເປັນຜູ້ຮັບໃຊ້ພຣະເຢຊູຄຣິດ (1:1) ຄຳວ່າຜູ້ຮັບໃຊ້ແປວ່າ ຂ້ອຍໃຊ້ ທ່ານເດຈະບອກຕົນເອງວ່າທ່ານເປັນໃຜ?
- ທ່ານສົມຄວນຈະປະກາດເຣື່ອງຂອງພຣະເຢຊູໃຫ້ໃຜແດ່? ມື້ໃດຈະປະກາດ?
- ທ່ານຈະບອກໃຜວ່າພຣະເຈົ້າຮັກທ່ານແລະພຣະອົງມີແຜນການສຳລັບຊີວິດທ່ານໃນມື້ນີ້?
- ແມ່ນຫຍັງເປັນສິ່ງຂັດຂວາງບໍ່ໃຫ້ທ່ານກ້າປະກາດເຣື່ອງຂອງພຣະເຢຊູຄຣິດ?

# ຊົງພຣະພິໂຣດ
## ບົດຮຽນທີ 2

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ໂຣມ 1:18-32
<u>ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:</u> ໂຣມ 1:18-32
<u>ຈຸດສໍາຄັນຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າຜູ້ທີ່ປະຕິເສດບໍ່ຍອມຮັບເອົາຂ່າວປະເສີດຈະຖືກພິພາກສາລົງໂທດ.
<u>ຄໍາຖາມເພື່ອການສໍາຣວດ:</u> ການມີຊີວິດຕາມໃຈຊອບມີຜົນສະທ້ອນແນວໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ຈະຊ່ອຍຊີ້ແຈງເຖິງການລົງໂທດຄົນທຸກຄົນທີ່ບໍ່ຍອມສາລະພາບຜິດບາບໃນວັນສຸດທ້າຍ.

<u>ເຣື່ອງທີ່ກໍາລັງເນັ້ນຫນັກໃນເທັກຊັດ:</u>

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ.
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະ ທົ່ວໂລກ
- ເສີມຂຍາຍຄອບຄົວຄຣິສຕຽນ
- ຊ່ວຍອຸປຖັມໂບດທີ່ມີຢູ່ແລ້ວໃຫ້ເຂັ້ມແຂງແລະເລີ້ມຕັ້ງໂບດໃຫມ່ຕໍ່

<u>ຄໍານໍາ</u>

ຄົນເຮົາມີທາງເລືອກຕາມໃຈຊອບ. ເຮົາສາມາດເປັນຕົວເຮົາເອງແລະເອົາພຣະເຈົ້າເຂົ້າມາໃນຊີວິດ, ຫລືຄົນສາມາດສ້າງພຣະຕ່າງໆແທນພຣະເຈົ້າອົງທ່ຽງແທ້, ແລະກໍຂາບໄຫວ້ພຣະເຫລົ່ານັ້ນເພື່ອໃຫ້ເຮົາດີໃຈໄປແຕ່ລະມື້. ຄົນເຮົາສາມາດສ້າງພຣະຕ່າງໆໄດ້ຕາມໃຈຊອບແຕ່ຈະສ້າງພຣະເຈົ້າອົງທ່ຽງແທ້ນັ້ນບໍ່ໄດ້. ພຣະເຈົ້າອົງທ່ຽງແທ້ນັ້ນສ້າງມະນຸດແລະພຣະຕ່າງໆນັ້ນແມ່ນມະນຸດເປັນຜູ້ສ້າງ, ດັ່ງນັ້ນໃນລະຫວ່າງພຣະເຈົ້າທີ່ສ້າງມະນຸດແລະພຣະເຈົ້າທີ່ມະນຸດສ້າງຈະເອົາມາປຽບທຽບກັນບໍ່ໄດ້ແທ້.

<u>ພຣະເຈົ້າຊົງພຣະພິໂຣດ (1:18-20)</u>

ພຣະເຈົ້າຊົງສໍາແດງຄວາມບໍ່ພໍພຣະທັຍກັບຄົນທັງຫລາຍທີ່ຫມິ່ນປມາດພຣະອົງຄືມະນຸດນໍາເອົາຄວາມຊົ່ວຮ້າຍມາຂັດຂວາງຄວາມຈິງ, ເຂົາເຈົ້າດໍາເນີນຊີວິດຕາມໃຈຊອບຊຶ່ງເປັນການຜິດຕໍ່ຫລັກຄໍາສອນຂອງພຣະເຈົ້າຢູ່ສເມີ, ຜູ້ໃດດໍາເນີນຊີວິດທີ່ຜິດຕໍ່ພຣະເຈົ້າກໍເປັນບໍ່ເກີດແຫ່ງການທໍາລາຍຕົນເອງ ເພາະພຣະພິໂຣດຂອງພຣະເຈົ້າຈະຕົກມາໃສ່ເຂົາເຈົ້າ. ຄວາມຊອບທັມແລະພຣະພິໂຣດຂອງພຣະອົງກໍຕົກມາໃສ່ມະນຸດທັງສອງປະເພດ ຄືຄົນທີ່ຍອມເຊື່ອຟັງຄໍາສັ່ງສອນຂອງພຣະອົງກໍໄດ້ຮັບຄວາມສັດຊື່ແລະທ່ຽງທັມຈາກພຣະອົງ ແລະຄົນທີ່ດື້ດ້ານບໍ່ຍອມເຊື່ອຟັງນັ້ນພຣະພິໂຣດຂອງພຣະອົງກໍຕົກໃສ່ຄົນນັ້ນ.

ທາງຂອງພຣະເຈົ້າບໍ່ເປັນທີ່ຮູ້ແກ່ຄົນທັງຫລາຍໄດ້ງ່າຍດາຍ ພຣະເຈົ້າເປັນຜູ້ບໍຣິສຸດ ມະນຸດເຮົາເປັນຄົນຜິດແລະບາບຈຶ່ງບໍ່ສາມາດເຫັນພຣະເຈົ້າດ້ວຍຕາເປົ່າຂອງເຮົາ, ຢ່າງໃດກໍດີພຣະອົງໄດ້ສ້າງທັມຊາດໄວ້ເພື່ອ ມະນຸດທີ່ສລາດແລະຊອກສແວງຫາສິນທັມຈະຮູ້ຈັກພຣະອົງໂດຍທາງນັ້ນ(1:19-20) ເຫມືອນດັ່ງເຮົາທັງຫລາຍໄດ້ຟັງເພງອັນອອນ

ຊອນ, ພ້ອມດ້ວຍການຮ້ອງລຳຕ່າງໆເຮົາກໍຈະມີອາຣົມໄປຕາມນັ້ນ. ເຊັ່ນດຽວກັນຫາກເຮົາສັງເກດເບິ່ງທັມຊາດທີ່ພຣະເຈົ້າສ້າງມາແລ້ວເຮົາຈະຮູ້ວ່າສິ່ງເຫລົ່ານີ້ບໍ່ໄດ້ເກີດມາເອງແຕ່ແມ່ນພຣະເຈົ້າເປັນຜູ້ຊົງສ້າງ. ທີ່ມະນຸດເບິ່ງບໍ່ເຫັນ ຫູຟັງແຕ່ບໍ່ໄດ້ຍິນເພາະຄວາມບາບໄດ້ມາປິດບັງໄວ້ (ມາຣະໂກ 8:18)

## ຄວາມອວດອ້າງຂອງມະນຸດ (1:21-23)

ຄົນທີ່ຄິດວ່າຕົນເອງເປັນຄົນສລາດມັກຈະມີຈຸດຈົບໂດຍຂາບໄຫວ້ພຣະທຽມທີ່ສ້າງຂຶ້ນດ້ວຍມືມະນຸດ. ພຣະທຽມຕ່າງໆໄດ້ເກີດຂຶ້ນເມື່ອມະນຸດເຮົາບາງກຸ່ມບໍ່ຮູ້ຈັກກັບພຣະເຈົ້າອົງທ່ຽງແທ້ຈຶ່ງສ້າງພຣະຕ່າງໆຂຶ້ນມາເພື່ອຂາບໄຫວ້ບູຊາເພື່ອຊອກຫາທາງແຫ່ງຄວາມລອດພົ້ນ. ບາງກຸ່ມໄດ້ສ້າງພະຂຶ້ນມາເພາະບໍ່ຍອມຮັບເຊື່ອພຣະເຈົ້າອົງທ່ຽງແທ້. ແທນທີ່ມະນຸດຜູ້ສລາດຈະຊອກສແວງຫາພຣະເຈົ້າຜູ້ສ້າງສວັນຊັ້ນຟ້າ, ຜູ້ສ້າງມະນຸດຂເຮົາທຸກຄົນ ພວກເຂົາເຈົ້າກໍເຊື່ອໝັ້ນໃນຄວາມຮູ້, ຄວາມສລາດຂອງຕົນເອງຈຶ່ງກາຍເປັນຄົນທີ່ຂາບໄຫວ້ພຣະທຽມທີ່ເປັນຮູບຕ່າງໆນາໆທີ່ສ້າງຂຶ້ນດ້ວມມືມະນຸດຊຶ່ງເປັນຂອງຕໍ່າກວ່າຕົນເອງເສັຽອີກ, ບາງຄົນຈົນເຖິງຂັ້ນຂາບໄຫວ້ຮູບສັດເດັຍຣະສານສີ່ຕີນ (ກິຈການ 7:41)

ໂປໂລໄດ້ກ່າວໄວ້ຢ່າງລະອຽດສຳລັບຄົນທີ່ຂາບໄຫວ້ພຣະທຽມບໍ່ມີທາງຈະໜີພົ້ນຈາກພຣະພິໂຣດຂອງພຣະເຈົ້າໄດ້. ບາງຄົນກໍເລີ້ມດ້ວຍການປະຕິເສດບໍ່ຍອມເຊື່ອພຣະເຈົ້າ ແລະຕໍ່ມາກໍສ້າງພຣະຂອງຕົນເອງ,ສິ່ງເຫລົ່ານີ້ຈຶ່ງກາຍເປັນຄວາມບາບຢ່າງໃຫຍ່ຫລວງຈຶ່ງເປັນຕົ້ນເຫດໃຫ້ຄົນນັ້ນກາຍເປັນຄົນເຮັດການຊົ່ວຕ່າງໆ ເຊັ່ນການຫລິ້ນຊູ້, ການກຽດຊັງ, ການອິດສາບັງບຽດກັນ, ການມັກໃຫຍ່ໄຝ່ສູງ, ແລະໃນທີ່ສຸດຄົນນັ້ນກໍກັບໄປກຽດຊັງພຣະເຈົ້າແລ້ວຍັງຊັກຊວນຄົນອື່ນເຮັດຄືຕົນດ້ວຍ. ເອົາຄວາມຮູ້ແລະຄວາມສາມາດຂອງຕົນມາປິ້ນຄວາມຈິງເພື່ອຄົນທີ່ຮູ້ນ້ອຍໃຫ້ຫລົງຕາມໄປ. ໃຜກໍຕາມທີ່ເຮັດການດັ່ງນີ້ຈະບໍ່ມີສ່ວນໃນຣາຊອານາຈັກສວັນ ຂອງພຣະ ເຈົ້າເດັດຂາດ (1ໂກຣິນໂທ 6:9)

## ຄວາມບາບປີ້ນຄວາມຈິງ (1:24-25)

ດັ່ງນັ້ນໝາກຜົນຂອງການບໍ່ເຊື່ອຟັງກໍປາກົດແກ່ມະນຸດທີ່ຢູ່ປາສຈາກພຣະເຈົ້າ (1:24) ຈົ່ງຈຳໄວ້ວ່າພຣະເຈົ້າໄດ້ສຳແດງພຣະອົງເອງໃນ (1:19-20), ແຕ່ມະນຸດໄດ້ປະຕິເສດພຣະອົງ (1:21), ສິ່ງທີ່ໂງ່ຈ້າຂອງໂລກໄດ້ປິດບັງມະນຸດຜູ້ມີປັນຍາຝ່າຍໂລກໃຫ້ກາຍເປັນຄົນໂງ່ຈ້າໄປດ້ວຍ (1:22) ແລະແລ້ວພວກເຂົາກໍພາສ້າງພຣະຕ່າງໆນາໆຈາກວັດຖຸສິ່ງຂອງໃນໂລກທີ່ພຣະເຈົ້າສ້າງໄວ້ແລ້ວໃນຕົ້ນເດີມມາຂາບໄຫວ້ບູຊາຕາງພຣະເຈົ້າ(1:23) ດັ່ງນັ້ນໂປໂລເວົ້າແລ້ວເວົ້າອີກໃນ( 1:24,26,28 )ຄວາມບາບໄດ້ເຮັດໃຫ້ມະນຸດເຮົາກາຍເປັນຄົນສາຍຕາສັ້ນທາງພາຍນອກແລະພາຍໃນຊຶ່ງບໍ່ສາມາດເບິ່ງສິ່ງໃດຖືກແລະສິ່ງໃດຜິດ, ສ່ວນທາງໃນກໍບໍ່ໄດ້ນຶກເຫັນສິ່ງໃດເປັນທີ່ພໍພຣະທັຍພຣະເຈົ້າ ແຕ່ສ່ວນຫຼາຍມັກຈະເຫັນແຕ່ສິ່ງທີ່ເຮັດໃຫ້ຕົນເອງພໍໃຈ. ຄົນເຮົາເມື່ອເຮັດຜິດໄປເທົ່າໃດກໍຍິ່ງໄກຈາກພຣະເຈົ້າເທົ່ານັ້ນ ຈົນໃນທີ່ສຸດກໍກ້າສາມາດເວົ້າວ່າ <u>ພຣະເຈົ້າບໍ່ມີ</u> ຊຶ່ງເປັນການດູໝິ່ນປມາດພຣະເຈົ້າບໍ່ຮູ້ສຶກຕົວ. ພຣະເຢຊູໄດ້ກ່າວວ່າ ມີຕາແລ້ວຍັງບໍ່ເຫັນ ຫລື ມີຫູແລ້ວຍັງບໍ່ໄດ້ຍິນຫລື? (ມາຣະໂກ 8:18)ເມື່ອມະນຸດເລືອກບໍ່ຮັບເຊື່ອພຣະເຈົ້າພຣະອົງກໍປ່ອຍຕາມໃຈເຂົາ, ເມື່ອເຂົາມີຊີວິດທີ່ບໍ່ມີພຣະເຈົ້າເຂົາກໍຄິດວ່າມີຊີ ວິດແບບເສຣີພາບບໍ່ມີພຣະເຈົ້າຄອຍບັງຄັບ, ພຣະເຈົ້າຊົງຮູ້ດີຊີວິດເຂົາຈະມີອັນຕະລາຍແລະໃນທີ່ສຸດເຂົາກໍຈະສູນເສັຽທາງແຫ່ງຄວາມພົ້ນ.

ຂ້າພະເຈົ້າເຫັນຊາວໜຸ່ມຫລາຍຄົນມັກຈະອອກຈາກບ້ານໄປຢູ່ຕ່າງຫາກເພາະທົນຕໍ່ພໍ່ແມ່ບອກສອນບໍ່ໄດ້ ຈຶ່ງອ້າງວ່າຢາກໄປຢູ່ຕ່າງຫາກເພື່ອຈະຮຽນຮູ້ເປັນຜູ້ໃຫຍ່ຮັບຜິດຊອບຕົນເອງແດ່. ເມື່ອອອກໄປແລ້ວຫຼາຍຄົນກໍເປັນຜົນດີແທ້, ແຕ່ຫຼາຍຄົນກໍຍິ່ງມີຊີວິດຕົກຕໍ່າກວ່າເກົ່າແລະກໍກາຍເປັນເຫຍື່ອຂອງໂລກຈົນບາງຄົນໄດ້ໃຊ້ຊີວິດຢູ່ໃນທີ່ຄຸມຂັງເປັນເວລາຍາວນານ ບາງຄົນກໍກັບຄືນໄປຢູ່ກັບພໍ່ແມ່ເໝືອນເດີມ. ຄົນທີ່ອອກຈາກທາງຂອງພຣະເຈົ້າແລະຄົນທີ່ບໍ່ຍອມເຊື່ອພຣະເຈົ້າກໍເປັນດັ່ງນັ້ນແທ້.

## <u>ຂາດພຣະເຈົ້າເປັນຜູ້ນຳທາງແຫ່ງຊີວິດ ( 1:26-27)</u>

ຣາຄະຕັນຫາກໍເປັນນາຍຂອງຊີວິດ (1:26 ) ໂປໂລຊີ້ໃຫ້ເຫັນຕົວຢ່າງຜູ້ຍິງເຮັດຜິດຕໍ່ທັມຊາດທາງເພດທີ່ພຣະເຈົ້າສ້າງມາໃຫ້ຊາຍຍິງແຕ່ງງານເປັນຜົວເມັຽກັນຈຶ່ງສົມສູ່ກັນໄດ້. ໃນສມັຍປັຈຸບັນນີ້ຊາຍຍິງຍິ່ງເຮັດບາບກັນຢ່າງໃຫຍ່ຫລວງ, ຍິງປ່ຽນຜູ້ຊາຍໜ້າໃໝ່ເປັນປະຈຳ, ຊາຍກໍສັມພັນເພດກັບຊາຍ, ຄົນໜຸ່ມສາວບໍ່ແຕ່ງງານກັນກໍຢູ່ກິນນຳກັນກາຍເປັນຂອງທັມດາ ເຫດທີ່ເປັນເຊັ່ນນີ້ກໍຍ້ອນມະນຸດຂາດພຣະເຈົ້ານັ້ນເອງ ເຖິງແມ່ນວ່າບາງຄົນໄດ້ຮູ້ຈັກອົງພຣະຜູ້ເປັນເຈົ້າກໍຍັງເຮັດເຊັ່ນນັ້ນຢູ່ ເພາະໄຟຣາຄະຕັນຫານັ້ນເປັນນາຍປົກຄອງຄົນນັ້ນ.

ເມື່ອໃຜຜູ້ນຶ່ງເລືອກບໍ່ເຊື່ອພຣະເຈົ້າພຣະອົງກໍບໍ່ໄດ້ປົກປັກຮັກສາແລະເບິ່ງແຍງຄົນນັ້ນ. ສະນັ້ນຈົ່ງຍອມສາຣະພາບຕໍ່ພຣະອົງແລ້ວພຣະອົງຈະເມດຕາສົງສານທ່ານ, ຂໍໃຫ້ພຣະອົງຊົງນຳອອກຈາກຣາຄະຕັນຫາມາສູ່ທາງຂອງພຣະອົງແລ້ວບາບກັມແລະພຣະພິໂຣດຂອງພຣະອົງຈະບໍ່ລົງມາເຖິງທ່ານ.

## <u>ທາງຂອງຄວາມບາບ (1:28-32)</u>

ຄວາມບາບເຮັດໃຫ້ຄວາມສັມພັນໃນຣະຫວ່າງເຮົາກັບເພື່ອນຝູງຕລອດເຖິງພຣະເຈົ້າຈິບລົງ (1:29) ເພາະຄວາມຮ້າຍ, ຄວາມໂລບ, ການຄິດປອງຮ້າຍ, ການເຫິງສາ, ການຂ້າຟັນ, ການວິວາດຜິດຖຽງ, ການຜູກພຍາບາດອາຄາດ, ການສັບຊໍ່ນິນທາເຫລົ່ານີ້ໄດ້ທຳລາຍຄວາມສັມພັນຈົນໝົດສິ້ນ. ຫລາຍຄົນຢາກໄດ້ສິ່ງທີ່ຜູ້ອື່ນມີ ຈາກນັ້ນກໍຄິດແນວບໍ່ດີ, ຄິດຢາກລັກ, ຢາກໂລບ ແລະສໍ້ໂກງຫາວິທີທີ່ຈະໄດ້ມາເປັນຂອງຕົນເອງກໍເລີຍກາຍເປັນທາງຂອງຄວາມບາບໄປ.

ໃນໂບດຂອງພວກເຮົາກໍຍັງມີສິ່ງນີ້ເກີດຂຶ້ນຢູ່ເລື້ອຍ ໂດຍສະເພາະແມ່ນການເວົ້າຊຸບຊິບກັນ ຈາກການນ້ອຍນີ້ເອງເຮົາທັງຫລາຍຜູ້ທີ່ຮູ້ພຣະເຈົ້າຢູ່ແລ້ວຈຶ່ງກັບໄປເຮັດບາບໂດຍບໍ່ຮູ້ສຶກຕົວ ດັ່ງນັ້ນເປົາໂລຈຶ່ງກ່າວເຕືອນໄວ້ເພື່ອບໍ່ໃຫ້ເຮົາທັງຫລາຍເຮັດໃນທາງຂອງຄວາມບາບ.

### <u>ຄຳຖາມ</u>

- ຄວາມໂມໂຫຂອງທ່ານແລະພຣະພິໂຣດຂອງພຣະເຈົ້າແຕກຕ່າງກັນຢ່າງໃດ?
- ທ່ານຈະສະແດງການສັຣເສີນແລະຂອບພຣະຄຸນແນວໃດໃນຊີວິດຂອງທ່ານ?
- ອະທິບາຍໃນເມື່ອທ່ານຄິດວ່າເປັນຄົນສລາດແມ່ນການຄົ້ນພົບຄວາມໂງ່ຈ້າຂອງຕົນເອງ?
- ແມ່ນຫຍັງເປັນສິ່ງກີດກັ້ນບໍ່ໃຫ້ເຮົາເຊື່ອຟັງພຣະເຈົ້າ
- ເປັນຫຍັງພຣະເຈົ້າຈຶ່ງຊົງພຣະພິໂຣດເມື່ອຍັງຮັກເຮົາຢູ່?

# ເປັນຫຍັງຖືສາສນາຍັງບໍ່ພໍ?

## ບົດຮຽນບົດທີ 3

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ ໒:1-13, ໒8-໒9;3:19-໒0

<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ໂຣມ ໒:1-3:໒0

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ເຮົາຮູ້ວ່າເຮົານັບຖືສາສນາດີປານໃດກໍຕາມກໍບໍ່ສາມມາດລອດໄດ້ຫາກຂາດການປະຕິບັດ

<u>ຄຳຖາມເພື່ອການສຳຣວດ:</u> ການດີອັນໃດທີ່ຄົນເຮົາມັກເຮັດແທນທີ່ຈະເຊື່ອແລະປະຕິບັດພຣະເຈົ້າ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອອະທິບາຍໃຫ້ຮູ້ວ່າຄວາມດີແລະການນັບຖືສາສນາບໍ່ນຳພາໄປເຖິງທີ່ພົ້ນໄດ້.

<u>ເຣື່ອງທີ່ກຳລັງເນັ້ນໜັກໃນເທັກຊັດ:</u>

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ.
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະ ທົ່ວໂລກ
- ຊ່ວຍອຸປຖັມໂບດທີ່ມີຢູ່ແລ້ວໃຫ້ເຂັ້ມແຂງແລະເລີ້ມຕັ້ງໂບດໃຫມ່ຕໍ່

<u>ຄຳນຳ</u>

ຫລາຍເທື່ອເຮົາມັກຈະເຫັນຄວາມຜິດຂອງຄົນອື່ນແລະກໍຄິດໃນໃຈວ່າເຮົາເປັນຄົນເຮັດຖືກຕ້ອງຕາມນຳພຣະທັຍພຣະເຈົ້າ, ສິ່ງນີ້ເຮົາຄວນລະມັດລະວັງ ເພາະວ່າພຣະເຈົ້າເຫັນ ທຸກຄົນເປັນຄົນຜິດບາບແລະຖືກແຍກຈາກພຣະອົງ ດັ່ງນັ້ນການຈະກັບຄືນຫາພຣະອົງ ໄດ້ມີແຕ່ທາງດຽວເທົ່ານັ້ນຄືເຊື່ອແລະຍອມຖວາຍຕົນເອງຕິດຕາມພຣະເຢຊູ.

<u>ສາສນາພາໄຂຄວາມຈິງ (໒:1-4)</u>

ໂປໂລຂຽນຈົດໝາຍໃຊ້ຄຳວ່າ "ເຈົ້າ" (໒:1) ເປັນການຂຽນເຖິງຄຣິສຕຽນຊາວໂຣມັນ ທີ່ກຸງໂຣມ ເຫດຜົນທີ່ໂປໂລຂຽນຈົດໝາຍນັ້ນກໍເພາະວ່າຄຣິສຕຽນໂຣມັນມັກຈະມີຄວາມນຶກຄິດໃນໃຈຕ້ອງຕິແຕ່ຄົນອື່ນ. ໃນຄຳເວົ້າຂອງໂປໂລໄດ້ເຕືອນພວກເຮົາວ່າ "ເມື່ອເຮົາຕັດສິນຄົນອື່ນ ແມ່ນເຮົາຕັດສິນເຮົາເອງແລ້ວ" (໒:1)

ໃນພຣະທັມໂຣມບົດ1 ໂປໂລໄດ້ສອນເຣື່ອງການໃຊ້ຊີວິດແບບຊົ່ວຊ້ານຳໄປເຖິງການພິພາກສາລົງໂທດ. ເຊັ່ນດຽວກັນຄຣິສຕຽນເຮົາມັກຈະມານັ່ງຕິຜູ້ນັ້ນຜູ້ນີ້ຢູ່ໃນໂບດແລະນອກໂບດວ່າຜູ້ນັ້ນເປັນແນວນັ້ນຜູ້ນີ້ເປັນແນວນີ້ ສຳລັບຕົນເອງແລ້ວເຮັດຫຍັງບໍ່ເປັນ ໄດ້ແຕ່ຕິຢ່າງດຽວ. ເຖິງຢ່າງໃດກໍດີຢ່າລືມຄຳເວົ້າຂອງ ພຣະເຢຊູ "ເປັນຫຍັງທ່ານຈຶ່ງຫລຽວເຫັນຂີ້ເຫຍື້ອທີ່ຢູ່ໃນຕາພີ່ນ້ອງຂອງທ່ານ ແຕ່ໄມ້ທັງທ່ອນທີ່ຢູ່ໃນຕາຂອງຕົນທ່ານບໍ່ຮູ້ສຶກ" (ມັດທາຍ 7:3 ). ເຈົ້າແມ່ນໃຜຈຶ່ງກ່າວໂທດໃສ່ບ່າວຂອງຜູ້ອື່ນ ບ່າວນັ້ນຈະຕັ້ງໝັ້ນຄົງຫລືລົ້ມລົງກໍສຸດແລ້ວແຕ່ນາຍຂອງຕົນ ( ໂຣມ 14:4). ຢ່າກ່າວໂທດໃສ່ເຂົາແລະພຣະເຈົ້າຈະບໍ່ກ່າວໂທດໃສ່ທ່ານ ຢ່າທຳໂທດເຂົາ ແລະພຣະເຈົ້າຈະບໍ່ຊົງທຳໂທດທ່ານ ຈົ່ງຍົກໂທດໃຫ້ເຂົາແລະພຣະອົງຈະຊົງຍົກໂທດໃຫ້ທ່ານ (ລູກາ 6:36 ).

ເຮົາທັງຫລາຍມັກຈະເວົ້າວ່າຄົນນັ້ນຫລືຄົນນີ້ບໍ່ດີ ແຕ່ເຮົາເອງຍັງເຮັດເຊັ່ນດຽວກັບຄົນນັ້ນໂປໂລໄດ້ບອກວ່າເຮົາເອງກໍໜີບໍ່ພົ້ນການພິພາກສາດອກຫາກເຮົາຍັງເຮັດຢ່າງດຽວກັນກັບຄົນບໍ່ດີນັ້ນຢູ່. ການບໍ່ພໍໃຈທາງສ່ວນຕົວ

ຈະນຳພາໃຫ້ເຮົາຕໍ່ສູ້ກັບຜູ້ນັ້ນ ເມື່ອລາວບໍ່ເຮັດຕາມທີ່ເຮົາຫວັງໃຈໄວ້ຈະໃຫ້ລາວເຮັດຕາມຣະບຽບການຂອງເຮົາ. ຄົນທີ່ເຊື່ອໄວ້ວາງໃຈໃນພຣະເຈົ້າຈະບໍ່ຕື່ນຂຶ້ນມາແຕ່ລະມື້ແລ້ວກໍຫາທາງເວົ້າຫລືຄິດ ຫມິ່ນປມາດ ຄົນອື່ນ (໒:4 )

ພຣະເຢຊູໄດ້ເທສນາທີ່ຈ້າຍພູ " ຜູ້ໃດຍາກຈົນຝ່າຍຈິດວິນຍານກໍເປັນສຸກ ເພາະວ່າແຜ່ນດິນສວັນເປັນຂອງຜູ້ນັ້ນ" (ມັດທາຍ 5:3) ມີຄວາມໝາຍວ່າ ຜູ້ທີ່ຖ່ອມວິນຍານຈິດຈະເຫັນຄວາມຜິດຂອງຕົນເອງ ແລະຍອມຮັບວ່າຕົນເອງເປັນຄົນຜິດບາບນັ້ນເອງຈຶ່ງຈະໄດ້ແຜ່ນດິນສວັນ. ຕາມທັມດາແລ້ວຄົນສ່ວນຫລາຍມັກຈະເວົ້າວ່າຂ້ອຍບໍ່ເປັນຄົນບາບເພາະຂ້ອຍເກີດມາບໍ່ເຄີຍເຮັດບາບແລະຂ້ອຍກໍມີແຕ່ສ້າງຄວາມດີ " ຄົນໃດກໍຕາມທີ່ຄິດແລະເວົ້າເຊັ່ນນີ້ຄົງບໍ່ມີວັນຈະໄດ້ແຜ່ນດິນສວັນຂອງພຣະເຈົ້າ. ຄວາມຍິ່ງຍະໂສໃນໃຈເປັນໃຈທີ່ແຂງກະດ້າງແລະບໍ່ຍອມກັບຕົວໄດ້ສະສົມພຣະພິໂຣດຂອງພຣະເຈົ້າໄວ້ສຳລັບຕົນໃນວັນຂ້າງໜ້າ ( ໒:5 ).

## ຊົງພິພາກສາຄົນບໍ່ສັດຊື່ (໒:5-13 )

ສອນຍາກແລະບໍ່ຍອມກັບໃຈ (໒: 5) ພວກເຂົາພາກັນຕິດຕາມປະຕິບັດຕາມຫລັກວັທະນະທັມແລະມັກຈະປົກຊ້ອນຄວາມຜິດໄວ້ຂ້າງໃນດັ່ງນັ້ນຈິດວິນຍານຂອງເຂົາຈຶ່ງເຕັມໄປດ້ວຍສົງຄາມ. ເມື່ອເປັນເຊັ່ນນັ້ນເຂົາຈຶ່ງ ວ່ອງໄວໃນການເຫັນແຕ່ຄວາມຜິດຂອງຄົນອື່ນແຕ່ຄວາມຜິດທີ່ຊຸກຊ້ອນໃນຕົນເອງບໍ່ສາມາດເຫັນໄດ້ເລີຍ. ຄົນສອນຍາກມັກຈະຊ້ອນຄວາມຜິດໄວ້ທາງໃນຂອງຕົນເອງໂດຍບໍ່ຮູ້ສຶກຕົວ ຊຶ່ງຜົນປາກົດຄືໃນວັນພິພາກສາລົງໂທດຢ່າງຍຸດຕິທັມໃຫ້ປາກົດແຈ້ງ, ໂປໂລໄດກ່າວໄວ້ລ່ວງໜ້າໂຣມັນກຳລັງສະສົມພຣະພິໂຣດໄວ້ໃຫ້ຕົວເອງໃນວັນພິພາສາລົງໂທດ (໒: 5 ).

ພຣະເຈົ້າບໍ່ຊົງພິພາສາລົງໂທດຄວາມບາບຂອງພວກເຮົາປັດຈຸບັນທັນດ່ວນ, ການພິພາກສາເປັນເວລາຂອງພຣະອົງ ພວກເຮົາບໍ່ຮູ້ວ່າຈະເກີດຂື້ນເມື່ອໃດ ແຕ່ສິ່ງເຮົາຮູ້ແນ່ນອນຄື ບໍ່ມີໃຜຈັກຄົນທົ່ວໃຕ້ຟ້າຈະໜີພົ້ນຈາກການພິພາກສາຂອງພຣະອົງໄດ້. ດ້ວຍເຫດນີ້ຄົນທັງຫລາຍຈຶ່ງບໍ່ຢ້ານໃນການກະທຳບາບເພາະໂທດຂອງຄວາມບາບນັ້ນບໍ່ເຫັນກັບຕາ. ໂປໂລຈຶ່ງກ່າວວ່າ "ສຳລັບຄົນທີ່ມີຄວາມພຽນພຍາຍາມເຮັດການດີ, ສແວງຫາສະງ່າຣາສີ, ຍົດສັກ, ແລະຄວາມບໍ່ຮູ້ຕາຍນັ້ນພຣະອົງຈະຊົງປະທານຊີວິດອັນຕລອດໄປເປັນນິດແກ່ເຂົາ" ( ໒:7) ການພິພາກສາລົງໂທດຈະບໍ່ເລືອກໜ້າຜູ້ໃດບໍ່ວ່າຈະເປັນຄົນຢິວຫລືຄົນຕ່າງຊາດ ແຕ່ສງ່າຣາສີແລະຍົດສັກກັບຄວາມສຸກສຳຣານຈະເກີດມີແກ່ທຸກຄົນທີ່ເຮັດການດີ (໒:10) ຫລາຍຄົນມານັ່ງໃນໂບດໃນວັນອາທິດທັງເຊົ້າແລະແລງເມື່ອເບິ່ງທາງນອກແລ້ວຄືຈະເປັນຄົນທີ່ພຣະເຈົ້າຊອບພຣະທັຍແທ້ໆ ຄວາມຈິງບໍ່ ເປັນແນວນັ້ນດອກ, ແຕ່ແມ່ນຜູ້ຂັບຕາມສິ່ງທີ່ໄດ້ຍິນຈະເປັນຜູ້ຊອບທັມຕໍ່ພຣະພັກພຣະເຈົ້າ (໒:13).

ຂ້າພະເຈົ້າເຄີຍໄດ້ຍິນພໍ່ແມ່ຂອງເດັກມັກຈົ່ມເລື້ອຍໆວ່າລູກບໍ່ຟັງຄວາມ ບອກບໍ່ລອນສອນບໍ່ໄດ້ວ່າຊັ້ນ. ຫລັງຈາກຂ້າພະເຈົ້າມາສັງເກດເບິ່ງແລ້ວບໍ່ແມ່ນແນວນັ້ນດອກ ລູກຫັ້ນຟັງຄວາມຢູ່ເມື່ອພໍ່ແມ່ເວົ້ານຳ ແຕ່ລູກບໍ່ໄດ້ປະຕິບັດຕາມຄຳບອກຊື່ໆ. ຄຣິສຕຽນເຮົາກໍເປັນແນວດຽວກັນນັ້ນແລ້ວມາໂບດທຸກໆວັນອາທິດ ທັງອ່ານ,ທັງຮຽນພຣະທັມຄັມພີ ແລະກໍຕັ້ງອົກຕັ້ງໃຈຟັງທັມເທສນາແຕ່ບໍ່ໄດ້ເຮັດຕາມສິ່ງທີ່ໄດ້ຍິນນັ້ນ ສລຸບແລ້ວຜູ້ໃຫຍ່ເຮົາກໍເປັນຄືລູກເຮົານັ້ນແລ້ວ ເຮົາບໍ່ຟັງຄວາມພຣະເຈົ້າລູກເຮົາຈຶ່ງບໍ່ຟັງຄວາມເຮົາ. ໂບຮານເວົ້າວ່າ ເຮືອນມັນຮົ່ວມາແຕ່ແປວ່າຊັ້ນ.

## ພຣະເຈົ້າສັຣເສີນຄົນສັດຊື່ (໒:28-29 )

ພຣະເຈົ້າບໍ່ໄດ້ວັດແທກຄວາມເຊື່ອຂອງພວກເຮົາທາງພາຍນອກ. ການຖິ້ມໃຈເກົ່າເອົາໃຈໃໝ່ບໍ່ແມ່ນພາກສ່ວນຂອງຮ່າງກາຍເທົ່ານັ້ນ ແຕ່ແມ່ນທາງໃນຈິດໃຈໄດ້ປ່ຽນແປງຮັບເຊື່ອໄວ້ວາງໃຈໃນພຣະເຈົ້າແລ້ວທາງນອກກໍຈະສະແດງອອກເຖິງການປະຕິບັດດ້ວຍ. ຈະເປັນຄົນຢິວຫລືຄົນຕ່າງຊາດກໍດີຜູ້ທີ່ເປັນໄພ່ພົນຂອງພຣະອົງນັ້ນຈະຕ້ອງມີຄວາມເຊື່ອພ້ອມກັບການປະຕິບັດຈຶ່ງຈະສົມບູນໃນພຣະອົງ. "ຄືການຮັບທາງຈິດໃຈຊຶ່ງເປັນໄປຕາມພຣະວິນຍານບໍ່ແມ່ນເປັນໄປຕາມບົດບັນຍັດ ຄົນຢ່າງນັ້ນພຣະເຈົ້າຊົງສັຣເສີນ ບໍ່ແມ່ນ ມະນຸດສັຣເສີນ (໒:29)

ຄົນເຮົາມັກຍ້ອງເປັນຂອງທັມດາ ບາງຄົນອາຈເວົ້າວ່າ ຂ້າພະເຈົ້າບໍ່ເປັນຄົນມັກຍ້ອງດອກແຕ່ວ່າຕິບໍ່ໄດ້. ໝາຍ

ຄວາມວ່າແນວໃດ? ຄຣິສຕຽນເຮົາຫລາຍຄົນກໍມີຄວາມພາກພຽນອົດທົນຕໍ່ວຽກງານຂອງພຣະເຈົ້າຢ່າງສົມຄວນ ແຕ່ພໍເມື່ອມີຄົນຕິຄໍາດຽວກໍເຊົາເຮັດຫລືຄຽດໂລດ. ເຖິງຢ່າງໃດກໍດີພີ່ນ້ອງຍ້ອງກໍດີຢູ່ເພື່ອເປັນກໍາລັງໃຈ ແຕ່ເຮົາກໍຄວນຣະວັງຢ່າສູ່ຕາຍໃຈເມື່ອຖືກຍ້ອງ. ສໍາລັບຄົນທີ່ເຊື່ອແລະປະຕິບັດຕາມຄໍາສັ່ງຂອງພຣະເຈົ້ານັ້ນບໍ່ແມ່ນແຕ່ ມະນຸດຍ້ອງ ພຣະເຈົ້າກໍຍັງຍ້ອງຍໍສັຣເສີນດ້ວຍ (2:9).

<u>ຍ້ອງໃຫ້ຫລົງຜິດ.</u> ໃນປື້ມໂຮງຮຽນປະຖົມສຶກສາໃນສມັຍກ່ອນໄດ້ຂຽນວ່າ ຍັງມີໄກ່ຜູ້ໂຕນຶ່ງຂັນຢູ່ເລື້ອຍໃນບໍຣິເວນປ່າແຫ່ງນຶ່ງ, ແລະຍັງມີເຫງັນໂຕໜຶ່ງຄິດຢາກກິນໄກ່ຜູ້ໂຕນັ້ນ ແຕ່ໄກ່ຜູ້ໂຕນັ້ນໄດ້ຂັນຢູ່ເທິງງ່າໄມ້ສູງ. ໃນຂະນະທີ່ໄກ່ຜູ້ກໍາລັງຂັນເພື່ອອວດສຽງມ່ວນຂອງຕົນຢູ່ນັ້ນ ເຫງັນຜູ້ກໍເອີຍປາກຂຶ້ນວ່າ ເຈົ້າຂັນມ່ວນແທ້, ເມື່ອໄກ່ຜູ້ໂຕນັ້ນໄດ້ຍິນຄໍາຍ້ອງກໍດີໃຈ ແລ້ວກໍຂັນອີກຕໍ່ໄປ ໂຕເຫງັນກໍຫຍັບເຂົ້າມາໃກ້ແລ້ວກໍເວົ້າຕໍ່ໄປວ່າ ຂ້ອຍຮູ້ຈັກພໍ່ຂອງເຈົ້າດີຄືເວລາເພິ່ນຍັງໜຸ່ມຄືເຈົ້າເພິ່ນແຮງຂັນມ່ວນກວ່ານີ້ອີກ. ເມື່ອໄກ່ຜູ້ໄດ້ຍິນວ່າພໍ່ຂອງລາວແຮງຂັນມ່ວນກວ່ານີ້ລາວກໍແຮງສົນໃຈເພາະບໍ່ຢາກໃຫ້ຜູ້ອື່ນລື່ນຕົວເອງຈຶ່ງຖາມເຫງັນວ່າ ເພິ່ນເຮັດແນວໃດຈຶ່ງຂັນມ່ວນແທ້ ໂຕເຫງັນກໍຕອບໂຕໄກ່ວ່າເພິ່ນຫລັບຕາທັງສອງຂ້າງຂັນຈຶ່ງມ່ວນອອນຊອນດີ ວ່າແລ້ວໂຕໄກ່ຜູ້ໂອກມັກຍ້ອງກໍຫລັບຕາທັງສອງຂ້າງຂັນອອກສຽງເຕັມແຮງແລະໃນຂະນະທີ່ກໍາລັງຫລັບຕາສອງຂ້າງນັ້ນເອງໂຕເຫງັນກໍໂດດຄາບຄໍໄກ່ແລ້ວກໍຈົກກິນເປັນອາຫານ.

## <u>ທຸກຄົນຈະຕ້ອງຮັບຜິດຊອບຕົວໃຜຕົວລາວ (3:19-20)</u>

ໂປໂລໄດ້ພະຍາຍາມຊີ້ແຈງໃຫ້ເຫັນວ່າຄົນທີ່ປະຕິບັດພຣະບັນຍັດນັ້ນກໍດີຢູ່ ແຕ່ເຮົາທັງຫລາຍຮູ້ຢູ່ວ່າພຣະບັນຍັດທຸກຂໍ້ທີ່ໄດ້ກ່າວນັ້ນ ກໍກ່າວແກ່ຄົນເຫລົ່ານັ້ນທີ່ຢູ່ໃຕ້ພຣະບັນຍັດອັດປາກທຸກຄົນ ແລະເພື່ອໃຫ້ມະນຸດທຸກຄົນໃນໂລກຢູ່ໃຕ້ການພິພາກສາຂອງພຣະເຈົ້າ ເພາະວ່າພຣະບັນຍັດໄດ້ເຮັດໃຫ້ສັງເກດຮູ້ຈັກຄວາມຜິດບາບ (3:19). ທຸກຄົນຈະຄຸເຂົ່າລົງຂາບໄຫວ້ເຮົາ ແລະທຸກສິ່ງຈະສັຣເສີນພຣະເຈົ້າ ດັ່ງນັ້ນເຮົາທຸກຄົນຈະຕ້ອງຂາບທູນເຣື່ອງຮາວຂອງຕົນເອງຕໍ່ພຣະເຈົ້າ ( ໂຣມ 14: 11-12).

### <u>ຄໍາຖາມ</u>

- ທ່ານເປັນຜູ້ເຊື່ອພຣະເຈົ້າຄືກັບນັບຖືສາສນາບໍ່? ພຣະບັນຍັດຂອງພຣະເຈົ້າມີໄວ້ເພື່ອຫຍັງ?
- ທ່ານໄດ້ເຮັດບາບອັນໃດພໍທີ່ຈະແກ້ຕົວມີຢູ່ບໍ່? ອະທິບາຍຄໍາແກ້ຕົວໃນຄວາມບາບຂອງທ່ານເບິ່ງ.
- ເວົ້າເຖິງເຣື່ອງທີ່ພຣະເຈົ້າຊົງຕັກເຕືອນທ່ານໃນຂະນະທີ່ເຮັດບາບຄັ້ງທີ່ຜ່ານມາເບິ່ງ.
- ທ່ານໄດ້ເປັນຄືເດັກນ້ອຍທີ່ສອນຍາກບໍ່? ທ່ານໄດ້ປະຕິບັດຕາມພຣະທັມຂອງພຣະອົງຫລາຍປານໃດ?
- ທ່ານຄວນຈະໃຊ້ເວລາກັບຄຣິສຕຽນຜູ້ໃດເພື່ອຮຽນຮູ້ແລ້ວສາຣະພາບບາບຮ່ວມກັນ? ມື້ໃດຈະເຮັດ?
- ໃນຄວາມນຶກຄິດຂອງທ່ານໃນເວລານີ້ທ່ານຄິດວ່າພຣະເຈົ້າຈະຍ້ອງຍໍສັຣເສີນທ່ານບໍ່?

# **ບັນຫາທີ່ແກ້ບໍ່ຕົກ**

## ບົດຮຽນທີ 4

## ພຣະເຈົ້າເປັນທາງນັ້ນ

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ໂຣມ 3:21-4:12

<u>ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:</u> ໂຣມ 3:21-4:12

<u>ຈຸດສໍາຄັນຂອງບົດຮຽນນີ້:</u> ບໍ່ມີໃຜສາມາດໜີພົ້ນຈາກການພິພາກສາລົງໂທດຍ້ອນເຮັດບາບ, ແຕ່ພຣະເຈົ້າໄດ້ບອກວ່ານອກຈາກເຊື່ອໄວ້ວາງໃນໃນພຣະເຢຊູແລ້ວຈະໄດ້ພົ້ນ

<u>ຄໍາຖາມເພື່ອການສໍາຣວດ:</u> ມີຄວາມເຊື່ອເທົ່ານັ້ນກໍແລ້ວບໍ່ ຫລືຍັງມີຫຍັງຈະຕ້ອງເຮັດອີກ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອອະທິບາຍໃຫ້ຮູ້ວ່ານອກຈາກເຊື່ອໃນພຣະເຢຊູແລ້ວຍັງມີສິ່ງໃດຈະຕ້ອງປະຕິບັດອີກແດ່?

<u>ເຣື່ອງທີ່ກໍາລັງເນັ້ນຫນັກໃນເທັກຊັດ:</u>

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ.
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະ ທົ່ວໂລກ
- ຊ່ວຍອຸປຖັມໂບດທີ່ມີຢູ່ແລ້ວໃຫ້ເຂັ້ມແຂງແລະເລີ້ມຕັ້ງໂບດໃຫມ່ຕໍ່

<u>ຄໍານໍາ</u>

ເຮົາທັງຫລາຍເຂົ້າມາຫາພຣະເຈົ້າໂດຍການເຊີນຂອງພຣະອົງຄືໃນຂະນະເຮົາທັງຫລາຍຍັງເປັນຄົນຜິດບາບຢູ່ ແລະແລ້ວພຣະອົງໄດ້ຊໍາຣະລ້າງເຮົາດ້ວຍພຣະໂລຫິດຂອງພຣະບຸດຂອງພຣະອົງເຮົາທັງຫລາຍຈຶ່ງກາຍເປັນຜູ້ບໍຣິສຸດໃນສາຍພຣະເນດຂອງພຣະອົງ ແລະເຮົາທັງຫລາຍຈຶ່ງກາຍເປັນບຸດຂອງພຣະອົງ.

ໃນຂະນະທີ່ເຮົາເປັນຄົນບາບຢູ່ນັ້ນຈໍາເປັນເຮົາທຸກຄົນຈະຕ້ອງຕາຍຕົກນາຣົກເພາະຄວາມຜິດບາບຂອງເຮົາບໍ່ວ່າເຮົາຈະເຮັດແນວໃດກໍຕາມກໍບໍ່ສາມາດພົ້ນໄດ້. ໂປໂລໄດ້ນໍາຂ່າວດີໄປຍັງກຸງໂຣມຄືຂ່າວທາງແຫ່ງຄວາມພົ້ນຈາກບຶງໄຟ ຄືທຸກຄົນຈໍາຕ້ອງເຊື່ອໄວ້ວາງໃຈໃນພຣະເຢຊູແລ້ວພຣະເຈົ້າຈຶ່ງຈະຍົກໂທດຄວາມຜິດບາບຂອງເຮົາໄດ້.

## ພຣະ<u>ເຈົ້າຊົງຈັດຫົນທາງໃຫ້ (3:21-26)</u>

ຄໍາວ່າຊອບທັມນີ້ເປັນສິ່ງທີ່ຄົນດີພາກັນຊອກສແວງຫາຢູ່ທຸກວັນເພື່ອຈະໄດ້ຊື່ວ່າເປັນຄົນຊອບທັມ. ໃນພຣະທັມໂຣມ 3:10-11ໄດ້ບອກຢ່າງແຈ່ມແຈ້ງວ່າ "ບໍ່ມີຄົນຊອບທັມຈັກຄົນນຶ່ງຄົນດຽວ ບໍ່ມີຄົນທີ່ເຂົ້າໃຈ ບໍ່ມີຄົນສແວງຫາພຣະເຈົ້າ" ນັ້ນກໍສະແດງວ່າການຖືສິນກິນທານຕລອດເຖິງການປະຕິບັດຕາມບັດຍັດຄໍາສອນຕ່າງໆນັ້ນບໍ່ສາມາດເຖິງມາຕຖານຄວາມຊອບທັມຂອງພຣະເຈົ້າໄດ້. ດັ່ງນັ້ນການເຊື່ອຖືຕ່າງໆທີ່ເຮົາໄດ້ປະຕິບັດກັນມາເພື່ອຈະເປັນຄົນຊອບທັມນັ້ນກໍເຫັນວ່າເປັນໄປບໍ່ໄດ້ເສັຽແລ້ວ. ຂ່າວດີກໍມີຢູ່ວ່າ "ແຕ່ບັດນີ້ຄວາມຊອບທັມຊຶ່ງມາຈາກພຣະເຈົ້າ ໄດ້ປາກົດນອກຈາກພຣະບັດຍັດ ຄືຄວາມຊອບທັມທີ່ມາຈາກພຣະເຈົ້າຊຶ່ງຊົງປະທານແກ່ຜູ້ທີ່ເຊື່ອທຸກຄົນ" (3:21-22).

ເຮົາທຸກຄົນມີບັນຫາພາຍໃນຄືເຮົາທັງຫລາຍເປັນຄົນຜິດບາບ (3:23) ຄວາມບາບທີ່ອາສັຍໃນຕົວເຮົາເຮັດໃຫ້ເຮົາຂາດຈາກພຣະຣັສມີຂອງພຣະເຈົ້າ. ພຣະເຈົ້າຊົງກຽດຊັງຄວາມບາບແລະພຣະອົງກໍຮັກຄົນບາບພຣະອົງຊົງບໍຣິສຸດແລະເຮົາທັງຫລາຍມີຄວາມບາບ ຈຶ່ງບໍ່ສາມາດສຳພັນແລະໃກ້ຊິດພຣະອົງໄດ້. ດັ່ງນັ້ນມະນຸດເຮົາເຖິງແມ່ນຈະຊອກສແວງຫາຄວາມຊອບທັມປານໃດກໍຕາມເຂົາກໍຈະບໍ່ພົບ. ໂປໂລພະຍາຍາມຊີ້ແຈງໃຫ້ເຮົາເຫັນເຖິງການຊອບທັມ ໂດຍການກະທຳນັ້ນຈະໄປບໍ່ເຖິງພຣະເຈົ້າ.

ພຣະເຢຊູຊົງຕັດວ່າ "ເຮົານີ້ແຫລະ, ເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກຈະມາທາງເຮົາ" (ໂຢຮັນ 14:6) ພຣະເຈົ້າຊົງຮູ້ດີວ່າມະນຸດເຮົາບໍ່ສາມາດຈະຊອກຫາຄວາມຊອບທັມຂອງພຣະເຈົ້າໄດ້, ພຣະອົງຈຶ່ງຊົງ "ປະທານພຣະບຸດອົງດຽວຂອງພຣະອົງລົງມາ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ຈະມີຊີວິດອັນຕລອດໄປເປັນນິດ" (ໂຢຮັນ 3:16) ນີ້ແມ່ນຫົນທາງດຽວທີ່ຈະຊ່ອຍມະນຸດໃຫ້ລອດພົ້ນຈາກບຶງໄຟແລະກາຍເປັນຜູ້ຊອບທັມໃນສາຍພະເນດຂອງພຣະເຈົ້າ, ແຕ່ຫລາຍຄົນບໍ່ພົບທາງນີ້ຫລືຮູ້ທາງແລ້ວກໍຍັງໄປບໍ່ໄດ້ຢູ່ນັ້ນເອງ.

## <u>ບໍ່ມີທາງອື່ນອີກ (3:27-31)</u>

ເພື່ອນຂອງຂ້າພະເຈົ້າເຊີນຂ້າພະເຈົ້າໄປຮ່ວມເບິ່ງກິລາ ຮອກກີທີ່ເມືອງດາລັສ ເທັກຊັສ. ທີມແຣກແຫ່ຂະບວນກັນອອກມາ ພວກຜູ້ຄົນກໍພາກັນຮ້ອງສນັ່ນຫວັ່ນໄຫວສນັບສນູນວ່າເປັນທີມເກ່ງ ຕໍ່ມາທີມຕໍ່ສູ້ກໍອອກມາຜູ້ຄົນກໍຮ້ອງໂຮທ້າທາຍກັນຢ່າງອຶກກະທຶກ. ຂ້າພະເຈົ້າຄິດວ່າມີແຕ່ບ່ອນກິລາພາກັນຮ້ອງໂຮຍົກສຽງທ້າທາຍກັນແຕ່ບ່ອນດຽວ ແຕ່ແລ້ວໂປໂລກໍໄດ້ບອກເຖິງຄົນຢິວແລະຄົນຢູ່ໃນກຸງໂຣມກໍຍິ່ງພາກັນໂຮ່ຮ້ອງດ້ວຍຄວາມພູມໃຈປະກາດວ່າມີແຕ່ຢິວເທົ່ານັ້ນເປັນຜູ້ຊອບທັມໃນສາຍພຣະເນດຂອງພຣະເຈົ້ານອກນັ້ນເປັນຄົນບາບກັນທັງໝົດ ແຕ່ຄວາມຈິງແລ້ວຜູ້ເຊື່ອໃນພຣະເຢຊູ ເປັນຜູ້ຊອບທັມດ້ວຍ (3:27)

ໃນສມັຍຣາຊການຂອງກະສັດເນບູກາເນັດຊາປົກຄອງບາບີໂລນໄດ້ເອົາກອງທັບບຸກໂຈມຕີນະຄອນເຢຣູຊາເລັມ ພຣະເຈົ້າໄດ້ຊົງໃຫ້ເນບູຄາເນັດຊາຊະນະສົງຄາມຄັ້ງນັ້ນ. ເນບູຄາເນັດຊາຈຶ່ງຢຶດເອົາສິ່ງຂອງບາງຢ່າງຈາກພຣະວິຫານທີ່ກຸງເຢຣູຊາເລັມແລະກຳຈັບເອົາຊະເລີຍໄປຍັງປະເທດຂອງຕົນ. ທີ່ບາບີໂລນກະສັດເນບູຄາເນັດຊາໄດ້ເລືອກເອົາສເລີຍຜູ້ເປັນລູກເຈົ້ານາຍທີ່ມີຮູບໂສມສວຍງາມແລະສລາດໄປເປັນຄົນໃຊ້. ແຕ່ກ່ອນຈະເອົາເປັນຜູ້ຮັບໃຊ້ນັ້ນຊະເລີຍພວກນີ້ຈຳຕ້ອງຖືກຊຸບລ້ຽງເປັນຢ່າງດີໃນເວລາສາມປີ ໃນນັ້ນມີດານີເອນຜູ້ນຶ່ງຈະຕ້ອງເປັນຜູ້ຮັບໃຊ້ພຣະຣາຊາ. ແຕ່ດານີເອນບໍ່ຍອມກິນອາຫານດີໆທີ່ພຣະຣາຊາສັ່ງໃຫ້ກິນ ຈຶ່ງກິນແຕ່ຜັກກັບນໍ້າລ້າງ. ພຣະເຈົ້າໄດ້ຊົງປະທານໃຫ້ພວກຄົນໜຸ່ມພວກນີ້ມີຄວາມຮູ້ ມີຄວາມຊຳນິຊຳນານເປັນຢ່າງດີ ສ່ວນດານີເອນຊຳນານການແປນິມິດແລະແກ້ຄວາມຝັນ. ຕໍ່ມາພຣະຣາຊາກໍຝັນແປກໆທົ່ວແຜ່ນດິນກໍບໍ່ມີໃຜແກ້ໄດ້ມີແຕ່ດານີເອນຄົນດຽວສາມາດແກ້ຄວາມຝັນນັ້ນໄດ້. ພຣະຣາຊາ ຈຶ່ງມອບຕຳແໜ່ງເຈົ້າແຂວງໃຫ້ດານີເອນ ແຕ່ດານີເອນໄດ້ຂໍໃຫ້ ຊັດຣາເກ, ເມຊາກ ແລະ ອາເບດເນໂກ ເປັນຜູ້ປົກຄອງແຂວງແທນ, ສ່ວນດານີເອນກໍຮັບໃຊ້ຢູ່ພຣະຣາຊວັງຕໍ່ໄປ.

ຕໍ່ມາກະສັດເນບູກາດເນັດຊາສ້າງຮູບງົວຄຳແລະສັ່ງໃຫ້ທຸກຄົນຂາບໄຫ້ວຮູບນັ້ນ ຜູ້ທີ່ບໍ່ຂາບໄວ້ຈະຕ້ອງໂຍນເຂົ້າເຕົາໄຟຮ້ອນທັນທີ. ເນື່ອງຈາກຄວາມເຊື່ອໝັ້ນຄົງແລະຈົງຮັກພັກດີຕໍ່ອົງພຣະຜູ້ເປັນເຈົ້າ ຊັດຣາເກ, ເມຊາກ ແລະອາເບດເນໂກ ຈຶ່ງບໍ່ຍອມຂາບໄຫວ້ພຣະອື່ນນອກຈາກພຣະເຈົ້າອົງທ່ຽງແທ້. ເມື່ອເປັນເຊັ່ນນັ້ນເຈົ້າຊີວິດເນບູກາດເນັດຊາຈຶ່ງສັ່ງໃຫ້ເອົາຄົນທັງສາມຖິ້ມເຂົ້າໃນເຕົາໄຟຮ້ອນກວ່າເກົ່າເຖິງເຈັດເທົ່າ. ເນບູກາດເນັດຊາສະດຸດຕົກໃຈຈຶ່ງຖາມທີ່ປຶກສາວ່າ "ພວກເຮົາໄດ້ມັດສາມຄົນນັ້ນໂຍນເຂົ້າໄປໃນເຕົາໄຟບໍ່ແມ່ນບໍ່" "ແລ້ວເປັນຫຍັງເຮົາຈຶ່ງເຫັນຊາຍສີ່ຄົນກຳລັງຍ່າງຢູ່ໃນເຕົາໄຟພວກເຂົາບໍ່ໄດ້ມັດແລະບໍ່ເປັນອັນຕະລາຍຫຍັງເລີຍ ຄົນທີ່ສີ່ຊໍ້າພັດເບິ່ງຄ້າຍຄືກັນກັບເທວະດາ" (ດານີເອນ 3: 24-25) ດັ່ງນັ້ນກະສັດເນບູກາດເນັດຊາຈຶ່ງສັ່ງໃຫ້ເອົາທັງສາມຄົນອອກມາແລະສັ່ງວ່າ "ຖ້າຄົນໃດ ເຊື້ອຊາດໃດ ຫລືພາສາເວົ້າໃດເວົ້າໝິ່ນປະໝາດພຣະເຈົ້າຂອງ ຊັດຣາເກ ຂອງ ເມຊາກ ແລະອາເບດເນໂກ ເຂົາຜູ້ນັ້ນຈະຖືກຂ້າຢ່າງທາຣຸນແລະທຳລາຍເຮືອນຊານຖິ້ມ ເພາະວ່າບໍ່ມີພຣະອື່ນໃດທີ່ສາມາດຊ່ອຍໄດ້ເໝືອນ

ພຣະເຈົ້ານີ້" (ດານີເອນ 3:29 ).

## ຂອງພຣະຣາຊທານ (4:1-12)

ອັບຣາຮາມເປັນພະບິດາແຫ່ງຄວາມເຊື່ອ. ຄົນຢິວ, ມຸສລິມ ແລະຄຣິດຽນໄດ້ພາກັນສຶກສາຊີວິດຂອງອັບຣາຮາມຜູ້ທີ່ພຣະເຈົ້າຊົງເລືອກໃຫ້ເປັນຜູ້ມີຄວາມເຊື່ອເລີດ. ຢິວແລະມຸສລິມເຂົ້າໃຈວ່າອັບຣາຮາມກາຍເປັນຄົນຊອບທັມຍ້ອນການປະຕິບັດ (ເບິ່ງລູກາ 3:8 ). ອັບຣາຮາມເຊື່ອໃນພຣະເຈົ້າ ສິ່ງທີ່ອັບຣາຮາມເຮັດດີຫລາຍຢ່າງໃນຊີວິດຂອງທ່ານຜ່ານມາກໍນັບວ່າເປັນການດີແທ້ ແຕ່ທັງໝົດນັ້ນບໍ່ໄດ້ເຮັດໃຫ້ອັບຣາຮາມກາຍເປັນຄົນຊອບທັມ (4:4) ຫາກການປະຕິບັດເຮັດໃຫ້ເຮົາທັງຫລາຍກາຍເປັນຄົນຊອບທັມນັ້ນພວກເຮົາຄົງບໍ່ມີຫວັງເປັນຄົນຊອບທັມໄດ້ດອກ ເພາະການປະຕິບັດຂອງພວກເຮົາມີນ້ອຍເຫລືອເກີນ ແຕ່ຄວາມເຊື່ອເຮົາມີຫລາຍຢູ່, ໃນໃຈພ້ອມແລ້ວແຕ່ກາຍຍັງອ່ອນແອຢູ່.

ໂປໂລໄດ້ຍົກຕົວຢ່າງຂອງດາວິດມາເວົ້າສູ່ຟັງ (4:6-8 ) ດາວິດໄດ້ຄຶດຊຸກຊ້ອນຄວາມຜິດຂອງຕົນໄວ້ແຕ່ລະມື້ລະວັນ ຈຶ່ງເຮັດໃຫ້ທ່ານກິນບໍ່ເຂົ້າຖ່າຍບໍ່ອອກເພື່ອຫາທາງແກ້ໄຂ (ເພງສັຣເສີນ 51) ແຕ່ກໍບໍ່ມີຫຍັງຊ່ອຍໄດ້. ພຣະເຈົ້າໄດ້ສົ່ງນາທານຜູ້ປະກາດພຣະທັມໄປຊ່ວຍທ່ານ ແລະຈາກນັ້ນທ່ານກໍສາລະພາບຄວາມຜິດບາບຕໍ່ພຣະເຈົ້າ ແລະພຣະເຈົ້າກໍໃຫ້ອະພັຍແກ່ດາວິດ. ຊຶ່ງໄດ້ຊີ້ໃຫ້ເຮົາເຫັນແລ້ວວ່າເຖິງແມ່ນດາວິດເປັນເຈົ້າຊີວິດທີ່ມີອຳນາດຫລືປະຕິບັດຢ່າງໃດເພື່ອຈະເປັນຄົນສົມທັມກໍບໍ່ໄດ້ແທ້ ນອກຈາກເຊື່ອໄວ້ວາງໃຈໃນ ພຣະເຈົ້າ ຍອມຮັບສາຣະພາບວ່າໄດ້ຜິດແລ້ວແລະເມື່ອໄດ້ຮັບການຊົງອະພັຍແລ້ວຈຶ່ງກາຍເປັນຄົນຊອບທັມໄດ້.

ຄວາມຊອບທັມເປັນຂອງພຣະຣາຊທານຈາກພຣະເຈົ້າສຳລັບຜູ່ທີ່ເຊື່ອໄວ້ວາງໃຈໃນພຣະເຈົ້າ. ໃນພັນທະສັນຍາໃຫມ່ໄດ້ອະທິບາຍຄວາມຊອບທັມແມ່ນຜູ້ເຊື່ອປະຕິບັດຕາມນ້ຳພຣະທັຍພຣະເຈົ້າ ຄືເຊື່ອໃນພຣະບຸດຂອງພຣະອົງພຣະເຢຊູຄຣິດເພາະ "ໃນພຣະກາຍຂອງພຣະອົງເອງ ພຣະອົງໄດ້ຮັບແບກຄວາມບາບຂອງພວກເຮົາໄປເຖິງຕົ້ນໄມ້ນັ້ນ ເພື່ອພວກເຮົາຈະໄດ້ຕາຍເສັຽຝ່າຍການບາບແລະມີຊີວິດຝ່າຍຄວາມຊອບທັມ" (ເປໂຕ 2:24).

## ຄຳຖາມ

- ທ່ານແປຄຳວ່າ ຊອບທັມ ແນວໃດ?
- ຫາກການປະຕິບັດຕາມກົດບັນຍັດເຮັດໃຫ້ເຮົາກາຍເປັນຄົນຊອບທັມທ່ານຈະເປັນແນວໃດ?
- ໃນລະຫວ່າງຄວາມເຊື່ອແລະການປະຕິບັດທ່ານມີສິ່ງໃດຫລາຍກວ່າ? ເປັນຫຍັງ?
- ການທີ່ທ່ານປະຕິບັດຕາມພຣະບັນຍັດແລະບໍ່ປະຕິບັດເປັນຜົນສະທ້ອນໃນການເປັນພະຍານແນວໃດ?
- ອັບຣາຮາມເຮັດດີແຕ່ບໍ່ໄດ້ຊ່ອຍໃຫ້ເປັນຄົນຊອບທັມໝາຍຄວາມວ່າແນວໃດ?
- ຫາກຄວາມເຊື່ອແລະການປະຕິບັດຂອງເຮົາບໍ່ສເມີກັນເຮັດແນວໃດຈຶ່ງຈະສເມີກັນ?

# ບົດຮຽນທີ 5
ຈົ່ງຊົມຊື່ນຍິນດີ!

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>ໂຣມ 5: 1-11

<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ໂຣມ 5:1-11

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຈົ້າຊົງໃຫ້ພວກເຮົາຄືນດີກັບພຣະອົງຜ່ານທາງຄວາມເຊື່ອ; ພວກເຮົາສາມາດຊົມຊື່ນຍິນດີໃນຄວາມສັມພັນອັນໃໝ່ນີ້ກັບພຣະອົງໃນປັດຈຸບັນ ແລະຕລອດໄປ

<u>ຄຳຖາມເພື່ອການສຳຣວດ:</u> ການເປັນຄຣິສຕຽນມີຫຽັງດີແດ່?

<u>ຈຸດປະສົງຂອງບົດຮຽນນີ້:</u> ອະທິບາຍຜົນປໂຍດຂອງການຄືນດີກັບພຣະເຈົ້າເພາະຄວາມເຊື່ອ

<u>ເຣື່ອງທີ່ກຳລັງເນັ້ນໜັກໃນເທັກຊັສ:</u>

. ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ
. ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
. ເສີມສ້າງຄອບຄົວຄຣິສຕຽນ
. ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ້ມຂື້ນ

## <u>ຄຳນຳ</u>

ມະນຸດແຕ່ລະຄົນສແວງຫາຄວາມຊົມຊື່ນຍິນດີດ້ວຍວິທີຕ່າງໆກັນ. ບາງຄົນສແວງຫາຄວາມສຸກຈາກຊັບສົມບັດ, ຊື່ສຽງ, ຄວາມງາມ, ສະຕິປັນຍາ, ຢາເສັບຕິດ, ເຫຼົ້າ, ເພດ, ກຳລັງຂອງກອງທັບ, ຕຳແໜ່ງທາງການເມືອງ, ຫຼື ຈາກຄອບຄົວ. ຖ້າເຮົາເບິ່ງຊີວິດຂອງພວກດາຣາ, ພວກນັກກິລາ, ແລະນັກການເມືອງທັງຫຼາຍແລ້ວ ເຮົາຈະເຫັນໄດ້ວ່າໂລກນີ້ບໍ່ສາມາດໃຫ້ຄວາມຊົມຊື່ນຍິນດີທີ່ຖາວອນຈາກການສແວງຫາສິ່ງທີ່ບໍ່ຍັ້ງຍືນ. ຄວາມ ສຳເຣັດຂອງມະນຸດບໍ່ສາມາດໃຫ້ຄວາມສຸກຕລອດໄປໄດ້; ມີແຕ່ພຣະເຢຊູຄຣິດເທົ່ານັ້ນທີ່ຈະສາມາດໃຫ້ຄວາມສຸກຕລອດໄປເປັນນິດໄດ້. ໃນບົດຮຽນຕໍ່ໄປນີ້ ເຮົາຈະໄດ້ເຫັນພຣະພອນຫຼາຍໆຢ່າງທີ່ພຣະເຈົ້າມີໄວ້ໃຫ້ຜູ້ທີ່ໄດ້ຮັບເອົາ ພຣະເຢຊູຄຣິດມາເປັນພຣະຜູ້ໂຜດໃນຊີວິດຂອງເຂົາ. ພຣະພອນຂອງພຣະເຈົ້າເຊັ່ນ: ສັນຕິສຸກ, ຄວາມຍິນດີ, ຄວາມຫວັງ, ແລະຄວາມຮັກ ເປັນຜົນຂອງຄວາມເຊື່ອຊຶ່ງມີໄວ້ເພື່ອທຸກໆຄົນ.

## 1. <u>ຊົມຊື່ນຍິນດີໃນສັນຕິສຸກກັບພຣະເຈົ້າ (ໂຣມ 5:1-2)</u>

ມາເຖິງຕອນນີ້ໃນພຣະທັມໂຣມ, ໂປໂລໄດ້ເວົ້າເຣື່ອງຄວາມຊອບທັມ, ຄວາມຊອບທັມເປັນຄວາມຕ້ອງການຂອງມະນຸດທຸກຄົນ, ຄວາມຊອບທັມທີ່ມາຈາກພຣະເຈົ້າ, ແລະຄວາມຊອບທັມຂອງພວກເຮົາ (ໂຣມ 1:18- 4:25). ໃນພຣະທັມໂຣມ 5:1 ໂປໂລເລີ້ມເວົ້າເຣື່ອງ ການຊົງຖືວ່າເປັນຄົນຊອບທັມເພາະຄວາມເຊື່ອ. ຄວາມຊົມຊື່ນຍິນດີແລະ ສັນຕິສຸກຄືຜົນທີ່ເກີດຂຶ້ນຈາກການມີຄວາມສັມພັນກັບພຣະເຈົ້າ. ຄຳວ່າສັນຕິສຸກໝາຍເຖິງ ການເຊົາ ເປັນສັດຕູກັນ. ມະນຸດໄດ້ເປັນສັດຕູກັບພຣະເຈົ້າເພາະຄວາມຜິດບາບ. ແຕ່ພຣະເຢຊູໄດ້ນຳພວກເຮົາ ໃຫ້ມີສັນຕິສຸກກັບພຣະເຈົ້າໂດຍການຍອມສິ້ນພຣະຊົນເພື່ອຄວາມຜິດຂອງເຮົາທັງຫຼາຍ ແລະພຣະອົງໄດ້ຖືກຊົງ ບັນດານໃຫ້ຄືນພຣະຊົນ ເພື່ອໃຫ້ເຮົາໄດ້ຊົງຖືວ່າເປັນຄົນຊອບທັມ (ໂຣມ 4:25). ພຣະເຢຊູໄດ້ກະທຳຕາມພຣະ ບັນຍັດເພື່ອມະນຸດຈະໄດ້ຄືນດີກັບພຣະເຈົ້າ. ສະນັ້ນທຸກຄົນທີ່ວາງໃຈໃນອົງພຣະເຢຊູຈຶ່ງໄດ້ຖືວ່າເປັນຜູ້ຊອບທັມ. ເພາະຄວາມເຊື່ອໃນອົງພຣະເຢຊູເຮົາຈຶ່ງມີສັນຕິ

ສຸກກັບພຣະເຈົ້າ. ເມື່ອກ່ອນເຮົາເປັນສັດຕູກັບພຣະອົງແຕ່ດຽວ ນີ້ເຮົາໄດ້ມາເປັນມິດສະຫາຍຂອງພຣະອົງເພາະຄວາມເຊື່ອ.

ຫຼາຍໄປກວ່ານັ້ນພວກເຮົາທັງຫຼາຍຍັງມີສິດເຂົ້າໄປຫາພຣະເຈົ້າໄດ້ໂດຍບໍ່ຕ້ອງຜ່ານຜູ້ນຶ່ງຜູ້ໃດ. ຜ້າກັ້ງທີ່ຢູ່ລະຫວ່າງມະນຸດແລະພຣະເຈົ້າໄດ້ຖືກຈີກອອກ. ເພາະພຣະຄຸນຂອງພຣະເຈົ້າໃນການອະພັຍຄວາມຜິດຂອງພວກເຮົາ, ພວກເຮົາຈຶ່ງສາມາດເຂົ້າຢືນຢູ່ຕໍ່ພະພັກຂອງພຣະເຈົ້າ. ຄວາມສັມພັນທີ່ມະນຸດໄດ້ເສັຽໄປໃນສວນເອ ເດນ ໄດ້ກັບຄືນມາເປັນຂອງມະນຸດອີກ. ສິ່ງສຳຄັນອີກຢ່າງນຶ່ງຄືຄວາມຫວັງ (ໂຣມ 5:2). ຄວາມຫວັງ ຫມາຍ ເຖິງຄວາມຫມັ້ນໃຈໃນສິ່ງທີ່ຈະເກີດຂຶ້ນໃນອານາຄົດ. ໂປໂລໄດ້ບອກພວກເຮົາວ່າ "ພວກເຮົາຊົມຊື່ນຍິນດີໃນ ຄວາມຫວັງວ່າຈະໄດ້ມີສ່ວນໃນສະງ່າຣາສີຂອງພຣະເຈົ້າ." ພຣະເຢຊູບໍ່ພຽງແຕ່ໃຫ້ພວກເຮົາເຂົ້າເຖິງພຣະເຈົ້າ ເທົ່ານັ້ນ ແຕ່ພຣະອົງຍັງຊົງໃຫ້ພວກເຮົາໄດ້ມີສ່ວນໃນສະງ່າຣາສີຂອງພຣະອົງ.

<u>ຄວາມຊົມຊື່ນຍິນດີ</u>

ເນື່ອງຈາກຄຣິສຕຽນບາງຄົນບໍ່ເຄີຍສະແດງຄວາມຊົມຊື່ນຍິນດີໃນຊີວິດຂອງເຂົາ ຄົນທັງຫຼາຍເລີຍເຫັນວ່າການເປັນຄຣິສຕຽນບໍ່ມີຜົນຫຍັງດີຂຶ້ນ. ທ່ານ ໂອລີບເວີ ເວັນແດນ ໂຮມ (1841-1935), ສະມາຊິກສານສູງສະຫະ ຣັຖເຄີຍເວົ້າວ່າ, "ຂ້ອຍອາດຈະເລືອກອາຊີພເປັນສິດຍາພິບານຢູ່ໃນໂບດ ຖ້າວ່າພວກອາຈານທີ່ຂ້ອຍເຄີຍຮູ້ຈັກ ທັງຫຼາຍບໍ່ວາງ ທ່າທີເຫມືອນກັບຄົນທຳງານຢູ່ໃນເຮືອນເຢັນ."

ຄຣິສຕຽນຄວນມີຄວາມຊົມຊື່ນຍິນດີຢູ່ຕະລອດເວລາ. ເຖິງຊີວິດຈະມີອຸປສັກ ພວກເຮົາກໍຮູ້ວ່າທຸກຢ່າງຈະດີຂຶ້ນໃນຄາວສຸດທ້າຍເພາະພຣະເຈົ້າຊົງເປັນຜູ້ໃຫ້ຊັຍຊະນະ. ອຸປສັກເຮັດໃຫ້ເຮົາເຂັ້ມແຂງ; ຕິດສນິດຢູ່ກັບພຣະເຈົ້າ ເພາະພຣະອົງເປັນບໍ່ເກີດຂອງຄວາມຊົມຊື່ນຍິນດີ. ຈົ່ງໃຫ້ຊີວິດຂອງທ່ານເຕັມດ້ວຍຄວາມຍິນດີເພື່ອຄົນອື່ນຈະໄດ້ ເຫັນສະງ່າຣາສີຂອງພຣະເຈົ້າ.

## ຂ. <u>ຊົມຊື່ນຍິນດີໃນຄວາມຫວັງເມື່ອມີຄວາມຍາກລຳບາກ (ໂຣມ 5:3-8)</u>

ນອກຈາກສັນຕິສຸກທີ່ເຮົາໄດ້ຮັບຈາກພຣະເຈົ້າແລ້ວ, ພວກເຮົາຍັງມີຄວາມຫວັງຖ້າມກາງຄວາມຍາກລຳບາກດ້ວຍ. ບໍ່ມີມະນຸດຄົນໃດທີ່ຈະສແວງຫາຄວາມຍາກລຳບາກ; ແຕ່ຖ້າເຮົາມີທີ່ເພິ່ງເຮົາກໍສາມາດອົດທົນຕໍ່ບັນຫາຕ່າງໆໃນຊີວິດ. ມັນເປັນການງ່າຍທີ່ຈະເວົ້າເຣື່ອງຄວາມຫວັງເມື່ອທຸກຢ່າງໃນຊີວິດຮຽບຮ້ອຍດີ. ຄຣິສຕຽນແທ້ ຈະສະແດງຄຸນນະວຸດທິຂອງຕົນຖ້າມກາງມໍຣະສຸມຂອງຊີວິດ. ຄວາມເຊື່ອທີ່ແທ້ຈະຊ່ວຍເຮົາໃຫ້ຢືນຢູ່ໄດ້ໃນເວລາ ທີ່ເຮົາມີບັນຫາ ແລະໃນເວລາທີ່ເຮົາມີຄວາມສຸກ.

ພວກເຮົາສາມາດຊົມຊື່ນຍິນດີໄດ້ໂດຍອາສັຍກຳລັງທີ່ມາຈາກພຣະເຈົ້າ. ກຳລັງນັ້ນຈະໃຫ້ຄວາມຫວັງຖ້າມກາງອຸປສັກ. ຄຣິສຕຽນບໍ່ໄດ້ຊົມຊື່ນຍິນດີເພາະເຂົາມີບັນຫາ, ແຕ່ເຂົາຊົມຊື່ນຍິນດີໃນສິ່ງທີ່ພຣະເຈົ້າຈະຊົງປະ ທານຈາກບັນຫາເຫລົ່ານັ້ນ. ຈາກຄວາມຍາກລຳບາກ ພຣະເຈົ້າຊົງເຮັດໃຫ້ເກີດຄວາມອົດທົນ (5:3). ຄວາມອົດ ທົນຫມາຍເຖິງການອົດກັ້ນໄວ້ນານ, ຄວາມພະຍາຍາມ, ຄວາມມີກຳລັງໃຈ, ແລະ ຄວາມຫມັ້ນຄົງ. ຄວາມລຳ ບາກໃນຊີວິດເຮັດໃຫ້ເກີດຄວາມນ້ອຍໃຈ; ແຕ່ບັດນີ້ ເຖິງຊີວິດຈະພົບອຸປສັກຕ່າງໆກໍຕາມເຮົາຮູ້ວ່າພຣະເຈົ້າຈະຊົງນຳເຮົາໃຫ້ໄປເຖິງຄວາມປອດພັຍ ເພາະ ຄວາມສັມພັນອັນໃຫມ່ທີ່ເຮົາມີກັບພຣະອົງ.

ຄວາມລຳບາກເຮັດໃຫ້ ເຮົາມີຄວາມອົດທົນເຂັ້ມແຂງ. "ຄວາມອົດທົນຊ່ວຍເຮັດໃຫ້ເຮົາເປັນຄົນທີ່ພຣະເຈົ້າຊົງເຫັນຊອບ ແລະການທີ່ຊົງເຫັນຊອບນັ້ນເຮັດໃຫ້ມີຄວາມໄວ້ວາງໃຈ" (5:4). ສິ່ງເຫລົ່ານີ້ເກີດຂຶ້ນໄດ້ເພາະຄຣິສຕຽນໃຫ້ພຣະເຈົ້າຊົງນຳພາຊີວິດ. ຫຼາຍໆຄັ້ງວິທີການຂອງພຣະເຈົ້າອາດຈະບໍ່ກົງກັບຄວາມຕ້ອງການຂອງເຮົາ. ຕົວຢ່າງເວລາເຮົາອະທິຖານໃຫ້ຄົນປ່ວຍໄດ້ຫາຍຈາກພະຍາດ, ຕາມທັມມະດາແລ້ວເຮົາຄິດວ່າການຫາຍຈາກ ພະຍາດຈະ

ຢຸດຢັ້ງຄວາມຍາກລຳບາກ; ແຕ່ແທນທີ່ຄົນປ່ວຍນັ້ນຈະຫາຍດີ, ພຣະເຈົ້າໄດ້ປ່ອຍໃຫ້ຄົນປ່ວຍນັ້ນຕາຍ ເພື່ອໃຫ້ຄວາມທໍຣະມານໄດ້ສຸດສິ້ນລົງ. ເວລາໃດພຣະເຈົ້າບໍ່ຕອບສນອງຄຳອ້ອນວອນຂອງທ່ານ ຢ່າໄດ້ຄິດວ່າ ພຣະເຈົ້າບໍ່ຮັກ ຫຼືບໍ່ໄດ້ຍິນຄຳອ້ອນວອນ; ພຣະອົງອາດຈະມີສິ່ງທີ່ດີກວ່ານັ້ນສຳລັບຕົວທ່ານ. ສິ່ງເຫລົ່ານີ້ທ່ານຈຳ ເປັນຕ້ອງຍອມຮັບເພາະພຣະເຈົ້າມີພຣະປະສົງທີ່ສູງເກີນກວ່າຄວາມຄິດຂອງມະນຸດຈະເຂົ້າໃຈໄດ້.

ພຣະເຈົ້າໄດ້ຖອກເທຄວາມຮັກຂອງມາພຣະອົງມາໃຫ້ມະນຸດໂດຍຊົງປະທານຊີວິດໃຫມ່ໃຫ້ກັບຜູ້ທີ່ເຊື່ອໃນອົງພຣະ ເຢຊູຄຣິດ. ພຣະວິນຍານບໍຣິສຸດຄືຜູ້ຄໍ້າປະກັນວ່າພຣະເຈົ້າຊົງຢູ່ກັບເຮົາ; ພຣະອົງຊົງຢູ່ກັບຜູ້ທີ່ເຊື່ອທຸກໆຄົນເພື່ອ ຊ່ວຍເຂົາເຈົ້າຕໍ່ສູ້ກັບອຸປສັກຕ່າງໆໃນຊີວິດ. ພຣະເຈົ້າຈະປະທານຄວາມອົດທົນ, ຄວາມໝັ້ນຄົງ, ແລະ ຄວາມ ຫວັງຈົນກວ່າບັນຫາທັງຫມົດຈະຜ່ານໄປ.

ພຣະເຢຊູຄຣິດຊົງສະລະພຣະຊົນເພື່ອມະນຸດທັງຫມົດ, ເພື່ອຄົນຜູ້ທີ່ຍັງບໍ່ໄດ້ເກີດ ແລະ ເພື່ອຄົນຜູ້ທີ່ຍັງບໍ່ໄດ້ກັບ ໃຈ. ທ່ານອາດຈະກ້າຕາຍແທນຄົນດີ; ບໍ່ມີໃຜຍອມຕາຍເພື່ອຄົນຊົ່ວອະທັມ. ແຕ່ພຣະເຢຊູຄຣິດຍອມສະລະພຣະຊົນເພື່ອຄົນຜິດບາບທັງຫມົດໃນໂລກ.

## 3. ຊົມຊື່ນຍິນດີໃນຄວາມແນ່ໃຈເຣື່ອງຄວາມລອດພົ້ນ (ໂຣມ 5:9-11)

ຜົນອີກຢ່າງນຶ່ງທີ່ເກີດຂຶ້ນເພາະຄວາມເຊື່ອຄື ຄວາມແນ່ໃຈ. ເຖິງຊີວິດຈະເປັນແນວໃດກໍຕາມເຮົາໝັ້ນໃ ຈໄດ້ວ່າເຮົາໄດ້ກັບຄືນດີກັບພຣະເຈົ້າ ເພາະຄວາມເຊື່ອໃນອົງພຣະຄຣິດ(5:11). ການຄືນດີກັບພຣະເຈົ້າຫມາຍເຖິງການມີສັນຕິສຸກກັບພຣະເຈົ້າຊຶ່ງໄດ້ກ່າວໄປແລ້ວໃນພຣະທັມ ໂຣມ 5:1; ການຄືນດີກັນ ຫມາຍເຖິງການເຊົາຕໍ່ສູ້ ກັນ. ພຣະເຈົ້າຈຳເປັນຕ້ອງລົງໂທດມະນຸດເພາະການບໍ່ເຊື່ອຟັງຂອງເຂົາ; ຄວາມຜິດບາບເຮັດໃຫ້ມະນຸດບໍ່ສາ ມາດດຳເນີນຊີວິດຕາມພຣະປະສົງຂອງພຣະເຈົ້າ;ສະນັ້ນພຣະເຈົ້າຈະຕ້ອງພິພາກສາມະນຸດທຸກຄົນ. ແຕ່ພຣະເຈົ້າ ຍັງຮັກມະນຸດຫຼາຍ, ພຣະອົງຈຶ່ງໄດ້ສົ່ງພຣະເຢຊູຄຣິດໃຫ້ມາຕາຍແທນຄວາມຜິດບາບຂອງເຂົາ.

ການຕາຍຂອງພຣະເຢຊູຄຣິດທີ່ເທິງໄມ້ກາງແຂນເປັນການໄຖ່ມະນຸດຈາກການພິພາກສາຂອງພຣະເຈົ້າ, ພຣະເຈົ້າຈຶ່ງຖືວ່າເຮົາເປັນຜູ້ຊອບທັມ. ບາງຄົນຄິດວ່າຖ້າເຂົາເຈົ້າດຳເນີນຊີວິດທີ່ດີແລະຫຼີກເວັ້ນຈາກການເຮັດຄວາມ ຊົ່ວທັງຫມົດ ເຂົາເຈົ້າກໍຈະໄດ້ຮັບຄວາມລອດພົ້ນ. ແຕ່ວ່າພຣະຄັມພີໄດ້ກ່າວໄວ້ວ່າມະນຸດທຸກຄົນມີຄວາມຜິດບາບ ແລະຄວາມລອດພົ້ນໂດຍທາງອື່ນບໍ່ມີ. ມະນຸດໄດ້ຮັບການໃຫ້ອະພັຍບໍ່ແມ່ນຈາກຊີວິດທີ່ບໍ່ມີຄວາມຜິດບາບຂອງ ພຣະເຢຊູຄຣິດ; ມະນຸດໄດ້ຮັບການໃຫ້ອະພັຍເພາະການສິ້ນພຣະຊົນທີ່ເທິງໄມ້ກາງແຂນຂອງພຣະເຢຊູຄຣິດ ແລະ ການ ຄືນພຣະຊົນຈາກຄວາມຕາຍຂອງ ພຣະອົງ. ພຣະເຢຊູຄືຫົນທາງແຫ່ງຄວາມລອດພົ້ນຂອງມະນຸດ (5:10).

ຄຣິສຕຽນມີຄວາມຊົມຊື່ນຍິນດີເພາະພຣະເຢຊູຍັງຊົງພຣະຊົນຢູ່ທຸກມື້ນີ້. ເພາະພຣະອົງຊົງພຣະຊົນຢູ່ ພວກເຮົາກໍຈະມີຊີວິດຢູ່ຫຼັງຈາກຄວາມຕາຍເຊັ່ນກັນ. ເພາະການຄືນດີກັນກັບພຣະເຈົ້າພວກເຮົາກໍຈະມີຊີວິດຢູ່ກັບພຣະອົງ ຈົນຊົ່ວນິຣັນດອນ. ການສິ້ນພຣະຊົນຂອງພຣະເຢຊູຄຣິດເຮັດໃຫ້ການເປັນສັດຕູກັນຣະຫວ່າງພຣະເຈົ້າ ແລະມະນຸດໄດ້ສິ້ນສຸດລົງ. ນອກນັ້ນພຣະເຈົ້າຍັງມີພຣະປະສົງໃຫ້ຄຣິສຕຽນແຕ່ລະຄົນໄດ້ໃຊ້ຊີວິດອັນຄົບບໍຣິບູນຢູ່ກັບພຣະອົງຈົນຕລອດໄປ. ພວກເຮົາບໍ່ຢ້ານຄວາມຕາຍອີກຕໍ່ໄປ ເພາະພວກເຮົາໄດ້ຮັບຊີວິດນິຣັນຈາກພຣະເຈົ້າ. ນີ້ຄືເອ ກາດທີ່ເຮົາທຸກຄົນຄວນຊົມຊື່ນຍິນດີ.

ການຄືນດີກັນນີ້ບໍ່ແມ່ນພວກເຮົາໄດ້ເຮັດເອງ; ແຕ່ເປັນພຣະຣາຊກິດຂອງພຣະເຈົ້າຕັ້ງແຕ່ເລີ່ມຕົ້ນຈົນເຖິງຈຸດອາວະສານ. ພຣະອົງໄດ້ຊົງກະທຳທຸກຢ່າງເພື່ອໃຫ້ຄວາມລອດພົ້ນໄດ້ສຳເຣັດລົງ; ພາຣະກິດຂອງເຮົາຄືການຍອມຮັບເອົາສິ່ງທີ່ພຣະອົງໄດ້ຊົງປະທານໃຫ້. ຄວາມຊົມຊື່ນຍິນດີຈະເກີດຂຶ້ນໃນຊີວິດ ຈາກວິນາທີທີ່ເຮົາຍອມຮັບ.

### ຄຳຖາມ:

1. ຈາກພຣະທັມ ໂຣມ 5:1-11, ມີຜົນຫຍັງແດ່ທີ່ເກີດຂຶ້ນຫຼັງຈາກພຣະເຈົ້າຊົງເຮັດໃຫ້ເຮົາເປັນຜູ້ຊອບທັມ?
2. ທ່ານມີຄວາມຊົມຊື່ນຍິນດີແນວໃດແດ່ ໃນການຖືກໄຖ່ຂອງທ່ານ?

3. ທ່ານຕໍ່ສູ້ກັບອຸປສັກໃນຊີວິດດ້ວຍວິທີໃດ? ພຣະທັມທີ່ຮຽນມາສອນໃຫ້ເຮັດແນວໃດ?
4. ຄຣິສຕຽນມີຫຍັງແດ່ທີ່ຈະຊ່ວຍເຂົາເຈົ້າໄດ້ໃນເວລາພົບຄວາມທຸກລຳບາກໃນຊີວິດ?
5. ທ່ານມີຄວາມເຂົ້າໃຈຫຼາຍຂຶ້ນບໍ່ ເຖິງວິທີຂອງພຣະເຈົ້າກ່ຽວກັບການຕໍ່ສູ້ອຸປສັກໃນຊີວິດ?

# ບົດຮຽນທີ 6

## ຈົ່ງຮັບເອົາອິສຣະພາບ!

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ໂຣມ 6:1-14, 20-23

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ໂຣມ 6

ຈຸດສຳຄັນຂອງບົດຮຽນນີ້: ຄຣິສຕຽນຄວນດຳເນີນຊີວິດທີ່ປາສະຈາກການເປັນທາດຂອງຄວາມຜິດບາບ ເພາະພຣະເຈົ້າໄດ້ຊົງໃຫ້ເສຣີພາບແກ່ເຂົາເຈົ້າແລ້ວໃນພຣະຄຣິດ.

ຄຳຖາມເພື່ອການສຳຣວດ: ຄວາມເຊື່ອໄດ້ຊ່ວຍທ່ານໃຫ້ໃຊ້ຊີວິດເພື່ອຖວາຍກຽດແກ່ພຣະເຈົ້າແນວໃດແດ່?

ຈຸດປະສົງຂອງບົດຮຽນນີ້: ສຳຣວດເບິ່ງເສຣີພາບຂອງທ່ານ,ຈາກການເປັນທາດຂອງຄວາມຜິດບາບ, ແລະຄວາມພະຍາຍາມທີ່ຈະໃຊ້ຊີວິດເພື່ອຖວາຍກຽດແກ່ພຣະເຈົ້າ

### ເຣື່ອງທີ່ກຳລັງເນັ້ນໜັກໃນເທັກຊັສ:

. ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ
. ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
. ເສີມສ້າງຄອບຄົວຄຣິສຕຽນ
. ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ້ມຂື້ນ

### ຄຳນຳ

ຄວາມເສຣີພາບຂອງຊີວິດຄຣິສຕຽນປົດປ່ອຍບຸກຄົນຈາກກົດຣະບຽບຕ່າງໆຂອງສາສນາແລະຈາກປະເພນີທີ່ມະນຸດສ້າງຂື້ນມາເອງ. ຫຼາຍຄົນຄິດວ່າຊີວິດຄຣິສຕຽນແມ່ນການຖືກົດຣະບຽບ, ພິທີ, ແລະທຳນຽມຂອງໂບດ. ພຣະເຢຊູບໍ່ພຽງແຕ່ໄດ້ປົດປ່ອຍພວກເຮົາຈາກພຣະບັນຍັດເທົ່ານັ້ນ, ພຣະອົງໄດ້ໃຫ້ພວກເຮົາມີເສຣີພາບຈາກກົດວິນັຍທາງສາສນາທັງໝົດ.

ຊີວິດຄຣິສຕຽນບໍ່ແມ່ນການປະຕິບັດຕາມລາຍການທີ່ມະນຸດຂຽນຂື້ນ; ຄົນສ່ວນຫຼາຍຄິດວ່າຖ້າເຮົາຢາກຈະເປັນຄຣິສຕຽນທີ່ດີ ເຮົາຈະບໍ່ດື່ມສຸຣາ, ຈະບໍ່ສູບຢາ, ຈະບໍ່ເຕັ້ນລຳ, ແລະຈະບໍ່ໃຊ້ຄວາມຫຽາບຊ້າ. ຄວາມຈິງແລ້ວ ການເປັນຄຣິສຕຽນທີ່ດີບໍ່ໄດ້ມາຈາກການປະຕິບັດຕາມລາຍການອັນໃດ. ຄວາມສັມພັນກັບອົງພຣະເຢຊູຄຣິດນຳ ເຮົາໄປສູ່ອິສຣະພາບຈາກອຳນາດຂອງຄວາມບາບ.

### 1. ເສຣີພາບເລີ້ມຕົ້ນຈາກຊີວິດໃໝ່ໃນພຣະຄຣິດ (ໂຣມ 6:1-7)

ພຣະທັມໂຣມ ບົດທີ 6 ນີ້, ເປັນເຣື່ອງຕໍ່ຈາກສິ່ງທີ່ໄດ້ອະທິບາຍໄປແລ້ວໃນ ໂຣມ 5;ໂ ປໂລບັນລະຍາຍຕໍ່ໄປວ່າ ຄວາມຜິດບາບບໍ່ມີອຳນາດໃນຊີວິດຂອງຄຣິສຕຽນອີກຕໍ່ໄປ. ພຣະເຢຊູໄດ້ໃຫ້ເຮົາມີເສຣີພາບ; ເຮົາບໍ່ໄດ້ເປັນທາດຂອງຄວາມບາບອີກຕໍ່ໄປ. ອົງພຣະເຢຊູຄຣິດຄືນາຍໃໝ່ຂອງພວກເຮົາ. ໂປໂລໄດ້ໃຫ້ຄຳຖາມສຳຄັນໃນພາກຕົ້ນຂອງພຣະທັມໂຣມ 6 ວ່າ, "ຖ້າຢ່າງນັ້ນແລ້ວເຮົາ ຈະວ່າຢ່າງໃດ ຄວນທີ່ເຮົາທັງຫຼາຍຈະຢູ່ໃນຄວາມບາບຕໍ່ໄປ..." ໂປໂລໃຫ້ຄຳຕອບວ່າ, "ບໍ່ເປັນຢ່າງນັ້ນດອກ ເຮົາຜູ້ຕາຍຕໍ່ຄວາມຜິດບາບແລ້ວຈະດຳເນີນຊີວິດໃນຄວາມບາບໄດ້ຢ່າງໃດ." ຄຣິສຕຽນເປັນບຸກຄົນ ທີ່ໄດ້ຮັບການປ່ຽນແປງຊີວິດໃໝ່ແລ້ວ, ສະນັ້ນຄຣິສຕຽນ

ຈະບໍ່ໄປມົວເມົາໃນຄວາມຜິດບາບນັ້ນອີກຕໍ່ໄປ. ຄຣິສຕຽນຈະບໍ່ມີສັນຕິສຸກໃນໃຈຖ້າເຂົາໄປເຮັດຄວາມຜິດບາບ.

ໃນພຣະທັມໂຣມ 6 :3-5, ໂປໂລໄດ້ເລີ້ມອະທິບາຍການບັບຕິສະມາຊຶ່ງເປັນຫຼັກຄວາມເຊື່ອທີ່ສຳຄັນທີ່ສຸດຂອງ ຄຣິສຕຽນ. ຄຣິສຕຽນໄດ້ຕາຍຕໍ່ຄວາມຜິດບາບເພາະເຂົາມີຊີວິດໃນອົງພຣະເຢຊູຄຣິດ. ການບັບຕິສະມາເປັນຮູບພາບຂອງການສິ້ນພຣະຊົນ, ການຖືກຝັງ, ແລະການຄືນພຣະຊົນຂອງພຣະເຢຊູ. ສະນັ້ນການຈຸ່ມຜູ້ທີ່ເຊື່ອລົງໃນນ້ຳຈົນຖ້ວມຕົວຈຶ່ງເປັນການບັບຕິສະມາທີ່ຖືກຕ້ອງ. ຄະນະບັບຕິສເຊື່ອວ່າພວກເຮົາໄດ້ຮ່ວມໃນການຖືກຝັງຂອງພຣະເຢຊູຄຣິດໂດຍການຮັບບັບຕິສະມາ ແລະ ພວກເຮົາໄດ້ຄືນມີຊີວິດກັບພຣະອົງເພື່ອຈະໄດ້ດຳເນີນຊີວິດ ໃໝ່. ການບັບຕິສະມາບໍ່ໄດ້ຊ່ວຍໃຫ້ຄົນລອດພົ້ນ, ແຕ່ການທຳພິທີບັບຕິສະມາແບບອື່ນໆຈະບໍ່ມີຄວາມໝາຍຕາມ ທີ່ໂປໂລໄດ້ບັນລະຍາຍໄວ້ໃນພຣະທັມໂຣມ 6. ນອກນັ້ນການບັບຕິສະມາຢູ່ໃນພຣະສັນຍາໃໝ່ຈະກະທຳກັນພາຍ ຫຼັງຈາກການຮັບເຊື່ອແລະບໍ່ມີຊ່ວງເວລາເພື່ອການລໍຄອຍ. ຊີວິດໃໝ່ໃນພຣະຄຣິດເລີ້ມຈາກພິທີບັບຕິສະມາ; ຊີວິດເກົ່າໄດ້ຖືກຖິ້ມໄປ.ຄວາມຄິດໃໝ່ແລະການປະພຶດໃໝ່ຈະຕ້ອງຕິດຕາມການຮັບເຊື່ອແລະການບັບຕິສະມາ. ຄວາມຄິດໃໝ່ປະກອບດ້ວຍການເຊື່ອຟັງຄຳສັ່ງສອນຂອງອົງພຣະຄຣິດ, ການຢາກຮັບໃຊ້ພຣະອົງ, ແລະການ ຍິນດີທີ່ຈະເຮັດຕາມນ້ຳພຣະທັຍ. ຄຣິສຕຽນບໍ່ໄດ້ເປັນທາດຂອງຄວາມຜິດບາບ (6:6-7)

**<u>ການບັບຕິສະມາ</u>**

ຄຣິສຕຽນບໍ່ແມ່ນຜູ້ຄິດແຕ່ງການບັບຕິສະມາ. ຄົນນອກສາສນາໃນສມັຍພຣະເຢຊູໄດ້ພາກັນທຳພິທີບັບຕິສະມາກັນຫຼາຍໆແບບ; ເຊັ່ນການໃຊ້ພິທີບັບຕິສະມາເພື່ອຮັບສະມາຊິກໃໝ່ເຂົ້າໃນນິກາຍ. ບາງພວກໄດ້ໃຊ້ພິທີບັບຕິສະມາເພື່ອເປັນພິທີສຳລະລ້າງຮ່າງກາຍໃຫ້ບໍຣິສຸດ. ບາງສາສນາທຳການບັບຕິສະມາດ້ວຍເລືອດ. ຊາວຢິວໃນສມັຍພຣະເຢຊູກໍໄດ້ທຳພິທີບັບຕິສະມາເໝືອນກັນ; ຄົນຕ່າງຊາດທີ່ມາເປັນຄົນຢິວຈະຕ້ອງໄດ້ຮັບພິທີຕັດ, ຮັບບັບຕິສະ ມາ, ແລະນຳ ເຄື່ອງຖວາຍບູຊາໄປຍັງວິຫານທີ່ກຸງເຢຣູຊາເລັມ ກ່ອນຈະໄດ້ເປັນຄົນຢິວທີ່ບໍຣິບູນ. ໂຢຮັນ ບັບຕິ ສະໂຕທຳພິທີບັບຕິສະມາກ່ຽວກັບການຖິ້ມໃຈເກົ່າເອົາໃຈໃໝ່ ທີ່ແມ່ນ້ຳ ຢໍດາເນ. ການບັບຕິສະມາຂອງຄຣິສ ຕຽນແມ່ນພິທີສຳລັບຜູ້ເຊື່ອເທົ່ານັ້ນ; ບໍ່ມີຄຳບັນທຶກໃນພຣະຄັມພີກ່ຽວກັບການບັບຕິສະມາເດັກນ້ອຍ.

## 2. <u>ເສຣີພາບຈະເພີ້ມຂຶ້ນເມື່ອເຮົາເຕີບໃຫຍ່ໃນພຣະຄຣິດ (ໂຣມ 6:8-14)</u>

ໃນພຣະທັມ ໂຣມ 6:8-14, ໂປໂລ ເລີ້ມອະທິຍາຍຄວາມຮູ້ໃໝ່ກ່ຽວກັບຊີວິດຫຼັງຈາກການມີອິສຣະພາບຈາກ ຄວາມຜິດບາບ (6:8). ໃນເມື່ອພວກເຮົາມີຊີວິດຢູ່ກັບອົງພຣະເຢຊູຄຣິດແລ້ວ, ຄວາມຕາຍຈະບໍ່ມີອຳນາດບັງຄັບເຮົາຕໍ່ໄປ(6:9). ຍ້ອນວ່າ ພຣະເຢຊູຄຣິດໄດ້ສິ້ນພຣະຊົນຕໍ່ຄວາມຜິດບາບແຕ່ເທື່ອດຽວ ແລະດຽວນີ້ໄດ້ຊົງ ພຣະຊົນຢູ່ເພື່ອພຣະເຈົ້າ, ຊີວິດຄຣິສຕຽນກໍຈະເປັນເຊັ່ນນັ້ນ (6:11). ເສຣີພາບໃນພຣະຄຣິດຊ່ວຍຄຣິສຕຽນໃຫ້ ເຕີບໃຫຍ່ໃນດ້ານຄວາມຄິດ, ການກະທຳ, ແລະໃນທິດທາງຂອງຊີວິດ. ການກະທຳຄວາມດີບໍ່ໄດ້ຊ່ວຍໃຫ້ຄົນລອດພົ້ນ, ແຕ່ຊີວິດທີ່ເກີດໃໝ່ແລ້ວຈະປະກອບດ້ວຍການກະທຳຄວາມດີ. ຊີວິດທີ່ເຕີບໃຫຍ່ແລ້ວຈະຮູ້ວິທີເອົາຊະນະ ມານຊາຕານ, ຄວາມຜິດບາບ, ແລະການດຳເນີນຊີວິດໃນຄວາມບາບ. ເພາະພຣະເຢຊູຍັງຊົງພຣະຊົນຢູ່, ເຮົາ ຈຶ່ງກ້າປະກາດວ່າ ເຮົາເອງກໍມີຊີວິດຢູ່ເຊັ່ນກັນ (6:11).

ພຣະທັມສອນເຮົາໃຫ້ມີຊີວິດເພື່ອພຣະເຈົ້າໃນພຣະເຢຊູຄຣິດ ແລະໃຫ້ເຕີບໃຫຍ່ໃນຄວາມເຊື່ອເພື່ອເຮົາຈະໄດ້ມີ ຄວາມໝັ້ນໃຈໃນຄວາມຈິງທີ່ພຣະເຈົ້າໄດ້ຊົງປະທານໃຫ້ພວກເຮົາ. ພຣະທັມ ໂຣມ 6:12 ບອກວ່າ, "ຢ່າໃຫ້ຄວາມ ຜິດບາບປົກຄອງຮ່າງກາຍທີ່ຕ້ອງຕາຍຂອງເຈົ້າທັງຫຼາຍ ຊຶ່ງເຮັດໃຫ້ຕ້ອງເຊື່ອຟັງຕັນຫາຂອງກາຍນັ້ນ." ຖ້າເຮົາບໍ່ຍອມຟັງການບັງຄັບຂອງຄວາມຜິດບາບ, ຄວາມຜິດບາບກໍບໍ່ສາມາດທີ່ຈະປົກຄອງຊີວິດເຮົາອີກຕໍ່ໄປ. ຄວາມຜິດບາບຈະໃຊ້ເລ້ກົນຕ່າງໆເພື່ອຫຼອກລວງຄຣິສຕຽນໃຫ້ຫຼົງທາງ; ແຕ່ດຽວນີ້ ເຮົາຈະບໍ່ຍອມເຮັດຕາມຕັນ ຫາຂອງເນື້ອກາຍອີກແລ້ວ ເພາະ ເຮົາໄດ້ຖືກສ້າງຂຶ້ນໃໝ່ໃນພຣະຄຣິດ. ຫຼາຍໄປກວ່ານັ້ນພຣະເຈົ້າຍັງໄດ້ຊົງປະທານຣິດອຳນາດໃຫ້ກັບພວກເຮົາເພື່ອເຮົາຈະທຳລາຍກຳລັງອັນຊົ່ວຊ້ານັ້ນໃຫ້ໝົດສິ້ນໄປ. ພຣະເຢຊູຄຣິດສາມາດຊ່ວຍເຮົາໃຫ້

ເອົາຊະນະຄວາມຜິດບາບທາງຮ່າງກາຍໄດ້ທຸກຢ່າງ.

ອະວັຍວະຕ່າງໆທີ່ເຄີຍນຳພາເຮົາໃຫ້ກະທຳຄວາມຜິດບາບ ດຽວນີ້ໄດ້ຖວາຍໃຫ້ກັບພຣະເຈົ້າເພື່ອເປັນເຄື່ອງໃຊ້ ໃນການຊອບທັມຕໍ່ໄປ (6:12-13). ພຣະເຈົ້າໄດ້ສົ່ງພຣະວິນຍານບໍຣິສຸດຂອງພຣະອົງໃຫ້ເຂົ້າມາຢູ່ໃນຊີວິດຄຣິສຕຽນທຸກຄົນ. ພຣະວິນຍານຊົງເປັນຜູ້ຊີ້ທາງ ແລະເປັນກຳລັງໃນຊີວິດຂອງເຮົາ. ຄຣິສຕຽນໄດ້ຮັບອິສຣະພາບ ຈາກພຣະເຈົ້າ. ເຮົາບໍ່ຕ້ອງການລາຍການທີ່ມະນຸດສ້າງຂື້ນຊ່ວຍຊີ້ແຈງວ່າສິ່ງໃດດີແລະສິ່ງໃດຊົ່ວໃນເມື່ອເຮົາຮັກສາຄວາມສັມພັນກັບພຣະເຈົ້າໃຫ້ໝັ້ນຄົງ.

## 3. <u>ເສຣີພາບມີຜົນສຳລັບຊີວິດນິຣັນໃນພຣະຄຣິດ (ໂຣມ 6:20-23)</u>

ຄວາມຊອບທັມ ຢູ່ກົງກັນຂ້າມກັບຄວາມຜິດບາບ; ແຕ່ກ່ອນເຮົາເຄີຍເປັນຄົນຜິດບາບ ແລະບໍ່ໄດ້ສົນໃຈເຣື່ອງການປະພຶດດີ. ສ່ວນຫຼາຍເຮົາບັງຄັບຕົວເອງໃຫ້ປະພຶດດີເພາະເຮົາຢ້ານຖືກລົງໂທດ. ຄຣິສຕຽນທີ່ແທ້ຈິງຈະເຮັດສິ່ງທີ່ຖືກ ຕ້ອງຢູ່ສເມີ ແມ່ນວ່າຄົນອື່ນຈະບໍ່ຮູ້. ໃນພຣະທັມ ໂຣມ 6:21-23 ໂປໂລໄດ້ຊີ້ໃຫ້ເຫັນວ່າ ທຸກຄົນເຄີຍຄິດເສັຽໃຈໃນ ບາງຢ່າງທີ່ເຮົາເຄີຍເຮັດ ຜ່ານມາ. ຖ້າເຮົາມີໂອກາດທີ່ຈະເຮັດອີກ ເຮົາຄົງຈະບໍ່ເຮັດດັ່ງນັ້ນ. ການກະທຳຫຼາຍຢ່າງ ທີ່ຜ່ານມາຖ້າຖືກເປີດເຜີຍໃນປັດຈຸບັນນີ້ ອາດຈະເຮັດໃຫ້ເກີດຄວາມອັບອາຍກໍໄດ້.

ຫຼາຍຄົນຄິດວ່າເຂົາບໍ່ໄດ້ເຮັດຄວາມຊົ່ວມາກ່ອນ; ແຕ່ພຣະທັມໂຣມ 3:23 ໄດ້ບອກຢ່າງແຈ່ມແຈ້ງວ່າເຮົາທຸກຄົນ ມີຄວາມຜິດບາບ. ໃນໂລກນີ້ບໍ່ມີຄົນຊອບທັມແມ່ນແຕ່ຄົນດຽວ. ການອິດສາກໍ່ເປັນຕັນຫາຊະນິດນຶ່ງ; ການໂມໂຫໂທ ໂສຄືຄວາມຊົ່ວຮ້າຍ; ການເວົ້າບໍ່ຈິງ, ການຕິຕຽນ, ການນິນທາ, ແລະການທັກຫຼັງກັນ ລ້ວນແຕ່ເປັນຄວາມຜິດບາບ ກັນທັງນັ້ນ. ຄວາມຜິດບາບຄືການບໍ່ເຊື່ອຟັງພຣະບັນຍັດຂອງພຣະເຈົ້າ; ການເຮັດຄວາມຜິດບາບເປັນການ ຝ່າຝືນ ພຣະປະສົງຂອງພຣະເຈົ້າ. ຄວາມຜິດບາບທຸກຢ່າງນຳໄປເຖິງຄວາມຕາຍແລະບຶງໄຟນາຮົກ. ຄົນບາບທຸກຄົນຈະຕ້ອງ ຖືກ ພຣະເຈົ້າພິພາກສາ.

ຊີວິດຄຣິສຕຽນເປັນຊີວິດທີ່ບໍຣິສຸດ; ຜົນຂອງຊີວິທີ່ບໍຣິສຸດຄືຊີວິດນິຣັນໃນພຣະເຈົ້າ(ໂຣມ 6:22). ໂຣມ 6:23 ປຽບທຽບຜົນຂອງຊີວິດທີ່ຂາດພຣະເຈົ້າແລະຊີວິດທີ່ມີພຣະເຈົ້າ. ຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ; ຜູ້ທີ່ເຮັດຄວາມຜິດບາບຈະຕ້ອງໄດ້ຮັບການລົງໂທດໂດຍການຖືກແຍກອອກຈາກພຣະເຈົ້າ ແລະຖືກສົ່ງໄປຍັງແດນມໍຣະນາ. ຄວາມເຊື່ອໃນອົງພຣະຄຣິດກໍໄດ້ຮັບຄ່າຈ້າງເຊັ່ນກັນ, ແຕ່ຄ່າຈ້າງນີ້ຄືຄວາມລອດພົ້ນ, ຜູ້ທີ່ເຊື່ອໃນອົງພຣະຄຣິດຈະບໍ່ໄດ້ຖືກລົງໂທດ. ແທນທີ່ພວກເຂົາຈະໄດ້ຮັບຄວາມຕາຍ ແຕ່ເຂົາໄດ້ຮັບຊີວິດນິຣັນ.

ພຣະທັມໂຣມບົດທີ່6 ເວົ້າເຖິງອິສຣະພາບຂອງຄຣິສຕຽນ, ອິສຣະຈາກອຳນາດຂອງຄວາມບາບ. ຄວາມຜິດບາບເຄີຍເປັນນາຍຂອງເຮົາ; ເຮົາເຄີຍຢູ່ໃຕ້ການບັງຄັບຂອງຄວາມບາບ. ພຣະເຢຊູຄຣິດໄດ້ໃຫ້ເຮົາມີເສຣີພາບຈາກຄວາມບາບ; ພຣະອົງໄດ້ປະທານຊີວິດອັນຕລອດໄປເປັນນິດໃຫ້ພວກເຮົາ. ບັດນີ້ເຮົາມີພຣະເຢຊູຄຣິດເປັນເຈົ້ານາຍຂອງພວກເຮົາ. ເຮົາບໍ່ຢ້ານຄວາມຕາຍແລະບຶງໄຟນາຮົກອີກຕໍ່ໄປ.

### <u>ຄຳຖາມ</u>:

1. ທ່ານຈົດຈຳການບັບຕິສະມາຂອງທ່ານບໍ່? ທ່ານໄດ້ຮັບບັບຕິສະມາຢູ່ໃສ, ທ່ານມີອາຍຸຫຼາຍປານໃດໃນຕອນນັ້ນ? ທ່ານເຄີຍຮູ້ຜູ້ໃດບໍ່ທີ່ໄດ້ຮັບບັບຕິສະມາໃນຫ້ວຍ, ໃນໜອງ, ຫຼືໃນອ່າງອາບນ້ຳ?
2. ຜູ້ໃດເປັນເຈົ້ານາຍທາງຈິດວິນຍານຂອງທ່ານ, ຄວາມບາບ ຫຼື ພຣະເຢຊູຄຣິດ?
3. ທ່ານໄດ້ຮັບໄຊຊະນະກັບຄວາມບາບແນວໃດແດ່ໃນຊີວິດຂອງທ່ານ?
4. ມີຄວາມຜິດບາບຊະນິດໃດແດ່ທີ່ຄຣິສຕຽນຫຼາຍຄົນຖືວ່າຮ້າຍແຮງ? ມີຄວາມຜິດບາບອັນໃດແດ່ທີ່ຄຣິສຕຽນບາງຄົນຖືວ່າບໍ່ຮ້າຍແຮງ? ທ່ານຄິດວ່າພຣະເຈົ້າຈະຮູ້ສຶກຢ່າງໃດກັບຄວາມຜິດບາບທັງສອງປະເພດທີ່ກ່າວມານີ້?
5. ເວລາທ່ານຖືກທົດລອງໃຫ້ເຮັດຄວາມຜິດບາບ, ທ່ານໄດ້ເຮັດແນວໃດແດ່ ເພື່ອຂໍຄວາມຊ່ວຍເຫຼືອຈາກພຣະເຈົ້າ?

## ບົດຮຽນທີ 7

ໃຊ້ຊີວິດຢ່າງມີຊັຍຊະນະ!

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ໂຣມ 8:1-2, 12-28, 38-39

ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: ໂຣມ 7-8

ຈຸດສໍາຄັນຂອງບົດຮຽນນີ້: ເວລາໃດເຮົາໃຫ້ພຣະວິນຍານຂອງພຣະເຈົ້ານໍາພາຊີວິດ, ພວກເຮົາຈະມີຊັຍຊະນະຕໍ່ບັນຫາຕ່າງໆໃນຊີວິດ

ຄໍາຖາມເພື່ອການສໍາຣວດ: ເຮົາຈະດໍາເນີນຊີວິດຢ່າງມີຊັຍຊະນະເວລາເຮົາມີຄວາມຍາກລໍາບາກໄດ້ແນວໃດ?

ຈຸດປະສົງຂອງບົດຮຽນນີ້: ສໍາຣວດເບິ່ງຜົນຂອງການໃຫ້ພຣະວິນຍານຂອງພຣະເຈົ້ານໍາພາຊີວິດ ແລ້ວຕັດສິນໃຈເອງວ່າທ່ານຈະເລືອກທາງໃດ

### ເຣື່ອງທີ່ກໍາລັງເນັ້ນໜັກໃນເທັກຊັສ:

. ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ
. ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
. ເສີມສ້າງຄອບຄົວຄຣິສຕຽນ
. ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ້ມຂື້ນ

### ຄໍານໍາ

ນັກຣົບທໍາພິທີສລອງຫຼັງຈາກໄດ້ຊັຍຊະນະໃນການຕໍ່ສູ້ສົງຄາມ; ນັກຮຽນທໍາພິທີສລອງເວລາຮຽນຈົບຈາກວິຊາສຶກສາ; ສາມີພັລຍາຊົມຊື່ນຍິນດີເພາະໄດ້ບຸດນ້ອຍ. ທຸກຄົນມີຄວາມຊົມຊື່ນຍິນດີເວລາທຸກຢ່າງໃນຊີວິດຮຽບຮ້ອຍດີ; ແຕ່ເປັນຫຍັງພວກເຮົາບໍ່ສະແດງຄວາມຊົມຊື່ນຍິນດີເວລາເຮົາພົບກັບບັນຫາ? ນັ້ນຄືທັມມະຊາດຂອງມະນຸດ.

ຄວາມຜິດບາບເຮັດໃຫ້ເຮົາເປັນສັດຕູກັບພຣະເຈົ້າ. ຄວາມຜິດບາບໄດ້ຕັດຄວາມສັມພັນລະຫວ່າງພຣະເຈົ້າ ແລະມະນຸດ. ມະນຸດໄດ້ຕໍ່ສູ້ພຣະເຈົ້າຢູ່ຕລອດມາ; ແຕ່ບັດນີ້ ພຣະເຢຊູຄຣິດ, ຜູ້ຊົງຊັຍຊະນະຄວາມຕາຍ, ໄດ້ເຮັດໃຫ້ມະນຸດທັງຫຼາຍໄດ້ຄືນດີກັບພຣະເຈົ້າ. ມະນຸດໄດ້ກາຍມາເປັນມິດສະຫາຍກັບພຣະເຈົ້າອີກເທື່ອນຶ່ງ; ນີ້ຄືໂອກາດທີ່ພວກເຮົາທັງຫຼາຍຄວນຈະມີການສເລີມສລອງ.

### 1. ຄວາມຜິດບາບຍັງຕິດຕາມຄຣິສຕຽນທຸກຄົນ (ໂຣມ 7:7-25)

ການຕໍ່ສູ້ກັບຄວາມຜິດບາບບໍ່ໄດ້ສິ້ນສຸດລົງເວລາເຮົາມີຄວາມເຊື່ອໃນອົງພຣະຄຣິດ; ໂປໂລໄດ້ໃຫ້ຕົວຢ່າງເຣື່ອງການ ຕໍ່ສູ້ກັບຄວາມຜິດບາບຂອງເຂົາໃນພຣະທັມ ໂຣມ 7. ຢູ່ໃນ ໂຣມ 7:14-23, ໂປໂລເວົ້າເຖິງຊີວິດຫຼັງຈາກທີ່ເປັນຄຣິສ ຕຽນແລ້ວ; ຄວາມຜິດບາບຍັງຕິດຢູ່ໃນເນື້ອກາຍຂອງເຮົາ(7:17). ທຸກຄົນທີ່ເຊື່ອວາງໃຈໃນອົງພຣະເຢຊູຄຣິດຈະບໍ່ ຖືກພິພາກສາ; ເຂົາເຈົ້າບໍ່ໄດ້ຢູ່ໃຕ້ການບັງຄັບຂອງຄວາມຜິດບາບອີກຕໍ່ໄປ. ແຕ່ຕັນຫາບາງຢ່າງຍັງມີເຊື້ອຢູ່ໃນຊີວິດ; ກົດແຫ່ງຄວາມຜິດບາບຍັງມີຢູ່ໃນເນື້ອກາຍຂອງເຮົາ. ໂປໂລເວົ້າວ່າ "ເຮົາຮູ້ວ່າໃນຕົວເຮົາ ຄືເນື້ອກາຍຂອງເຮົາ ບໍ່ມີການດີຈັກຢ່າງຢູ່ນໍາ ເພາະວ່າເຈຕະນາດີນັ້ນເຮົາກໍມີຢູ່ ແຕ່ທີ່ຈະເຮັດການດີນັ້ນເຮົາບໍ່ໄດ້ເຮັດ "(7:18).

ມະນຸດທຸກຄົນປາຖນາດີ ແຕ່ເຮັດດີບໍ່ໄດ້; ຫຼາຍຄົນບໍ່ປາຖນາທີ່ຈະເຮັດຄວາມຊົ່ວ ແຕ່ເຂົາກໍຍັງເຮັດຢູ່. ໂປໂລ ສະລູບວ່າ "ເມື່ອໃດເຮົາຕັ້ງ ໃຈຈະເຮັດການດີ ຄວາມຊົ່ວກໍມາຕັນເຮົາ "(7:21). ມະນຸດປາຖນາຈະເຮັດການດີ ແຕ່ບໍ່ສາມາດ ເຮັດໄດ້ເພາະຮ່າງ ກາຍຂອງເຂົາຍັງເປັນຂ້ອຍຂ້າຢູ່ໃຕ້ກົດແຫ່ງຄວາມຜິດບາບຢູ່ . ໂປໂລຍອມຮັບວ່າ "ໃຜແດ່

ຈະຊ່ວຍເຮົາໃຫ້ ພົ້ນຈາກ ຮ່າງກາຍທີ່ຕ້ອງຕາຍນີ້" (7:24); ຂອບພຣະຄຸນພຣະເຈົ້າໂດຍທາງພຣະເຢຊູຄຣິດ ໂປໂລໄດ້ຮັບອິສຣະພາບທີ່ເຂົາ ສແວງຫາ ຄື ເສຣີພາບຈາກກົດແຫ່ງຄວາມຜິດບາບ. ທ່ານຈະຍອມເປັນຂ້ອຍຂ້າຂອງກົດແຫ່ງຄວາມຜິດບາບ ຫຼື ຈະຍອມຮັບໃຊ້ຕາມຂໍ້ບັນຍັດຂອງພຣະເຈົ້າ?

ພວກເຮົາແຕ່ລະຄົນກໍມີບັນຫາເຫມືອນກັບ ໂປໂລ; ພວກເຮົາກໍາລັງຕໍ່ສູ້ກັບກົດຂອງຄວາມຜິດບາບທີ່ພະຍາຍາມຈະນໍາເຮົາໄປໃນທາງຜິດ; ແຕ່ເຮົາຂອບພຣະຄຸນພຣະເຈົ້າ ສໍາລັບຄວາມຫວັງທີ່ເຮົາມີໃນອົງພຣະເຢຊູຄຣິດ. ພຣະເຢຊູຄຣິດ ເທົ່ານັ້ນທີ່ຈະສາມາດຊ່ວຍເຮົາໃຫ້ໄດ້ອິສຣະພາບຈາກກົດຂອງຄວາມຜິດບາບແລະຄວາມຕາຍ.

## ໒. <u>ພຣະເຈົ້າຊົງປະທານພຣະວິນຍານບໍຣິສຸດເພື່ອຊ່ວຍພວກເຮົາໃນການຕໍ່ສູ້ (ໂຣມ 8:1-2)</u>

ໂຣມ 8 ປຽບເຫມືອນແສງສວ່າງທີ່ທຸກຄົນສແວງຫາຫຼັງຈາກການຮຽນຮູ້ພຣະທັມ ໂຣມ 1-7; ພຣະເຈົ້າໄດ້ເປີດເຜີຍ, ຜ່ານໂປໂລ, ແຜນການສຸດທ້າຍຂອງພຣະອົງສໍາລັບພວກຄົນທັງຫຼາຍທີ່ຢູ່ໃນພຣະເຢຊູຄຣິດ. ຈຸດສໍາຄັນທີ່ເຮົາໄດ້ເຫັນໃນໂຣມ 8:1 ຄື ຂໍ້ຄວາມດັ່ງຕໍ່ໄປນີ້ "ບັດນີ້ການລົງໂທດຈຶ່ງບໍ່ມີ." ສັຣເສີນພຣະເຈົ້າ! ພຣະເຢຊູຄຣິດໄດ້ສິ້ນພຣະຊົນຢູ່ເທິງໄມ້ກາງແຂນ ເພື່ອເປັນຄ່າຈ້າງຂອງຄວາມບາບ; ຄວາມຜິດບາບຂອງພວກເຮົາໄດ້ຖືກໄຖ່ແລ້ວ; ບັນຊີທຸກຢ່າງໄດ້ຖືກລົບລ້າງ. ພຣະເຈົ້າຈະບໍ່ລົງໂທດຄົນທັງຫຼາຍທີ່ຢູ່ໃນພຣະເຢຊູຄຣິດ, ຄົນທັງຫຼາຍທີ່ຖືກເອີ້ນວ່າ "ຄຣິສຕຽນ." ພຣະເຢຊູຄຣິດຊົງຊ່ວຍພວກເຮົາໃຫ້ພົ້ນຈາກການພິພາກສາຂອງພຣະເຈົ້າ; ຄວາມຜິດບາບທຸກຢ່າງໄດ້ຮັບການໃຫ້ ອະພັຍ. ເຮົາໄດ້ຮັບການຊໍາຣະລ້າງໂດຍພຣະໂລຫິດຂອງອົງພຣະຄຣິດ.

ຄຣິສຕຽນເທົ່ານັ້ນທີ່ສາມາດສລອງຂ່າວປະເສີດເຫລົ່ານີ້. ສໍາລັບຜູ້ທີ່ບໍ່ຍອມຮັບເຊື່ອທັງຫຼາຍຊີວິດຂອງເຂົາຍັງຈົມຢູ່ ໃນຄວາມຜິດບາບ; ການພິພາກສາຍັງລໍຄອຍເຂົາຢູ່. ບາງຄົນອາດຈະແກ້ຕົວວ່າຊີວິດຂອງເຂົາ ຍັງມີດີກວ່າຫຼາຍໆຄົນທີ່ເປັນຄຣິສຕຽນ. ຄວາມຈິງແລ້ວຄຣິສຕຽນບາງຄົນອາດຈະເຄີຍເຮັດຫຼາຍຢ່າງທີ່ບໍ່ດີ ໃນສາຍຕາຂອງມະນຸດ; ແຕ່ປັດຈຸບັນນີ້ ເຂົາໄດ້ກັບໃຈມາເຊື່ອໃນອົງພຣະເຢຊູຄຣິດ. ສະນັ້ນ ພຣະເຈົ້າຈຶ່ງໄດ້ໃຫ້ອະພັຍຄວາມຜິດບາບຂອງເຂົາ, ພຣະອົງໄດ້ຊົງປະທານຊີວິດໃຫມ່ໃຫ້ກັບເຂົາ. ພຣະເຈົ້າຈະບໍ່ພິພາກສາຄົນທັງຫຼາຍທີ່ຮັບເຊື່ອໃນອົງພຣະເຢຊູຄຣິດ.

ໂຣມ 8:1-2 ເວົ້າເຖິງພຣະວິນຍານບໍຣິສຸດຂອງພຣະເຈົ້າທີ່ຊົງສະຖິດຢູ່ກັບຜູ້ເຊື່ອແຕ່ລະຄົນ. ພຣະເຈົ້າປະທານພຣະວິນຍານບໍຣິສຸດໃຫ້ກັບຜູ້ເຊື່ອ ເພື່ອເປັນຜູ້ຄໍ້າປະກັນຄວາມລອດພົ້ນທີ່ເຂົາໄດ້ຮັບ; ຄຣິສຕຽນທຸກຄົນໄດ້ຮັບພຣະວິນຍານແຫ່ງຊີວິດ (8:2). ພຣະບັນຍັດບໍ່ໄດ້ໃຫ້ຊີວິດ, ແຕ່ຈະໃຫ້ຄວາມຕາຍ. ພຣະບັດຍັດມີໄວ້ເພື່ອຄຸ້ມຄອງຄວາມຜິດບາບ, ແຕ່ພຣະວິນຍານຊົງຄຸ້ມຄອງຊີວິດ. ກົດຂອງຄວາມຜິດບາບຄືຄວາມຕາຍ ກົດຂອງພຣະວິນຍານຄືຊີວິດ. ທີ່ໃດມີພຣະວິນຍານບໍຣິສຸດຂອງພຣະເຈົ້າທີ່ນັ້ນກໍຈະມີຊີວິດ ເພາະພຣະວິນຍານຄືຊີວິດ. ພຣະເຈົ້າຊົງເປັນຢູ່ຕລອດໄປເປັນນິດ, ປັດຈຸບັນພຣະຜູ້ເປັນເຈົ້າຊົງສະຖິດຢູ່ໃນຊີວິດຂອງ ຄຣິສຕຽນ, ສະນັ້ນຊີວິດນິຣັນຈຶ່ງເປັນຂອງຄຣິສຕຽນທຸກຄົນ.

<u>ພຣະວິນຍານບໍຣິສຸດ</u>

ຫຼັກຄວາມເຊື່ອສໍາຄັນຢ່າງນຶ່ງໃນພຣະສັນຍາໃຫມ່ແມ່ນເຣື່ອງການຊົງປະທັບຢູ່ໃນໂລກຂອງພຣະວິນຍານບໍຣິສຸດ. ພຣະວິນຍານເປັນຜູ້ຊີ້ທາງໃຫ້ໄປເຖິງພຣະເຢຊູຄຣິດ. ພາຣະກິດຂອງພຣະວິນຍານຄື: ຕັດສິນຄວາມຜິດບາບ, ຊ່ອຍຊູເຮົາທັງຫຼາຍເມື່ອພວກເຮົາອ່ອນກໍາລັງ, ຊ່ວຍໃຫ້ເຮົາເຂົ້າໃຈພຣະທັມ, ຊ່ວຍເຮົາໃຫ້ເຕີບໃຫຍ່ໃນຄວາມເຊື່ອ, ແລະ ປະທານພຣະພອນຕ່າງໆເພື່ອເສີມສ້າງຄຣິສຕະຈັກ. ພຣະວິນຍານເປັນຜູ້ຄໍ້າປະກັນຄວາມສະງ່າຣາສີຂອງພຣະເຈົ້າທີ່ເຮົາຈະໄດ້ຮັບໃນຟ້າສວັນ. ພຣະວິນຍານຊ່ວຍເຮົາໃຫ້ໄດ້ຊີມຣົດຂອງການມີຊີວິດຢູ່ກັບພຣະເຈົ້າ. ຄະນະບັບຕິດເຊື່ອທຸກໆຢ່າງກຽ່ວກັບເຣື່ອງຣິດອໍານາດຂອງພຣະວິນຍານ. ຄະນະບັບຕິດເຊື່ອເຣື່ອງການອະທິຖານ, ການປິ່ນປົວພະຍາດ, ແລະ ການເວົ້າພາສາແປກ. ຄະນະບັບຕິດ ເຊື່ອວ່າສິ່ງເຫລົ່ານີ້ພຣະເຈົ້າບໍ່ໄດ້ປະທານໃຫ້ຄຣິສຕຽນເພື່ອການສະແດງ, ແຕ່ ເພື່ອເສີມສ້າງຄຣິສຕະຈັກຂອງພຣະເຈົ້າໃຫ້ມີຄວາມສາມັກຄີ.

3. <u>ພຣະເຈົ້າຊົງໃຫ້ພວກເຮົາເປັນລູກ ແລະເປັນຜູ້ຮັບມໍຣະດົກຜ່ານພຣະວິນຍານ (ໂຣມ8:12-17)</u>

ຄຣິສຕຽນທຸກຄົນຈະບໍ່ດຳເນີນຊີວິດຕາມຝ່າຍເນື້ອກາຍອີກຕໍ່ໄປ, ແຕ່ຈະດຳເນີນຊີວິດໂດຍຣິດຂອງພຣະວິນຍານບໍຣິສຸດ (8:13). ການດຳເນີນຊີວິດໂດຍການນຳພາຂອງພຣະວິນຍານຈະນຳໄປສູ່ຊີວິດນິຣັນກັບພຣະເຈົ້າ ແລະຈະໄດ້ເປັນບຸດຂອງພຣະອົງ (8:14). ພຣະເຈົ້າໄດ້ຊົງສ້າງພວກເຮົາຂຶ້ນໃຫມ່ເພາະຄວາມເຊື່ອໃນອົງພຣະຄຣິດ. ພວກເຮົາບໍ່ໄດ້ເປັນບຸດຂອງຄວາມມືດ ແລະເຮັດຕາມຕັນຫາທີ່ຊົ່ວຮ້າຍ; ໂດຍພຣະຄຣິດເຮົາໄດ້ຢູ່ໃນຄອບຄົວໃຫມ່ຊຶ່ງມີພຣະເຈົ້າເປັນພຣະບິດາ. ພວກເຮົາຈຶ່ງມີສິດເອີ້ນພຣະເຈົ້າວ່າ "ອັບບາ" ຫຼືພຣະບິດາ (8:15). ຫຼາຍໄປກວ່ານັ້ນ ພຣະເຈົ້າຍັງໃຫ້ພວກເຮົາເປັນຜູ້ຮັບມໍຣະດົກຈາກພຣະອົງ ຮ່ວມກັບພຣະຄຣິດ(8:17). ສະນັ້ນຄຣິສຕຽນທັງຫຼາຍຈະຕ້ອງສະແດງຄວາມ ຈົງຮັກພັກດີຕໍ່ຄອບຄົວໃຫມ່ຂອງຕົນ.

4. <u>ພຣະເຈົ້າຊົງຮັບປະກັນອະນາຄົດຂອງພວກເຮົາ (ໂຣມ 8:18-28)</u>

ຄວາມຜິດບາບທີ່ມະນຸດໄດ້ເຮັດຕໍ່ພຣະເຈົ້າຢູ່ໃນສວນເອເດນ ມີຜົນສະທ້ອນໄປເຖິງທຸກຢ່າງທີ່ພຣະອົງໄດ້ສ້າງຂຶ້ນ; ທຸກຢ່າງ, ຮວມທັງມະນຸດຊາດ, ໄດ້ປ່ຽນແປງຈາກເປົ້າຫມາຍທີ່ພຣະເຈົ້າຊົງມີໄວ້; ສະນັ້ນສັພສິ່ງທັງຫມົດໃນຈັກວານກຳລັງພາກັນລໍຄອຍສິ່ງທີ່ພຣະເຈົ້າຈະຊົງເປີດເຜີຍໃຫ້ກັບໄພ່ພົນຂອງພຣະອົງ (8:19). ພຣະຜູ້ເປັນເຈົ້າໄດ້ຊົງເປີດເຜີຍວ່າ ພຣະອົງຈະປ່ຽນແປງສິ່ງທີ່ພຣະອົງໄດ້ຊົງສ້າງໄວ້ແລ້ວ. ສັພສິ່ງທຸກຢ່າງກຳລັງກ້າວໄປໃກ້ຈຸດອາວະສານ; ພຣະເຈົ້າຈະຊົງສ້າງທຸກຢ່າງຂຶ້ນໃຫມ່. ຟ້າສວັນ ແລະ ແຜ່ນດິນໂລກຈະຖືກສ້າງຂຶ້ນໃຫມ່. ອະນາຄົດໃຫມ່ຂອງພວກເຮົາຈະເລີ້ມຕົ້ນແຕ່ເວລານີ້ໄປ. ພວກເຮົາກຳລັງລໍຄອຍເບິ່ງຄວາມສະງ່າຣາສີຂອງພຣະເຈົ້າທີ່ຈະມາໃນພາຍຫນ້າ; ຄຣິສຕຽນເປັນຜົນຫົວທີຂອງພຣະວິນຍານ (8:22-23).

ມະນຸດຍັງບໍ່ໄດ້ໄປເຖິງຈຸດສຸດທ້າຍຂອງເວລາແລະປະວັດສາດເທື່ອ; ພວກເຮົາຢູ່ໄດ້ທຸກວັນກໍເພາະຄວາມຫວັງ, ຄວາມຫວັງໃນສິ່ງທີ່ເຮົາຍັງບໍ່ເຫັນ (8:24-25). ພຣະວິນຍານບໍຣິສຸດເປັນຜູ້ໃຫ້ຄວາມຫວັງ. ເຖິງເຮົາຈະບໍ່ ໄດ້ເຫັນດ້ວຍຕາ ແຕ່ເຮົາກໍມີຄວາມຫມັ້ນໃຈ ເພາະເຮົາຮູ້ວ່າພຣະເຈົ້າຊົງສັດຊື່ຕໍ່ພຣະສັນຍາ. ທຸກຢ່າງຈະຕ້ອງເກີດຂຶ້ນຕາມທີ່ພຣະອົງໄດ້ຊົງສັນຍາໄວ້. ສະນັ້ນເຮົາຈຶ່ງມີຄວາມພາກພຽນໃນການລໍຄອຍ. ໃນຂະນະດຽວກັນ ພຣະວິນຍານຊົງເປັນຜູ້ຊ່ວຍເຮົາໃນເວລາອ່ອນແຮງ; ພຣະວິນຍານຊົງຊ່ວຍເຮົາໃນການອ້ອນວອນເພາະພຣະອົງສາມາດຮູ້ຈິດໃຈ ແລະຄວາມປາຖນາຂອງມະນຸດ. ພຣະເຈົ້າຊົງເຮັດໃຫ້ທຸກສິ່ງເກີດຂຶ້ນເພື່ອຜົນດີຂອງຜູ້ທີ່ຮັກພຣະອົງ ແລະຜູ້ທີ່ພຣະອົງໄດ້ຊົງເອີ້ນໄວ້ (8:26-28). ຄຣິສຕຽນເປັນບຸກຄົນທີ່ພຣະເຈົ້າຊົງເອີ້ນໄວ້ (28:29-30).

5. <u>ພຣະເຈົ້າຊົງເຮັດໃຫ້ຄວາມລອດພົ້ນຂອງເຮົາເປັນສິ່ງທີ່ແນ່ນອນ (ໂຣມ 8:38-39)</u>

ໂຣມ 8:38-39 ເວົ້າເຖິງຄວາມຫມັ້ນຄົງຂອງຜູ້ທີ່ເຊື່ອ. ພຣະເຈົ້າເປັນຜູ້ປະທານຄວາມພົ້ນໃຫ້ພວກເຮົາ; ພຣະອົງຊົງ ເປັນຜູ້ປ້ອງກັນຄວາມລອດພົ້ນຂອງເຮົາດ້ວຍ. ບໍ່ມີສິ່ງໃດໃນໂລກທີ່ຈະສາມາດຕັດພວກເຮົາອອກຈາກຄວາມຮັກຂອງ ພຣະເຈົ້າ. ນີ້ຄືສິ່ງທີ່ຄຣິສຕຽນສາມາດຫມັ້ນໃຈໄດ້. ທຸກຄົນທີ່ເຊື່ອແລະໄວ້ວາງໃຈໃນອົງພຣະເຢຊູຄຣິດຈະບໍ່ເສັຽ ຄວາມລອດພົ້ນທີ່ຕົນໄດ້ຮັບຈາກພຣະເຈົ້າ; ບໍ່ມີສິ່ງໃດທີ່ເຂົາຈະເຮັດຂຶ້ນຈະສາມາດແຍກເຂົາໃຫ້ຂາດຈາກຄວາມຮັກ ຂອງພຣະເຈົ້າ ເພາະ ພວກເຮົາບໍ່ໄດ້ຮັບຄວາມລອດພົ້ນເພາະການກະທຳຂອງເຮົາ. ເຮົາໄດ້ຮັບຄວາມພົ້ນດ້ວຍພຣະຄຸນ ຂອງພຣະເຈົ້າ ແລະດ້ວຍຄວາມເຊື່ອຂອງເຮົາໃນອົງພຣະເຢຊູຄຣິດ.

<u>ຄຳຖາມ</u>:

1. ການຕໍ່ສູ້ກັບຄວາມຜິດບາບຂອງ ໂປໂລ ໃນ ໂຣມ 7:7-25 ຖືກກັບຊີວິດຂອງທ່ານບໍ່?
2. ທ່ານຮູ້ຈັກຄຣິສຕຽນຜູ້ໃດບໍ່ ທີ່ຍັງມີບັນຫາກັບຄວາມຜິດບາບທີ່ເຂົາເຄີຍເຮັດແຕ່ນານມາແລ້ວ? ພຣະທັມທີ່ຮຽນຜ່ານມານີ້ຊ່ວຍໄດ້ຢ່າງໃດແດ່?
3. ທ່ານເຄີຍມີລູກລ້ຽງບໍ່? ທ່ານຄິດວ່າລູກທີ່ທ່ານຂໍມາລ້ຽງຈະຮັກພໍ່ແມ່ຫຼາຍກວ່າພວກລູກທີ່ກຳເນີດຈາກເນື້ອຫນັງຂອງທ່ານເອງບໍ່?

4. ທ່ານເຄີຍມີບັນຫາເຣື່ອງບໍ່ຮູ້ຈະເວົ້າລົມກັບພຣະເຈົ້າດ້ວຍວິທີໃດບໍ່?
5. ພຣະເຈົ້າຈະຊົງເຮັດໃຫ້ທຸກຢ່າງເກີດຂຶ້ນເພື່ອຜົນດີໃນຊີວິດຂອງທ່ານໄດ້ດ້ວຍວິທີໃດ?
6. ທ່ານເຄີຍຄິດສົງສັຍຄວາມໝັ້ນຄົງຂອງຕົວເອງໃນອົງພຣະຄຣິດບໍ່?

# ບົດຮຽນທີ 8

## ການຊົງເລືອກຂອງພຣະເຈົ້າ ແລະ ຄວາມຮັບຜິດຊອບຂອງເຮົາ!

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>ໂຣມ 9:1-8; 10:1-21

<u>ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:</u> ໂຣມ 9:1-10:21

<u>ຈຸດສໍາຄັນຂອງບົດຮຽນນີ້:</u> ທຸກຄົນມີໜ້າທີ່ໃນການຮັບເອົາຂ່າວປະເສີດ ແລະໃນການປະກາດຂ່າວປະເສີດ ເພາະພຣະເຈົ້າໄດ້ຊົງເລືອກແຕ່ລະຄົນໄວ້.

<u>ຄໍາຖາມເພື່ອການສໍາຣວດ:</u> ມະນຸດມີຄວາມຮັບຜິດຊອບແນວໃດ ເມື່ອເຂົາໄດ້ຍິນຂ່າວປະເສີດເຣື່ອງຄວາມລອດພົ້ນ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເບິ່ງຄໍາອະທິບາຍຂອງ ໂປໂລໃນເຣື່ອງອໍານາດຂອງພຣະເຈົ້າ ແລະຄວາມຮັບຜິດຊອບຂອງມະນຸດຕໍ່ພຣະເຈົ້າ.

<u>ເຣື່ອງທີ່ກໍາລັງເນັ້ນໜັກໃນເທັກຊັສ:</u>

. ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ
. ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
. ເສີມສ້າງຄອບຄົວຄຣິສຕຽນ
. ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ້ມຂຶ້ນ

<u>ຄໍານໍາ</u>

ຫຼັກຄວາມເຊື່ອເຣື່ອງອໍານາດຂອງພຣະເຈົ້າແລະຄວາມຮັບຜິດຊອບຂອງມະນຸດໃນການເລືອກເປັນເຣື່ອງທີ່ ລໍາບາກສໍາລັບການອະທິບາຍ.ນັກສາສນາສາດໃນຫຼາຍສັດຕະວັດທີ່ຜ່ານມາພະຍາຍາມສຶກສາແລະອະທິບາຍຄໍາສອນໃນພຣະທັມກ່ຽວກັບເຣື່ອງນີ້ແຕ່ເຂົາເຈົ້າກໍບໍ່ໄດ້ພົບຄໍາຕອບທີ່ງ່າຍເພື່ອຊ່ວຍໃນການເຂົ້າໃຈ.

ເບິ່ງຕົວຢ່າງຂອງຜູ້ປະກາດພຣະທັມໂຢນາໃນພຣະສັນຍາເດີມ. ໂຢນາມີເສຣີພາບໃນການເລືອກແລະລາວກໍໄດ້ໃຊ້ສິດທິອັນນັ້ນໂດຍການແລ່ນໜີຈາກພຣະເຈົ້າ. ທ້າຍສຸດລາວກໍໄດ້ຮັບເຄາະກັມຕາມທີ່ພຣະເຈົ້າໄດ້ວາງ ແຜນເອົາໄວ້. ພວກເຮົາແຕ່ລະຄົນກໍມີສິດທິໃນການເລືອກເໝືອນຜູ້ປະກາດພຣະທັມໂຢນາ. ເຮົາອາດຈະປະຕິ ເສດພຣະເຈົ້າ ແຕ່ເຮົາຈະຕ້ອງເປັນຜູ້ຮັບຜົນທີ່ເກີດຈາກການເລືອກຂອງເຮົາ. ພຣະເຈົ້າເປັນຜູ້ຊົງເບິ່ງວ່າຜົນກັມ ຈະເປັນແນວໃດ. ເຮົາມີເສຣີພາບໃນການເລືອກ, ແຕ່ເສຣີພາບນັ້ນມີຂອບເຂດ. ບົດຮຽນໃນພາກຕໍ່ໄປເຮົາຈະ ໄດ້ສຶກສາບັນຫາສໍາຄັນເຣື່ອງອໍານາດຂອງພຣະເຈົ້າແລະຄວາມຮັບຜິດຊອບຂອງມະນຸດ.

### 1. <u>ການຊົງເລືອກຂອງພຣະເຈົ້າ (ໂຣມ 9:1-8)</u>

ພຣະຄັມພີໂຣມໄດ້ແບ່ງອອກເປັນ 3 ພາກໃຫຍ່: 1. ຫຼັກຄວາມເຊື່ອ(ບົດທີ 1-8), 2. ພຣະປະສົງຂອງພຣະ ເຈົ້າສໍາລັບຊາວຢິວ ແລະຄົນຕ່າງຊາດ (ບົດທີ 9-11), 3. ເຣື່ອງກິຣິຍາມາຣະຍາດ ແລະການປະພຶດ (ບົດທີ 12-16). ພາກກາງຂອງໂຣມ 9-11 ເວົ້າເຣື່ອງບັນຫາໃນຄຣິສຕະຈັກໂດຍສະເພາະແມ່ນເຣື່ອງຄົນຢິວ. ຄົນຢິວ ເປັນຊົນຊາດທີ່ພຣະເຈົ້າຊົງເລືອກໄວ້; ພວກເຂົາໄດ້ຮັບພຣະສັນຍາ, ພຣະບັນຍັດ, ຜູ້ປະກາດພຣະທັມ, ແລະການ ຄຸ້ມຄອງຈາກພຣະເຈົ້າ. ແຕ່ເມື່ອພຣະເມຊີອາທີ່ພຣະເຈົ້າສັນຍາໄດ້ລົງມາໃນໂລກ ພວກຢິວພາກັນປະຕິເສດພຣະ ອົງ. ພຣະເຈົ້າໜີດ

ພາຣະກັບຄືນຢິວແລ້ວບໍ່? ພຣະສັນຍາຂອງພຣະອົງທີ່ໃຫ້ກັບອັບຣາຮາມ, ອີຊາກ, ແລະ ຢາ ໂຄບ ມໍ່ມີຄວາມໝາຍແລ້ວບໍ?

ໂປໂລຂຽນພຣະທັມ ໂຣມ 9 ດ້ວຍຄວາມທຸກໂສກເພາະເພິ່ນມີຄວາມຫວ່ງໃຍຊົນຊາດອິສຣາເອັນ. ໂປໂລພະຍາຍາມເວົ້າຄວາມຈິງ; ມີຕອນນຶ່ງທ່ານໄດ້ອ້າງເອົາພຣະວິນຍານບໍຣິສຸດມາເປັນພະຍານວ່າທຸກຢ່າງທີ່ທ່ານເວົ້າ ເປັນຄວາມຈິງ(9:1). ໂປໂລມີຄວາມປາຖນາຢ່າງແຮງກ້າທີ່ຈະໃຫ້ຊົນຊາດອິສຣາເອັນໄດ້ຮັບເອົາພຣະຄຣິດ. ໂປໂລບອກວ່າຖ້າເປັນໄປ ໄດ້ເຂົາຍອມທີ່ຈະປ່ຽນບ່ອນກັບພີ່ນ້ອງຊາວຢິວຂອງເຂົາ ຄືໃຫ້ຊາວຢິວໄດ້ຮັບຄວາມ ລອດພົ້ນແລະເຂົາເອງຈະຮັບ ຄວາມສາບແຊ່ງ (9:2-3). ມີຄຣິສຕຽນຫຼາຍຄົນໃນທຸກມື້ນີ້ທີ່ມີນ້ຳໃຈຢ່າງດຽວ ກັບໂປໂລ. ຫຼາຍຄົນມີຍາດພີ່ນ້ອງທີ່ຍັງບໍ່ຮູ້ພຣະເຈົ້າ; ແລະເຂົາຮູ້ວ່າທຸກຄົນທີ່ບໍ່ມີພຣະເຢຊູຄຣິດກໍໝົດຄວາມ ຫວັງ. ຄວາມທຸກໂສກເຫລົ່ານັ້ນເປັນຄວາມຈິງ; ຄຣິສຕຽນຫຼາຍຄົນໄດ້ໃຊ້ເວລາໃນການອະທິຖານເພື່ອຄວາມລອດ ພົ້ນຂອງຄົນທີ່ຕົນຮັກ. ຄຣິສຕະຈັກເຕັມໄປດ້ວຍຄຣິສຕຽນທີ່ມີຄວາມປາຖນາຢ່າງນີ້.

ພຣະທັມໂຣມ 9:4-5 ບັນທຶກສິດທິພິເສດທີ່ພຣະເຈົ້າໄດ້ໃຫ້ກັບຊົນຊາດອິສຣາເອັນ; ພຣະເຈົ້າຊົງເລືອກຊາວ ຢິວໃຫ້ເປັນຜູ້ນຳຂ່າວເຣື່ອງພຣະຄຣິດ; ພຣະອົງມີພຣະປະສົງໃຫ້ຊາວຢິວໄດ້ເປັນຜູ້ປະກາດພຣະສັນຍາໃໝ່ທີ່ຜູ້ ປະກາດພຣະທັມເຢຣະມີໄດ້ຂຽນໄວ້ໃນ ພຣະທັມເຢຣະມີ ບົດທີ 31:33-34 ແລະບົດທີ 33:14-18. ພຣະເຈົ້າປາ ຖນາໃຫ້ ອິສຣາເອັນເປັນຊາດທຳອິດທີ່ໄດ້ຮັບຂ່າວປະເສີດ (ໂຣມ 1:16). ແຜນການຂອງພຣະເຈົ້າສຳລັບຊົນຊາດຢິວບໍ່ໄດ້ລົ້ມເຫລວໄປ; ໂປໂລໄດ້ກ່າວວ່າ "ບໍ່ແມ່ນວ່າທຸກຄົນທີ່ເກີດແຕ່ເຊື້ອສາຍຂອງອັບຣາຮາມເປັນລູກ ແທ້ຂອງທ່ານ" (9:7); ອັບຣາຮາມມີລູກຫຼາຍຄົນ ເຊັ່ນ ອິດຊະມາເອນ ແລະອີຊາກ. ອິດຊະມາເອນເປັນລູກທີ່ ເກີດຕາມທັມມະຊາດ ແຕ່ ອີຊາກເປັນຜູ້ທີ່ເກີດຕາມພຣະສັນຍາຈຶ່ງຖືວ່າເປັນຜູ້ສືບເຊື້ອສາຍ (9:8). ໂປໂລໄດ້ ສະແດງໃຫ້ເຫັນວ່າພຣະເຈົ້າຊົງເລືອກເຊື້ອສາຍຂອງອີຊາກແລະພຣະອົງປະຕິເສດເຊື້ອສາຍຂອງອິດຊະມາເອນ. ພຣະອົງເປັນຜູ້ຊົງເລືອກທຸກຢ່າງເພື່ອໃຫ້ພຣະສັນຍາຂອງພຣະອົງໄດ້ສຳເລັດຕາມເປົ້າໝາຍ.

ພຣະທັມ ໂຣມ 9 ຈົບລົງດ້ວຍຕົວຢ່າງອີກອັນນຶ່ງກ່ຽວກັບການເລືອກຂອງພຣະເຈົ້າ. ພຣະຜູ້ເປັນເຈົ້າຊົງເລືອກຢາໂຄບ ແລະຊົງປະຕິເສດ ເອຊາວ (9:10-13). ພຣະເຈົ້າບໍ່ໄດ້ເລືອກບຸກຄົນຕາມການກະທຳຂອງເຂົາ; "ພຣະ ອົງຊົງມີພຣະປະສົງຈະກະຣຸນາຜູ້ໃດ ກໍຈະຊົງກະຣຸນາແກ່ຜູ້ນັ້ນ ແລະ ພຣະອົງຊົງປະສົງຈະໃຫ້ຜູ້ໃດມີໃຈແຂງກະ ດ້າງກໍຈະຊົງໃຫ້ຜູ້ນັ້ນມີໃຈແຂງກະດ້າງ" (9:18). ພຣະເຈົ້າມີສິດກະທຳທຸກຢ່າງໄດ້ຕາມນ້ຳພຣະທັຍ ເພາະ ພຣະອົງຊົງເປັນພຣະເຈົ້າ. ມີມະນຸດຄົນໃດບໍ່ ກ້າທີ່ຈະຕັດສິນວ່າພຣະອົງຍຸດຕິທັມຫຼືບໍ່? (9:19-29). ໂປໂລ ສະລຸບວ່າ ພຣະເຈົ້າໄດ້ຊົງເລືອກພວກຊາວຕ່າງຊາດແລະໄດ້ປະຕິເສດພວກຢິວ. ພຣະເຈົ້າເລືອກຊາວຕ່າງຊາດ ເພາະຄວາມເຊື່ອຂອງເຂົາ; ພຣະເຈົ້າປະຕິເສດຊາວຢິວເພາະເຂົາພະຍາຍາມຈະມາຫາພຣະອົງດ້ວຍການປະຕິ ບັດພຣະບັນຍັດ(9:30-33).

<u>ການຊົງກຳນົດໄວ້ລ່ວງໜ້າ ແລະການຊົງເລືອກ</u>

ການຊົງກຳນົດໄວ້ລ່ວງໜ້າໝາຍເຖິງສິ່ງທີ່ກຳລັງເກີດຂື້ນນັ້ນ ພຣະເຈົ້າໄດ້ຂີດຂຽນ, ວາງແຜນ, ແລະກຳນົດໄວ້ກ່ອນແລ້ວ. ການຖືກຊົງກຳນົດໄວ້ລ່ວງໜ້າບໍ່ໄດ້ຂຶ້ນກັບການປະພຶດຂອງສ່ວນບຸກຄົນ (ໂຣມ 9:11-13); ໂປໂລໄດ້ອະທິບາຍເຣື່ອງນີ້ຢ່າງຍືດຍາວຢູ່ໃນພຣະທັມ ໂຣມ 9. ການຊົງເລືອກໝາຍເຖິງພຣະເຈົ້າໄດ້ຄັດ ເລືອກເອົາໄວ້ລ່ວງໜ້າ. ພຣະເຈົ້າມີອຳນາດອະທິປະໄຕໃນການທີ່ຈະເລືອກເອົາຄົນໃດຄົນນຶ່ງ; ພຣະອົງບໍ່ໄດ້ ອາສັຍເພິ່ງມະນຸດໃຫ້ຊ່ວຍໃນການເລືອກນັ້ນ; ການຊົງເລືອກເປັນເອກສິດຂອງພຣະເຈົ້າ. "ການຊົງເລືອກນັ້ນ ບໍ່ໄດ້ເປັນໄປຕາມການປະຕິບັດ ແຕ່ເປັນໄປຕາມທີ່ພຣະອົງຊົງເອີ້ນ" (ໂຣມ 9:11). ຄຣິສຕຽນເປັນໄພ່ພົນຂອງ ພຣະເຈົ້າ; ຄຣິສຕຽນເປັນຜູ້ທີ່ຖືກພຣະອົງຊົງເລືອກໄວ້ໃຫ້ໄດ້ຮັບຄວາມລອດພົ້ນ.

## 2. <u>ຄວາມຮັບຜິດຊອບຂອງມະນຸດ (ໂຣມ 10:1-21)</u>

ຖ້າທ່ານອ່ານພຣະທັມໂຣມ 9 ໃຫ້ຖີ່ຖ້ວນທີ່ທ່ານຈະບໍ່ສົງສັຍເລີຍວ່າ ໂປໂລໄດ້ເວົ້າຢ່າງແຈ່ມແຈ້ງວ່າ ພຣະເຈົ້າຊົງເປັນຜູ້ເລືອກຄົນນຶ່ງໄວ້ ແລະພຣະອົງໄດ້ຊົງປະຕິເສດອີກຄົນນຶ່ງ. ໃນປັດຈຸບັນນີ້ ກໍມີຫລາຍຄົນທີ່ບໍ່ເຫັນພ້ອມກັບຄວາມຄິດຂອງໂປໂລ. ເຂົາເຈົ້າຄິດວ່າພຣະເຈົ້າບໍ່ໄດ້ຊົງເລືອກໃຫ້ບາງຄົນໄດ້ຮັບຄວາມລອດ ແລະອີກບາງຄົນ ພຣະອົງຊົງໄດ້ຄາດຫລວງຫນ້າໄວ້ໃຫ້ໄປນາຮົກ. ຄົນພວກນີ້ຄິດວ່າ ພຣະເຈົ້າຈະບໍ່ບັງຄັບຄົນໃດຄົນນຶ່ງໃຫ້ຮັບພຣະ ເຢຊູຄຣິດ ຫລື ໃຫ້ປະຕິເສດພຣະອົງ.

ໂປໂລ ຂຽນ ໂຣມ 10 ເພື່ອຜູ້ທີ່ປາຖນາຈະຮັບເອົາພຣະເຢຊູຄຣິດເພື່ອຄວາມພົ້ນຂອງເຂົາ. ເຈດຕະນາຂອງ ໂປໂລ ຄື ຄວາມລອດພົ້ນຂອງຊາວອິສຣາເອັນ (10:1). ໂປໂລຮັບຮູ້ວ່າຊາວອິສຣາເອັນມີຄວາມຮ້ອນຮົນເຣື່ອງ ພຣະເຈົ້າ; ແຕ່ຄວາມຮ້ອນຮົນຂອງເຂົານັ້ນບໍ່ໄດ້ຢູ່ທີ່ຄວາມຮູ້. ພວກຢິວຄິດວ່າການປະຕິບັດຕາມພຣະບັດຍັດຈະ ນຳພາໄປສູ່ຄວາມພົ້ນ; ພວກເຂົາໄດ້ຂຍາຍພຣະບັນຍັດຂອງພຣະເຈົ້າ ອອກໃຫ້ເປັນຂໍ້ລະບຽບອື່ນໆ ເຖິງ 613 ຂໍ້. ແລ້ວໄດ້ພາກັນພາກພຽນປະຕິບັດຮັກສາຢ່າງເຄັ່ງຄັດ. ພວກຟາຣີຊາຍ, ພວກຊາດູກາຍ, ແລະ ພວກປະໂຣຫິດ ເປັນພວກທີ່ຄົນທັງຫລາຍເຊື່ອຖືວ່າເປັນຜູ້ສາມາດປະຕິບັດຕາມພຣະບັນຍັດໄດ້ເກືອບຄົບບໍຣິບູນ (ຟີລິບປອຍ 3:6).

ໃນພຣະທັມ ໂຣມ 10:4, ໂປໂລບອກວ່າພຣະຄຣິດຜູ້ດຽວເທົ່ານັ້ນທີ່ສາມາດປະຕິບັດຕາມພຣະບັນຍັດໄດ້ຢ່າງຄົບບໍຣິບູນ. ພຣະຄຣິດ ຄື ຈຸດສຸດທ້າຍຂອງພຣະບັນຍັດ; ພຣະອົງໄດ້ເຮັດໃຫ້ທຸກຄົນທີ່ເຊື່ອໄດ້ເປັນຄົນຊອບທັມ. ຄວາມລອດພົ້ນບໍ່ໄດ້ມາເຖິງມະນຸດເພາະຄວາມຊອບທັມຂອງເຂົາ. ບໍ່ມີມະນຸດຄົນໃດທີ່ຈະສາມາດເຮັດຄວາມຊອບທັມເພື່ອຈະ ໄດ້ຮັບຄວາມພົ້ນ; ແຕ່ມະນຸດທຸກຄົນສາມາດຮັບເອົາຄວາມພົ້ນທີ່ພຣະເຈົ້າຊົງປະທານໃຫ້. ຂ່າວປະເສີດເປັນຂອງທຸກ ຄົນທີ່ຍອມເຊື່ອ. ໂປໂລເວົ້າວ່າ "ຖ້ອຍຄຳນັ້ນຢູ່ໃກ້ປາກເຈົ້າ ຢູ່ໃນປາກ ແລະຢູ່ໃນໃຈຂອງເຈົ້າ (10:8);" ພຣະທັມໂຣມ 10:9 ຍັງໄດ້ເວົ້າຢ່າງແຈ່ມແຈ້ງວ່າ, "ຄືວ່າຖ້າເຈົ້າຮັບດ້ວຍປາກຂອງເຈົ້າວ່າ" ພຣະເຢຊູ ເປັນອົງພຣະຜູ້ເປັນເຈົ້າແລະເຊື່ອ ໃນຈິດໃຈວ່າ ພຣະເຈົ້າໄດ້ຊົງໂຜດບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວ ເຈົ້າກໍຈະໄດ້ພົ້ນ." ທຸກຄົນສາມາດທີ່ຈະໄດ້ຮັບຄວາມພົ້ນ; ເພາະທຸກຄົນມີປາກ ແລະມີຈິດໃຈ. ມີຄົນຈຳນວນຫລວງຫລາຍຢູ່ໃນໂລກທີ່ຍັງບໍ່ມີໂອກາດໄດ້ຍິນ ແລະໄດ້ຕອບຮັບ ເອົາຂ່າວປະເສີດ (10:14-15); ສະນັ້ນ ຄຣິສຕຽນທຸກຄົນມີພາຣະໃນການນຳຄວາມ ລອດພົ້ນນີ້ ໃຫ້ໄປເຖິງທຸກໆຄົນ. ການປະກາດຂ່າວປະເສີດຈະໄດ້ຜົນດີຖ້າຄຣິສຕຽນທັງຫລາຍເອົາໃຈໃສ່ໃນການປະກາດກັບຄົນທັງຫລາຍທີ່ເຂົາເຈົ້າຮູ້ຈັກ ໂດຍສະເພາະແມ່ນ ສະມາຊິກໃນຄອບຄົວ, ຫມູ່ເພື່ອນທີ່ຮັກແພງ, ແລະເພື່ອນຮ່ວມງານ. ຄຣິສຕຽນສ່ວນຫລາຍສາມາດໄປເຖິງຜູ້ຄົນຕາມສຖານທີ່ ຕ່າງໆທີ່ພວກຜູ້ປະກາດ ແລະ ພວກຜູ້ຮັບໃຊ້ບໍ່ສາມາດເຂົ້າໄປເຖິງ.

<u>ພາຣະກິດເຣື່ອງການປະກາດ</u>

ຄຣິສຕຽນທຸກຄົນຈະຕ້ອງຍອມຮັບຮູ້ວ່າພວກເຮົາເປັນຜູ້ປະກາດແລະຜູ້ຮັບໃຊ້ ທີ່ພຣະເຈົ້າຊົງໄດ້ເລືອກໄວ້ເພື່ອການນຳຂ່າວປະເສີດໃຫ້ໄປເຖິງທຸກໆຄົນໃນຣັຖເທັກຊັດ. ມີຄົນປະມານ 8 ລ້ານຄົນໃນ ເທັກຊັດທີ່ຍັງບໍ່ໄດ້ເປັນຄຣິສຕຽນ; ຄົນພວກນີ້ບໍ່ໄດ້ມີຄວາມຜູກພັນຫຍັງກັບວຽກງານຂອງພຣະເຈົ້າ ຫລື ບາງຄົນອາດຈະເປັນຄຣິສຕຽນແຕ່ພຽງນາມຊື່ເທົ່ານັ້ນ. ບາງຄົນອາດຈະເຄີຍເປັນສະມາຊິກໃນຄຣິສຕະຈັກ ແຕ່ດຽວນີ້ໄດ້ຫາຍສາບສູນໄປ. ທ່ານຈະຊ່ວຍນຳຂ່າວປະ ເສີດໃຫ້ໄປເຖິງທຸກຄົນໃນເທັກຊັດ ໄດ້ຢ່າງໃດ? ທ່ານຈະຊ່ວຍຄຣິສຕະຈັກຂອງທ່ານໄດ້ຢ່າງໃດ?

ຄວາມລອດພົ້ນໄດ້ມາເຖິງຄົນຕ່າງຊາດເພາະການບໍ່ຍອມເຊື່ອຂອງຊົນຊາດຢິວ; ຊາວຢິວພາກັນສແວງຫາຄວາມລອດແຕ່ເຂົາເຈົ້າບໍ່ໄດ້ພົບ. ທຸກຄົນສົມຄວນທີ່ຈະໄດ້ຄວາມພົ້ນຕາມແນວທາງຂອງພຣະເຈົ້າ ແຕ່ຫລາຍຄົນບໍ່ຍອມຮັບວິທີຂອງພຣະອົງ (ໂຣມ 10:16-21). ພຣະເຈົ້າຊົງເລືອກທຸກໆຄົນໄວ້ ແຕ່ພຣະອົງຊົງໃຫ້ແຕ່ລະຄົນມີຄວາມຮັບຜິດຊອບໃນການທີ່ຈະຍອມຮັບ ຫລື ຈະປະຕິເສດຂ່າວປະເສີດເຣື່ອງຄວາມລອດພົ້ນ.

## <u>ຄຳຖາມ</u>:

1. ທ່ານຄິດວ່າ ພຣະປະສົງຂອງພຣະເຈົ້າ ຕາຍຕົວບໍ່ (ບໍ່ມີປ່ຽນແປງ)? ອະທິບາຍຄຳຕອບ
2. ເປັນຫຍັງພຣະເຈົ້າຈຶ່ງເລືອກ ຢາໂຄບ ແລະບໍ່ເລືອກ ເອຊາວ? ເປັນຫຍັງພຣະເຈົ້າຈຶ່ງເລືອກ ອິຊາກ ແລະບໍ່ເລືອກ ອິດຊະມາເອນ? ຄຳຕອບຂອງທ່ານກົງກັບພຣະທັມ ໂຣມ 9:11-13, 16?
3. ພຣະເຈົ້າໃຫ້ເສຣີພາບກັບມະນຸດຫຼາຍປານໃດ? ເສຣີພາບຢ່າງບໍ່ມີຂອບເຂດບໍ່? ເສຣີພາບແບບມີຂອບເຂດບໍ່? ບໍ່ໃຫ້ເສຣີພາບ? (ເບິ່ງພຣະທັມ ໂຣມ 9:17-18 ກ່ອນຕອບຄຳຖາມ)
4. ທຸກຄົນທີ່ເອີ້ນອອກພຣະນາມຂອງພຣະເຢຊູຈະໄດ້ພົ້ນບໍ່?
5. ທ່ານຄິດວ່າ ຄຣິສຕຽນທຸກໆຄົນມີຄວາມຮັບຜິດຊອບໃນການປະກາດຂ່າວປະເສີດເຣື່ອງຂອງພຣະເຢຊູບໍ່? ເປັນຫຍັງ?

## ບົດຮຽນທີ 9

## ຄວາມເມດຕາປານີຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຣມ 11:13-36

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຣມ 11

**ຄຳຖາມເພື່ອການສຳຣວດ:** ທ່ານມີຫຍັງແດ່ທີ່ດີກວ່າຄົນທີ່ບໍ່ເປັນຄຣິສຕຽນ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອອະທິບາຍເຈດຕະນາຂອງພຣະເຈົ້າເຣື່ອງຄວາມສັມພັນຣະຫວ່າງຄຣິສຕຽນ ແລະຄົນທົ່ວໄປ

### ເຣື່ອງທີ່ກຳລັງເນັ້ນຫນັກໃນເທັກຊັສ:

. ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັສ, ໃນສະຫະຣັຖ, ແລະໃນທົ່ວໂລກ

. ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ

. ເສີມສ້າງຄອບຄົວຄຣິສຕຽນ

. ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ້ມຂື້ນ

### ຄຳນຳ

ພຣະເຈົ້າຍັງຊົງຮັກສາພຣະສັນຍາຂອງພຣະອົງທີ່ໃຫ້ໄວ້ກັບຊົນຊາດ ອິສຣາເອັນ; ພຣະເຈົ້າອາດຈະປະຕິເສດຊົນຊາດຂອງພຣະອົງໃນຊົ່ວລະຍະນີ່ງ; ແຕ່ພວກເຂົາບໍ່ໄດ້ຢູ່ໄກເກີນກວ່າພຣະເຈົ້າຈະບໍ່ສາມາດດຶງເຂົາຄືນມາ ໄດ້ອີກ; ເນື່ອງຈາກອິສຣາເອັນໄດ້ຫັນຫຼັງໃຫ້ກັບພຣະເຈົ້າ ພຣະອົງຈື່ງໄດ້ເຮັດແຜນການຂອງພຣະອົງສຳລັບຄົນ ຕ່າງຊາດ.

ສົມມຸດວ່າທ່ານມີລູກຄົນນື່ງໃນຄອບຄົວກຳລັງພິການ, ພໍ່ແມ່ຈຳເປັນຈະຕ້ອງເອົາໃຈໃສ່ເປັນພິເສດໃນການຊ່ວຍເຫຼືອຄົນທີ່ພິການນັ້ນ. ການກະທຳເຊັ່ນນີ້ ບໍ່ໄດ້ຫມາຍເຖິງວ່າພໍ່ແມ່ບໍ່ໄດ້ຮັກລູກຄົນອື່ນໆ. ເມື່ອໃດເດັກພິການສາ ມາດຊ່ວຍຕົວເອງໄດ້ຫຼາຍຂື້ນ, ພໍ່ແມ່ກໍຈະຜ່ອນເຣື່ອງການດູແລລົງຕາມລຳດັບຂອງຄວາມສາມາດຂອງເຂົາ. ນີ້ຄືພາບພົດທີ່ ພຣະເຈົ້າຊົງກະທຳຢູ່ໃນປັດຈຸບັນ. ຖ້າພຣະອົງບໍ່ຊົງຮັກ, ສົງສານ, ແລະເອົາໃຈໃສ່ເປັນພິເສດ ແລ້ວ, ພວກຊາວຕ່າງຊາດທັງຫຼາຍອາດຈະຍັງຫຼົງທາງຢູ່ຢ່າງນັບບໍ່ຖ້ວນ.

### 1. ປັດຈຸບັນນີ້ ຊົນຊາດອິສຣາເອັນບາງສ່ວນກໍຢູ່ໃນຄຣິສຕະຈັກ (ໂຣມ 11:1-12)

ໂປໂລ ຢາກໃຫ້ຜູ້ອ່ານໄດ້ຮູ້ວ່າ ພຣະເຈົ້າບໍ່ໄດ້ລືມສັນຍາທີ່ພຣະອົງຊົງມີກັບພວກອິສຣາເອັນ. ພຣະເຈົ້າບໍ່ໄດ້ປະຖີ້ມໄພ່ພົນຂອງພຣະອົງຈົນຫມົດສີ້ນ (11:1-2). ໂປໂລ ກໍເປັນຊາວຢິວ ແລະ ເຂົາເອງກໍໄດ້ມີສ່ວນຢູ່ໃນພຣະ ຣາຊອານາຈັກ ຂອງ ພຣະຄຣິດ; ຄຣິສຕຽນໃນສັດຕະວັດແລກສ່ວນຫຼາຍກໍແມ່ນຄົນຢິວ, ເພາະການປະກາດໃນ ຕອນນັ້ນແມ່ນຢູ່ໃນເຂດເຢຣູຊາເລມ ແລະ ຢູດາຍ. ຜູ້ນຳຂອງຄຣິສຕະຈັກໃນສມັຍນັ້ນຄິດວ່າຂ່າວປະເສີດແມ່ນ ເພື່ອຊົນຊາດຢິວເທົ່ານັ້ນ; ເປໂຕ, ໂປໂລ, ແລະ ບາຣະນາບາ ໄດ້ຕໍ່ສູ້ໃນເຣື່ອງນີ້ພໍສົມຄວນ (ກິຈການ 15). ທ້າຍ ສຸດທຸກຄົນກໍໄດ້ຍອມຮັບວ່າ ຂ່າວປະເສີດແມ່ນເພື່ອທຸກໆຄົນ, ຊົນຊາດຢິວ ແລະ ຊາວຕ່າງຊາດ.

ໂປໂລໄດ້ນຳເຣື່ອງຜູ້ປະກາດພຣະທັມ ເອລີຢາ ມາເປັນຕົວຢ່າງວ່າພຣະເຈົ້າບໍ່ໄດ້ຊົງລະຖີ້ມໄພ່ພົນຂອງພຣະອົງ (ໂຣມ 11:2-4). ເອລີຢາ ຄິດວ່າ ຜູ້ປະກາດພຣະທັມທັງຫມັດໄດ້ຖືກປະຫານຊີວິດ ແລະ ເຫຼືອເຂົາພຽງຄົນດຽວຢູ່ ໃນອິສຣາເອັນ. ພຣະເຈົ້າໄດ້ບອກກັບ ເອລີຢາ ວ່າພຣະອົງຍັງມີຄົນເຫຼືອຢູ່ 7000 ຄົນທີ່ບໍ່ໄດ້ຄຸເຂົ່າລົງໄຫວ້ຮູບ ບາອານ.

ໂປໂລ ສລຸບວ່າ ພຣະເຈົ້າຈະຕ້ອງໃຫ້ມີຄົນເຫຼືອຢູ່ຕລອດໄປ. ພຣະອົງຈະຮັກສາພຣະສັນຍາຜ່ານພວກ ຄົນທີ່ຍັງເຫຼືອຢູ່. ຊົນຊາດຢິວບາງສ່ວນອາດຈະປະຕິເສດພຣະເຢຊູຄຣິດ, ແຕ່ພຣະເຈົ້າຮູ້ວ່າ ໃນວັນນຶ່ງຂ້າງໜ້າ ພວກເຂົາທັງໝົດຈະ ຫັນໜ້າຄືນມາຫາພຣະອົງ.

## ຂ. ກິ່ງຕົ້ນກອກເທດປ່າຢູ່ໃນຄຣິສຕະຈັກ (ໂຣມ 11:13-24)

ປະເທດອິສຣາເອັນມີຕົ້ນກອກເທດຢ່າງຫຼວງຫຼາຍ; ເງິນຫຼຽນຂອງອິສຣາເອັນໃນສມັຍນີ້ກໍມີຮູບຕົ້ນກອກເທດ. ຕົ້ນກອກເທດມີປໂຍດຫຼາຍສໍາລັບຊີວິດໃນສມັຍຂອງໂປໂລ. ຄົນຢິວໃຊ້ນໍ້າມັນໝາກກອກເທດເພື່ອທອດອາ ຫານ ແລະໃຊ້ເປັນນໍ້າມັນສໍາລັບໂຄມໄຟ; ໄມ້ຈາກຕົ້ນກອກເທດເປັນປໂຍດສໍາລັບການສ້າງເຄື່ອງເຮືອນ. ໂປໂລ ໃຊ້ຄໍາ ປຽບທຽບຈາກຕົ້ນໝາກກອກເທດເພື່ອເປັນຕົວຢ່າງໃນການກະທໍາຂອງພຣະເຈົ້າກ່ຽວກັບແຜນຂອງພຣະອົງເຣື່ອງ ຄວາມລອດພົ້ນ.

ໂປໂລເປັນອັຄສາວົກເພື່ອຊາວຕ່າງຊາດ; ແຕ່ບໍ່ໄດ້ໝາຍຄວາມວ່າໂປໂລຈະບໍ່ປະກາດກັບຊົນຊາດຢິວ. ໂປ ໂລເອງເຄີຍໄດ້ປະກາດຕາມໂຮງທັມຂອງຊາວຢິວ; ແຕ່ເມື່ອຊາວຢິວພາກັນປະຕິເສດຂ່າວປະເສີດ, ເຂົາຈຶ່ງ ຕັ້ງໃຈໄປ ປະກາດກັບຊາວຕ່າງຊາດ. ຄວາມຫວັງຂອງໂປໂລຄື ໃນຂະນະທີ່ເຂົາໄປປະກາດກັບຄົນຕ່າງຊາດຢູ່ ນັ້ນ ຄົນຢິວຈະ ພາກັນເລັ້ມສົນໃຈເຣື່ອງຂ່າວປະເສີດ. ຊາວຢິວບາງຄົນອາດຈະໄດ້ພົ້ນເພາະເກີດຄວາມເຫິງຫວງ (11:14).

ໂປໂລໃຊ້ຄໍາປຽບທຽບເຣື່ອງຕົ້ນກອກເທດໃນ ໂຣມ 11:17-24 ເພື່ອເຕືອນຄົນຕ່າງຊາດ ເພາະຢ້ານເຂົາເຈົ້າ ຈະພາກັນອວດດີ. ຊົນຊາດຢິວຄືກິ່ງຕົ້ນກອກເທດທີ່ພຣະເຈົ້າຊົງເລືອກໄວ້; ກິ່ງເຫລົ່ານັ້ນຖືກຫັກອອກເພາະຄວາມ ບໍ່ ເຊື່ອ. ຄົນຕ່າງຊາດປຽບເໝືອນກິ່ງຕົ້ນກອກເທດປ່າ ທີ່ຖືກນໍາເອົາມາແທນກິ່ງເດີມທີ່ພຣະເຈົ້າໄດ້ຊົງຫັກອອກ; ສະ ນັ້ນຄົນຕ່າງຊາດກໍເປັນໜີ້ບຸນຄຸນກັບຄົນຢິວ ແລະສາສນາ ຢູດາຍຊຶ່ງເປັນຕົ້ນກໍາເນີດຂອງຄຣິສຕຽນ. ອີກປະ ການ ນຶ່ງ ການນໍາເອົາກິ່ງຕົ້ນກອກປ່າ ມາຕໍ່ເຂົ້າກັບຕົ້ນກອກພັນດີ ເປັນສິ່ງທີ່ຜິດທັມມະຊາດ; ຖ້າພວກຊາວຕ່າງ ຊາດບໍ່ລະ ວັງ ພວກເຂົາກໍຈະຖືກຫັກອອກເຊັ່ນກັນ ເພາະພຣະເຈົ້າຊົງຮັກຄົນຕ່າງຊາດແລະຊົນຊາດຢິວເທົ່າໆກັນ.

ຊົນຊາດຢິວ ເຊື່ອວ່າພຣະເຈົ້າຊົງເລືອກພວກເຂົາໄວ້ເພາະຊາດຢິວ ດີກວ່າຊົນຊາດອື່ນໆ; ຄວາມຈອງຫອງ ເຮັດໃຫ້ເຂົາລືມຕົວວ່າພຣະເຈົ້າຊົງເລືອກພວກເຂົາໄວ້ເພື່ອປະກາດເຣື່ອງພຣະເຈົ້າໃຫ້ກັບທຸກຄົນໆໃນໂລກ. ພຣະ ເຢ ຊູຄຣິດ ຄືພຣະຜູ້ໂຜດໃຫ້ພົ້ນທີ່ຊາວຢິວຈະນໍາໄປປະກາດໃຫ້ທົ່ວໂລກ; ຊົນຊາດຢິວໄດ້ຖືກຕັດອອກຈາກແຜນ ການ ໂຜດໂລກຂອງພຣະເຈົ້າເພາະຄວາມບໍ່ເຊື່ອ ແລະຄວາມບໍ່ຊື່ສັດຕໍ່ພຣະບັນຍັດຂອງພວກເຂົາ. ພວກເຂົາໄດ້ ປະຕິເສດບໍ່ ຍອມຮັບພຣະເຢຊູ ແລະ ບໍ່ຍອມປະກາດຂ່າວປະເສີດເຣື່ອງພຣະຄຣິດໃຫ້ກັບຊາວໂລກ. ໂປໂລໄດ້ ເຕືອນຊາວຕ່າງ ຊາດວ່າ ສິ່ງທີ່ພຣະເຈົ້າໄດ້ຊົງກະທໍາກັບຊົນຊາດຢິວ ພຣະອົງອາດຈະທໍາກັບຄົນຕ່າງຊາດໄດ້ ເໝືອນກັນ. ຊາວຕ່າງ ຊາດ ແລະ ຊາວຢິວໄດ້ຮັບຄວາມພົ້ນເພາະຄວາມເມດຕາຂອງພຣະເຈົ້າ (11:22).

ຄຣິສຕຽນບາງກຸ່ມສັ່ງສອນເຣື່ອງຄວາມເມດຕາ, ຄວາມຮັກ, ຄຸນຄວາມດີ, ຄວາມອົດກັ້ນໄວ້ນານ, ແລະການ ອະພັຍໂທດຂອງພຣະເຈົ້າ ແຕ່ບໍ່ໄດ້ສັ່ງສອນເຣື່ອງຄວາມເຄັ່ງຄັດຂອງ ພຣະອົງ; ຫຼາຍຄົນຈຶ່ງຫຼົງໄປວ່າໃນພຣະ ເຈົ້າບໍ່ ມີຄວາມໂກດຮ້າຍ. ຄຣິສຕຽນອີກກຸ່ມນຶ່ງຈະສອນແຕ່ເຣື່ອງຄວາມເຄັ່ງຄັດ ແລະໂທດຮ້າຍຂອງພຣະ ເຈົ້າ. ການສັ່ງ ສອນແຕ່ເຣື່ອງຄວາມໂທດຮ້າຍຢ່າງດຽວສາມາດເຮັດໃຫ້ຜູ້ຟັງບໍ່ໄດ້ເຫັນພຣະເຈົ້າຢ່າງສົມບູນ. ພຣະເຈົ້າ ຊົງມີຄວາມ ເມດຕາ ແລະຊົງມີຄວາມເຄັ່ງຄັດຕາມທີ່ສະຖານະການຮຽກຮ້ອງ. ພຣະເຈົ້າຊົງສະແດງຄວາມໂທດ ຮ້າຍກັບຊົນຊາດ ຢິວເພາະພວກເຂົາບໍ່ເຊື່ອຟັງພຣະອົງ; ພຣະເຈົ້າຍັງເປີດໂອກາດໃຫ້ພວກເຂົາຢູ່ສເມີ (11:23). ພຣະເຈົ້າມີສິດແລະອໍາ ນາດໃນການນໍາຊົນຊາດອິສຣາເອັນກັບຄືນຫາພຣະອົງ. ການເອົາກິ່ງຕົ້ນກອກປ່າມາເຂົ້າ ກັບຕົ້ນກອກພັນດີເປັນ ການເຮັດຜິດທັມມະຊາດ; ແຕ່ພຣະເຈົ້າໄດ້ກະທໍາເຊັ່ນນັ້ນ. ດັ່ງນັ້ນການເອົາກິ່ງທີ່ເປັນກິ່ງ ເດີມມາຕໍ່ເຂົ້າກັບຕົ້ນມັນເອງ ກໍຄືງຈະງ່າຍກວ່າ (11:24); ໂປໂລຕິຄວາມໝາຍວ່າ ພຣະເຈົ້າຈະຕ້ອງນໍາຊົນ ຊາດອິສຣາເອັນກັບຄືນມາຫາພຣະ ອົງອີກຢ່າງແນ່ນອນ.

## 3. ແຜນການຂອງພຣະເຈົ້າສຳລັບພວກອິສຣາເອັນ (ໂຣມ 11:25-33)

ພຣະທັມໂຣມ 11:25-33 ເວົ້າເຖິງສິ່ງສຸດທ້າຍ ໂດຍສະເພາະແມ່ນເຣື່ອງກ່ຽວກັບຊົນຊາດຢິວເວລາພຣະເຢຊູຄຣິດສະເດັດກັບມາຄັ້ງທີສອງ. ຄຣິສຕຽນສ່ວນຫຼາຍເຊື່ອວ່າ ພຣະອົງຈະເອົາຄຣິສຕະຈັກ (ພ້ອມດ້ວຍໄພ່ພົນ) ຂອງພຣະອົງອອກຈາກໂລກນີ້ໄປຢູ່ສວັນ; ພຣະເຢຊູຈະປົກຄອງໂລກເປັນເວລາພັນປີ; ແລ້ວພຣະອົງຈະນຳຊົນຊາດ ຢິວກັບຄືນມາຫາພຣະເຈົ້າ. ແຕ່ມີ ບັບຕິດອີກພວກນຶ່ງເຊື່ອວ່າ ຊົນຊາດຢິວຈະກັບຄືນຫາພຣະເຈົ້າກ່ອນພຣະເຢຊູຈະ ສະເດັດກັບມາຄັ້ງທີສອງ; ແລ້ວພຣະເຢຊູຈະມາຮັບເອົາຜູ້ທີ່ເຊື່ອ, ຢິວ ແລະ ຕ່າງຊາດ, ອອກໄປຈາກໂລກພ້ອມໆ ກັນ. ຫຼັງຈາກນັ້ນພຣະເຈົ້າຈະທຳການພິພາກສາໂລກມະນຸດ.

### ຢິວ ແລະ ຄຣິສຕຽນ

ມີຄົນຊາດຢິວຈຳນວນຫຼວງຫຼາຍອາສັຍຢູ່ໃນຣັຖເທັກຊັດ. ຄຣິສຕຽນຄວນສະແດງຄວາມຮັກແພງກັບພວກເຂົາ ເຈົ້າ. ຄົນຢິວບໍ່ໄດ້ແຕກຕ່າງກັບຄົນທົ່ວໆໄປ; ການເປັນມິດກັບຄົນກຸ່ມນີ້ຈະໃຫ້ໂອກາດໃນການເປັນພະຍານເຣື່ອງ ພຣະເຢຊູຄຣິດ. ຄຣິສຕຽນບາງຄົນຍັງມີຄວາມຂົມຂື່ນ ວ່າຊົນຊາດຢິວໄດ້ປະຫານຊີວິດພຣະເຢຊູ; ແຕ່ ພຣະທັມໄດ້ສອນໃຫ້ຮູ້ວ່າ ຄວາມຜິດບາບຂອງມະນຸດປະຫານພຣະເຢຊູ. ພຣະເຢຊູໄດ້ສະລະພຣະຊົນເພື່ອຄວາມ ຜິດບາບຂອງພວກເຮົາ. ຊົນຊາດຢິວ ແລະ ໂຣມ ເປັນພຽງເຄື່ອງມືທີ່ພຣະເຈົ້າຊົງໃຊ້ໃນແຜນການໂຜດໂລກມະ ນຸດຂອງພຣະອົງ. ຄົນບາບ ແລະ ຄວາມຜິດບາບຄືຜູ້ປະຫານພຣະເຢຊູ. ທ່ານມີໝູ່ເພື່ອນເປັນຄົນຊາວຢິວບໍ່? ທ່ານໄດ້ອະທິຖານ ແລະ ຂໍພຣະເຈົ້າໃຫ້ນຳພາທ່ານໃນການເປັນພະຍານໃຫ້ກັບເຂົາບໍ່?

ການເຂົ້າໃຈ ແລະການຕີຄວາມໝາຍພຣະທັມຄັມພີຂອງແຕ່ລະນິກາຍອາດຈະແຕກຕ່າງກັນ, ແຕ່ພວກເຮົາໝັ້ນໃຈໄດ້ວ່າພຣະເຈົ້າມີພຣະປະສົງສຳລັບຊົນຊາດຢິວໃນແຜນການໂຜດໂລກຂອງພຣະອົງ. ພຣະເຈົ້າຈະຊົງ ໃຫ້ສິ່ງເຫລົ່ານີ້ເກີດຂຶ້ນ (11:25-26). ພຣະເຈົ້າຊົງເຮັດໃຫ້ອິສຣາເອັນໃຈແຂງກະດ້າງ ເພື່ອພຣະອົງຈະໄດ້ໂຜດຊາວຕ່າງຊາດໃຫ້ຄົບຕາມຈຳນວນ (11:25). ແຕ່ບໍ່ແມ່ນ ອິສຣາເອັນທັງໝົດຈະມີໃຈແຂງກະດ້າງ; ເພາະຫຼາຍ ຄົນໄດ້ຮັບພຣະຄຣິດ ແລະອີກຫຼາຍຄົນກໍກຳລັງເຂົ້າມາຫາພຣະອົງ. ໃນທີ່ສຸດຊົນຊາດອິສຣາເອັນທັງໝົດຈະໄດ້ ພົ້ນ (11:26); ພຣະເຈົ້າຊົງສັດຊື່ຕໍ່ພຣະສັນຍາ; ສະນັ້ນ ອິສຣາເອັນຈະໄດ້ຮັບຄວາມພົ້ນເພາະຄວາມເຊື່ອໃນອົງ ພຣະເຢຊູຄຣິດ.

## 4. ຄຳສລຸບຂອງໂປໂລ: ກຽດຕິຍົດຈົ່ງມີແກ່ພຣະເຈົ້າ (ໂຣມ 11:33-36)

ພຣະທັມພາກນີ້ເປັນຄຳສັລເສີນຕໍ່ພຣະເຈົ້າ. ໂປໂລ, ຮ່ວມທັງພວກເຮົາ, ບໍ່ສາມາດເຂົ້າໃຈ ຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ. ໂຢບເຂົ້າໃຈເຣື່ອງນີ້ດີ (ໂຢບ 11:7-9);ຜູ້ປະກາດພຣະທັມເອຊາຢາ ກໍໄດ້ສະແດງຄວາມຮູ້ ສຶກຂອງເພິ່ນໃນ ເອຊາຢາ 55:8-9. ຄວາມເຂົ້າໃຈ ແລະສະຕິປັນຍາຂອງພຣະເຈົ້າຢູ່ເໜືອກວ່າຄວາມສາມາດ ຂອງມະນຸດທັມມະດາ; ພວກເຮົາບໍ່ສາມາດເຂົ້າໃຈແນວທາງຂອງພຣະເຈົ້າໄດ້ຢ່າງບໍຣິບູນ; ພວກເຮົາຕ້ອງໄດ້ ອາສັຍຄວາມເຊື່ອແລະໄວ້ວາງໃຈ.

ໃນພຣະທັມໂຣມ 9, ໂປໂລໄດ້ເວົ້າເຣື່ອງອຳນາດອັນສູງສຸດຂອງພຣະເຈົ້າ; ພຣະອົງໃຫ້ຄວາມເມດຕາຕໍ່ຜູ້ທີ່ພຣະອົງປາຖນາຈະໃຫ້. ໃນພຣະທັມໂຣມ 10, ໂປໂລໄດ້ເວົ້າເຣື່ອງຄວາມຮັບຜິດຊອບຂອງມະນຸດໃນການຮັບ ເອົາຂ່າວປະເສີດເຣື່ອງຄວາມລອດພົ້ນ. ໃນພຣະທັມ ໂຣມ 11, ໂປໂລ ສລຸບວ່າທຸກຢ່າງທີ່ກ່າວມາລ້ວນແຕ່ເປັນ ສິ່ງເລິກລັບ ແລະເກີນຄວາມເຂົ້າໃຈຂອງມະນຸດ. ແຕ່ສິ່ງນຶ່ງທີ່ພວກເຮົາຮູ້ ຄື ພຣະເຈົ້າຈະເຮັດແຕ່ສິ່ງຖືກຕ້ອງ; ມະນຸດອາດຈະບໍ່ເຂົ້າໃຈພຣະອົງ; ແຕ່ມະນຸດບໍ່ມີສ່ວນຮັບຜິດຊອບໃນການກະທຳຂອງພຣະອົງ. ພຣະເຈົ້າບໍ່ຕ້ອງ ການມະນຸດມາໃຫ້ການປຶກສາ; ພຣະອົງຊົງສົມບູນທຸກຢ່າງ. ສິ່ງທີ່ພວກເຮົາຄວນເຮັດຄືຂອບພຣະຄຸນ ພຣະເຈົ້າ ສຳລັບພຣະຄຸນແລະຄວາມຮັກທີ່ພຣະອົງໄດ້ຊົງປະທານໃຫ້ແກ່ພວກເຮົາຜູ້ທີ່ຍອມຮັບເຊື່ອໃນອົງພຣະເຢຊູຄຣິດ; ແລະການປະກາດຂ່າວປະ

ເສີດເຣື່ອງຄວາມລອດພົ້ນຈະຕ້ອງດຳເນີນຕໍ່ໄປ; ນີ້ຄືພາຣະກິດທີ່ພຣະຄຣິດໄດ້ຊົງມອບ ໃຫ້ຄຣິສຕຽນທຸກໆຄົນ.

ທ່ານຈະຕອບຄຳຖາມທີ່ວ່າ "ທ່ານຄິດວ່າທ່ານມີຫຍັງແດ່ທີ່ດີກ່ວາຄົນທີ່ບໍ່ເປັນຄຣິສຕຽນ" ໄດ້ຢ່າງໃດ? ທີ່ຈິງແລ້ວໃນຕົວພວກເຮົາເອງເຮົາກໍບໍ່ໄດ້ມີຫຍັງດີເປັນພິເສດກ່ວາຄົນທົ່ວໆໄປດອກ; ແຕ່ເພາະຄວາມເຊື່ອໃນອົງພຣະ ເຢຊູຄຣິດ, ເຮົາຮູ້ວ່າເວລາສຸດທ້າຍພວກເຮົາຈະມີດີກ່ວາຄົນທີ່ບໍ່ເປັນຄຣິສຕຽນແນ່ນອນ. ພຣະເຈົ້າຊົງໂຜດພວກ ເຮົາໃຫ້ພົ້ນເພາະພຣະອົງຊົງເປັນພຣະເຈົ້າ ແລະບໍ່ໃຊ່ວ່າພວກເຮົາດີກ່ວາ ພວກຢິວ, ພວກພາມ, ພວກມຸສະລິມ, ຫຼື ພວກພຸດ. ຄວາມລອດພົ້ນມາຈາກພຣະເຈົ້າແຕ່ຕົ້ນເຖິງປາຍ; ພຣະອົງຊົງກະທຳທຸກຢ່າງ; ແຕ່ພວກເຮົາຈະ ຕ້ອງຕອບຮັບພຣະອົງດ້ວຍຄວາມເຊື່ອ.

## <u>ຄຳຖາມ:</u>

1. ທ່ານເຄີຍຮູ້ ຄົນຢິວທີ່ມາເປັນຄຣິສຕຽນບໍ່?
2. ທ່ານເຊື່ອວ່າພຣະເຈົ້າໄດ້ປະຕິເສດຊົນຊາດຢິວບໍ່? ຕລອດໄປບໍ່? ທ່ານຄິດວ່າພຣະເຈົ້າມີແຜນແນວອື່ນໄວ້ສຳລັບ ຄວາມພົ້ນຂອງ ຄົນຢິວບໍ່?
3. ທ່ານຕຽມພ້ອມທີ່ຈະຍອມຮັບວ່າ ຄວາມຫມາຍຂອງພຣະທັມບາງຕອນຈະເປັນສິ່ງເລິກລັບສຳລັບພວກເຮົາ ທີ່ຢູ່ໃນແຜ່ນດິນໂລກ ຕລອດໄປບໍ່?
4. ທ່ານຄິດວ່າຄະນະບັບຕິດໃນເທັກຊັດສາມາດທີ່ຈະປະກາດພຣະທັມກັບຊົນຊາດຢິວໄດ້ດີກ່ວາທີ່ຜ່ານມາບໍ່?

# ຖ້າຢ່າງນັ້ນເຮົາຈະດຳລົງຊີວິດຢ່າງໃດ?

ບົດຮຽນທີ 10

## ມອບຕົວເອງໃຫ້ປະກອບສ່ວນໃນກຸ່ມ- ຣວມໝູ່

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 12:1-8

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ໂຣມ 12:1-8

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະກິດຕິຄຸນມີຢູ່ໃນແສງສວ່າງຂອງພຣະເຈົ້າ, ບໍ່ວ່າຈະເປັນສ່ວນຕົວຫລື ສ່ວນຣວມ ຄຣິສຕຽນຄວນຈະມອບຕົວເອງເຂົ້າໃນການຮັບໃຊ້ພຣະເຈົ້າ

<u>ຄຳຖາມເພື່ອການສຳຣວດ:</u> ພຣະຄຸນຂອງພຣະເຈົ້າຈະກໍ່ຮ່າງສ້າງຕົວໃນຊີວິດຂອງບຸກຄົນນັ້ນຢ່າງໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຊ່ວຍໃນການຕັດສິນ ເສັ້ນທາງທີ່ທ່ານຈະມອບຕົວເອງໃຫ້ມີຄວາມຮັບຜິດຊອບໃນພຣະຄຸນອັນເຫລືອລົ້ນຂອງພຣະເຈົ້າ.

### <u>ຄຳນຳ</u>

ພຣະກະຣຸນາຄຸນໄດ້ປາກົດອອກມາໃນອົງພຣະເຢຊູ ໃນການຖວາຍຕົວຊຶ່ງເປັນໜ້າທີ່ຮັບຜິດຊອບ. ຄຳວ່າຮັບຜິດຊອບແມ່ນ ການຍອມມອບຕົວ ທີ່ຈະເຮັດຕາມນ້ຳພຣະທັຍຂອງພຣະເຈົ້າ, ບໍ່ແມ່ນຕາມໃຈຕົວເອງ, ຫລືຕາມຄວາມຄິດຂອງໂລກນີ້. ການມອບຖວາຍນີ້ ແມ່ນສະແດງອອກເຖິງຄວາມເຂົ້າໃຈຢ່າງຊາບຊຶ້ງສ່ວນຕົວ ໃນຄຣິສຕະຈັກ.

ຄຣິສຕະຈັກຂອງຂ້າພະເຈົ້າ ໄດ້ຈັດມີການຫາເງິນຂຶ້ນປີນຶ່ງສອງເທື່ອ ເພື່ອໃຊ້ສອຍໃນຄຣິສຕະຈັກ ແລະ ເພື່ອຊ່ວຍໃຫ້ການໄປປະກອບສ່ວນອົບຮົມ, ສັມມາ, ສຶກສາ ໃນທີ່ຕ່າງໆໃຫ້ໄດ້ຮັບຄວາມສະດວກສະບາຍຂຶ້ນ. ວັນນຶ່ງ ຂ້າພະເຈົ້າຕ້ອງການໆຊ່ວຍເຫລືອ ຄືຣົດຂົນຂອງກັບບ້ານໃນເວລາທ່ຽງຄືນ. ຂ້າພະເຈົ້າບໍ່ຢາກຣົບກວນຜູ້ທີ່ຈະໄປວຽກງານໃນວັນຕໍ່ໄປ, ຂ້າພະເຈົ້າຈຶ່ງໄດ້ປະກາດໃນຄຣິສຕະຈັກຂໍຄວາມຊ່ວຍເຫລືອ. ຂອບພຣະຄຸນພຣະເຈົ້າ ຣົດທີ່ພວກເຮົາຕ້ອງການກໍມີພຽງພໍ ແລະຂ້າພະເຈົ້າຍັງໄດ້ຍິນສຽງນຶ່ງດັງຂຶ້ນມາຈາກຂ້າງຫລັງວ່າ: ອາຈານເຄື່ອງພວກເຮົາໝົດທໍ່ນີ້ບໍ່? ຄຳຖາມນີ້ເຮັດໃຫ້ຂ້າພະເຈົ້າເຫັນເຖິງການຍອມຖວາຍຕົວ ແມ້ກະທັ້ງທ່ຽງຄືນກໍຍັງອົດສາລຸກຂຶ້ນມາຊ່ວຍ.

ການປະກອບສ່ວນເຮັດວຽກງານຂອງພຣະເຈົ້າແມ່ນການສະແດງເຖິງອອກຮູບຮ່າງຂອງພຣະຄຸນຂອງພຣະເຈົ້າທີ່ມີຢູ່ໃນຕົວຂອງເຮົາ. ທ່ານເຄີຍຖືກຄຣິສຕະຈັກ ຮຽກຮ້ອງໃຫ້ຊ່ວຍວຽກງານຫລືບໍ່ ? ເມື່ອທ່ານຖືກຮຽກຮ້ອງໃຫ້ຊ່ວຍ ທ່ານມີປະຕິກິຣິຍາຢ່າງໃດ?

### <u>ຕັກເຕືອນໃຫ້ຮັບຜິດຊອບໃນພຣະຄຸນຂອງພຣະເຈົ້າ (12: 1-2)</u>

ໃນເມື່ອພວກເຮົາຫາກເຫັນຄຳຂຶ້ນຕົ້ນວ່າ "ເຫດສັນນັ້ນ" ຢູ່ໃນໂຣມບົດ 12:1 ນັ້ນ , ເປັນເຄື່ອງໝາຍບອກວ່າ ຈະໄດ້ລົງທ້າຍໃນການຂຽນ ຂອງອາຈານໂປໂລ, ຂອງໃນບົດທີ 1 ເຖິງ ບົດທີ 11 . ອາຈານໂປໂລໄດ້ກ່າວ ເຖິງພຣະຄຸນອັນຍິ່ງໃຫຍ່ຂອງພຣະເຈົ້າ ໂດຍຜ່ານທາງພຣະເຢຊູຄຣິດ. ລາວໄດ້ຊັກຊວນຊາວໂຣມທີ່ໄດ້ອ່ານ ແລະໃຫ້ມີຄວາມຮັບຜິດຊອບຢ່າງແຂງແຮງ. ເພື່ອເຂົາເຈົ້າທັງຫລາຍຈະໄດ້ຖວາຍຕົວ ແລະດຳເນີນ

ຊີວິດຕາມຊອບພຣະທັຍຂອງພຣະເຈົ້າ.

ໂປໂລກ່າວດັ່ງນີ້ກໍເພາະລາວເຫັນວ່າການເປັນຄຣິສຕຽນຂອງຊາວໂຣມຈະກາຍເປັນຄຣິສຕຽນຕາມພິທີຊື່ໆ, ຊຶ່ງບໍ່ໄດ້ມີການຖວາຍຕົວຢ່າງແທ້ຈິງ.

ການຖວາຍຕົວທີ່ແທ້ຈິງນັ້ນ ແມ່ນການມີຊີວິດທີ່ພຣະເຈົ້າຊົງປ່ຽນແປງ ແລະຮູ້ເຖິງນ້ຳພຣະທັຍຂອງພຣະເຈົ້າ. ຂ້າພະເຈົ້າເຂົ້າໃຈວ່າອາຈານໂປໂລຄົງຈະກ່າວກ່ຽວກັບການປ່ຽນແປງນີ້ໃນເອເຟໂຊ 4:23. ການປ່ຽນແປງທີ່ມີຜົນນັ້ນກໍຄືແນວຄິດຂອງເຮົາໄດ້ສ້າງຂຶ້ນມາໃຫມ່ໂດຍການນຳພາຂອງພຣະວິນຍານບໍຣິສຸດ ແລ້ວພວກເຮົາກໍກ້າວໄປສູ່ການເຊື່ອຟັງ. ຈະພົບການເຊື່ອຟັງນີ້ໄດ້ກໍຕໍ່ເມື່ອບຸກຄົນນັ້ນຫາກມີຄວາມເຊື່ອ. ຈະພົບຄວາມເຊື່ອໄດ້ກໍຕໍ່ເມື່ອຄົນນັ້ນຫາກເຮັດຕາມນ້ຳພຣະທັຍຂອງພຣະເຈົ້າ. ດັ່ງນັ້ນແຫລະ ການເຊື່ອຟັງ ຈຳເປັນຕ້ອງໄດ້ມີການປະຕິບັດໃນການດຳເນີນຊີວິດຕາມນ້ຳພຣະທັຍຂອງພຣະເຈົ້າ.

ໂຣມບົດ 12:1-2 ເປັນຄຳເຕືອນທີ່ຈຳເປັນຫລາຍສຳລັບຊາວໂຣມ ແລະກໍຍັງເປັນສິ່ງຈຳເປັນສຳລັບການດຳເນີນຊີວິດຄຣິສຕຽນທີ່ຖືກຮຽກເອີ້ນ. ພວກເຮົາຈຳເປັນທີ່ສຸດທີ່ຕ້ອງກະທຳ. ພວກເຮົາຖືກເອີ້ນໃຫ້ອອກມາເປັນພາກສ່ວນຂອງພຣະເຢຊູຄຣິດ. ການດຳເນີນຊີວິດຕາມຢ່າງຂອງຊາວໂລກແມ່ນຕ້ອງຕົກໄປຢ່າງຂາດຂັ້ນ ແລະການດຳເນີນຊີວິດໃນພຣະເຈົ້າຕ້ອງດຳເນີນຕລອດໄປ.

ອາຈານໂປໂລຍັງໄດ້ຕັກເຕືອນຄຣິສຕຽນຊາວໂຣມ ໃຫ້ມີການພົວພັນຊຶ່ງກັນແລະກັນ ໂຣມ 15:1-13 ບໍ່ວ່າຈະເປັນຢິວຫລືຄົນຕ່າງຊາດ ກໍເປັນຄົນຂອງພຣະເຈົ້າ ແລະຢູ່ໃນແຜນການຂອງຄວາມລອດຄືກັນຫມົດທຸກຄົນ. ຄົນຂອງພຣະເຈົ້າ ຢິວຫລືຕ່າງຊາດ, ເຂັ້ມແຂງຫລືອ່ອນແອ ກໍຕາມຕ້ອງນະມັສການພຣະເຈົ້າ ແລະມີຄວາມສັມພັນຊຶ່ງກັນແລະກັນ.

ຄວາມສັມພັນກັນນີ້ ພວກເຮົາຈະເຫັນໄດ້ຢູ່ບ່ອນໃດ? ນອກຈາກພວກເຮົາຈະມາຮ່ວມກັນທີ່ໂບດ ທີ່ຄຣິສຈັກຂອງພຣະອົງ. ບໍ່ແມ່ນຮູ້ຈັກພຣະເຈົ້າແລ້ວຈະຢູ່ຄົນດຽວ ພວກເຮົາຕ້ອງຮ່ວມກັນທຳພຣະຣາຊກິດຂອງພຣະເຈົ້າໃນໂລກນີ້ໃຫ້ສຳເຣັດຫນ້າທີ່. ຕ້ອງເຂົ້າຮ່ວມເປັນສະມາຊິກຂອງໂບດຢ່າງຖາວອນ.

## <u>ສຳຫລວດຕົວເອງເຖິງຂອງປະທານຝ່າຍວິນຍານ (12:3-5)</u>

ສຳຄັນທີ່ສຸດຄື ຄຣິສຕຽນທຸກຄົນຕ້ອງເຂົ້າໃຈເຖິງ "ຂນາດຂອງຄວາມເຊື່ອ". ຂນາດຂອງຄວາມເຊື່ອນີ້ຈະພາໃຫ້ເຮົາຮູ້ເຖິງຂອງພຣະຣາຊທານຝ່າຍວິນຍານ ທີ່ຄຣິສຕຽນທຸກຄົນມີຢູ່. ຄຣິສຕຽນເປັນພາກສ່ວນຂອງຮ່າງກາຍ. ເມື່ອເວລາຄຣິສຕຽນຮັບເອົາພຣະເຈົ້າດ້ວຍຄວາມເຊື່ອ ແລ້ວດ້ວຍພຣະຄຸນ ພຣະວິນຍານບໍຣິສຸດ ຈຶ່ງໄດ້ເຮັດໃຫ້ເຂົາມີຫນ້າທີ່ໃນພຣະກາຍຂອງພຣະອົງ ຊຶ່ງມີຫນ້າທີ່ແຕກຕ່າງກັນໄປໃນຄຣິສຕະຈັກ.

ໃນຕົວຂອງຄຣິສຕຽນຈະບໍ່ມີຫ້ອງຫວ່າງສຳລັບຄຳວ່າ ອວດຕົວ, ຖືຕົວ, ຍົ່ງຍະໂສ, ຈອງຫອງ. ດັ່ງນັ້ນໂປໂລຈຶ່ງໄດ້ຕັກເຕືອນຜູ້ທີ່ເຊື່ອວ່າ: "ຢ່າໄດ້ຄິດຖືຕົວເກີນທີ່ຕົນຄວນຈະຄິດ" (12:3). ເຖິງປານນັ້ນກໍຄຣິສຕຽນຍັງມີການຜິດພາດໃນການດຳເນີນຊີວິດຢູ່. ໂປໂລຍັງໄດ້ກ່າວເຖິງພາກສ່ວນຂອງພຣະກາຍພຣະອົງວ່າ ຈະມີຂອງປະທານຢ່າງດຽວຫລືຫລາຍຢ່າງ ກໍຕາມ ຂໍໃຫ້ສົມຂນາດແຫ່ງຄວາມເຊື່ອ.

ຄຣິສຕຽນທຸກຄົນມີຫນ້າທີ່ ຕໍ່ພຣະກາຍຂອງພຣະຄຣິດ. ພວກເຮົາແຕ່ລະຄົນແມ່ນຂອງພຣະຣາຊທານຝ່າຍວິນຍານ. ທຸກໆຄົນທີ່ເປັນພາກສ່ວນຂອງຄຣິສຕະຈັກ ແລະໄດ້ຮັບພລັງໂດຍພຣະວິນຍານບໍຣິສຸດ ທຳງານໃຫ້ກັບພຣະເຈົ້າຜູ້ຊົງພຣະຊົນຢູ່. ແນ່ນອນ ຂອງປະທານຂອງພວກເຮົາແຕກຕ່າງກັນ(12:4-5) ແມ່ນວ່າຈະແຕກຕ່າງກັນກໍຕາມ ແຕ່ພວກເຮົາກໍນຳມາໃຊ້ ເພື່ອຈຸດປະສົງອັນດຽວກັນ ຄືເຮັດໃຫ້ພຣະກາຍຂອງພຣະອົງຈະເຣີນຂຶ້ນ.(1ໂກຣິນໂທ 12:7)

## <u>ສ່ວນຕົວ ແລະ ສ່ວນຣວມ (12: 4-5)</u>

ເປັນການດີທີ່ສຸດທີ່ໃນພຣະກາຍຂອງພຣະເຢຊູຄຣິດມີຂອງພຣະຣາຊທານແຕກຕ່າງກັນໄປ. ໃນຈຸດພິເສດຂອງເຮົາ, ເຮົາກໍບໍ່ເໝືອນຄົນອື່ນໆ. ຂອງພຣະຣາຊທານທີ່ເຮົາໄດ້ຮັບກໍບໍ່ເໝືອນຂອງຄົນອື່ນໆ. ເຖິງແມ່ນວ່າຈະໄດ້ຮັບຂອງພຣະຣາຊທານຢ່າງດຽວກັນ ແຕ່ການນຳມາໃຊ້ກໍອາດຈະແຕກຕ່າງກັນໄປ ເພາະເຮົາມີລັກສະນະ, ມີແນວຄິດ, ມີສຸຂພາບ, ມີຄວາມສາມາດ ແຕກຕ່າງກັນ.

ຄວາມແຕກຕ່າງນີ້ລະ ເຮັດໃຫ້ເຮົາມີເອກລັກ. ອາຈານໂປໂລໄດ້ໃຊ້ສຳນວນຄຳເວົ້າວ່າ ໃນຮ່າງກາຍຂອງມະນຸດເຮົາມີຫລາຍພາກສ່ວນ ແຕ່ມີໜ້າທີ່ແຕກຕ່າງກັນ ອັນນີ້ກໍສະແດງເຖິງຄວາມເປັນເອກລັກ ແລະການເຮັດວຽກຮ່ວມກັນ. ພວກເຮົາມີແນວຄິດຈິດໃຈແຕກຕ່າງກັນ ແຕ່ເຮັດວຽກຮ່ວມກັນທຳງານຢ່າງດຽວກັນ ແລະຢູ່ໃນພຣະກາຍຂອງພຣະຄຣິດອົງດຽວກັນ.

ທ້າຍສຸດ, ໃນ ຂໍ້ 5 ໄດ້ກ່າວວ່າ "ພວກເຮົາຜູ້ເປັນຫລາຍຄົນກໍຍັງເປັນຮ່າງກາຍອັນດຽວໃນພຣະຄຣິດ ແລະເປັນອະວັຍະວະແກ່ກັນແລະກັນສັນນັ້ນ." ເຮົາຜູ້ເປັນຫລາຍຄົນ ແຕ່ພວກເຮົາຈຳເປັນຕ້ອງເຮັດໜ້າທີ່ຮ່ວມກັນກັບຫລາຍຄົນໃນຄຣິສຕະຈັກ.

## <u>ຕ້ອງໃຊ້ຂອງພຣະຣາຊທານ (12:6-8)</u>

ອາຈານໂປໂລໄດ້ກ່າວໄວ້ແຕ່ຂ້າງຕົ້ນແລ້ວວ່າ "ຕາມຂນາດຂອງຄວາມເຊື່ອ" (12:3) ບັດນີ້ລາວໄດ້ກ່າວວ່າ "ຕາມພຣະຄຸນທີ່ໄດ້ຊົງໂຜດປະທານແກ່ເຮົາ" (12:6) ໃນຂໍ້ຄວາມເຫລົ່ານີ້ໂປໂລມີຈຸດປະສົງຈະເຕືອນພວກເຮົາທຸກຄົນ ໃຫ້ປະຕິບັດງານດ້ວຍຄວາມເຊື່ອຕາມພຣະຄຸນທີ່ໄດ້ຊົງປະທານໃຫ້ແກ່ເຮົາ.

ຈະເປັນການປະກາດພຣະທັມ, ຈະເປັນການປະຕິບັດ, ຈະເປັນການສັ່ງສອນ, ຈະເປັນການເຕືອນສະຕິ, ຈະເປັນການບໍຣິຈາກ,ຈະເປັນຜູ້ຄຸ້ມຄອງ, ຈະເປັນຜູ້ສະແດງຄວາມເມດຕາ, ໂປໂລໄດ້ສອນວ່າໃຫ້ເຮັດຕາມຄວາມເຊື່ອແລະເຮັດດ້ວຍໃຈຈິງ. ແລະກໍຍັງໄດ້ສອນອີກວ່າ ໃຫ້ເຮັດດ້ວຍຄວາມຮັກ ແລະທຳໜ້າທີ່ໃນຄຣິສຕະຈັກໃຫ້ເປັນຊີວິດຈິດໃຈ. ຖ້າທ່ານຫາກຍັງຢູ່ໃນໂລກນີ້ ທຸກຄົນຄວນທຳງານໃຫ້ພຣະເຈົ້າໂດຍຜ່ານທາງຄຣິສຕະຈັກ.

ໂປໂລໄດ້ກ່າວເຖິງຂອງປະທານນີ້ແຕກຕ່າງກັນໄປ ໃຫ້ເບິ່ງ 1ໂກຣິນໂທ 12:4-10; 28-23, ເອເຟໂຊ 4:11; 1 ເປໂຕ 4:10-11.

ພວກເຮົາຮູ້ແລ້ວວ່າຂອງປະທານທີ່ໂປໂລໄດ້ກ່າວມານັ້ນ ບໍ່ແມ່ນຄົນດຽວຈະມີຄົບທຸກຢ່າງດອກ ແຕ່ວ່າພຣະວິນຍານບໍຣິສຸດຈະເປັນຜູ້ຊົງສຳແດງ ດ້ວຍພຣະຄຸນຕາມຄວາມເຊື່ອຂອງແຕ່ລະຄົນ. ຢ່າຄິດວ່າຕົນເອງສາມາດເຮັດໄດ້ແຕ່ພຽງຄົນດຽວ, ແລະຄິດວ່າຕົນເອງເປັນຄົນພິເສດ. ຈົ່ງຄິດວ່າຂອງປະທານນີ້ພຣະເຈົ້າໄດ້ມອບໃຫ້ເຮົາໂດຍການສຳແດງຂອງພຣະວິນຍານບໍຣິສຸດ.

ການສຳແດງພຣະເຢຊູໃນຊີວິດເຮົານີ້ ແມ່ນພຣະຄຸນພຣະເຈົ້າ ທີ່ເຫັນວ່າພວກເຮົາມີການເຊື່ອຟັງ. ການເຊື່ອທີ່ພວກເຮົາປະຕິບັດ ນີ້ລະເຮັດໃຫ້ພວກເຮົາໄດ້ຮັບຂອງພຣະຣາຊທານ, ເພື່ອພວກເຮົາຈະໄດ້ນຳໄປໃຊ້ໃນການດີທຸກຢ່າງຂອງຄຣິສຕະຈັກ. ດັ່ງນັ້ນແຫລະຈົ່ງດຳເນີນຊີວິດ ເພື່ອຮັບໃຊ້ຊຶ່ງກັນແລະກັນ, ມອບກາຍຖວາຍຕົວ, ແລະກ້າທີ່ຈະເຊື່ອຟັງພຣະເຈົ້າຈົນເຖິງທີ່ສຸດ.

### <u>ຄຳຖາມ</u>:

1. ອາຈານໂປໂລໝາຍຄວາມວ່າຢ່າງໃດ ໃນຄຳເວົ້າທີ່ວ່າ: "ການນະມັສການທີ່ສົມກັບຝ່າຍວິນຍານ" ທີ່ຢູ່ໃນ 12:1 ພວກເຮົາເຂົ້າໃຈຄຳວ່າ "ນະມັສການ" ຢ່າງໃດ?

2. ເຮົາຈະອະທິບາຍຢ່າງໃດເພື່ອໃຫ້ດີທີ່ສຸດຂອງຄຳວ່າ "ຂອງພຣະຣາຊທານ"?

3. ໂຣມ ບົດ 1 ເຖິງ ບົດ 11 ກ່າວເຖິງຄົນຢິວແລະຄົນຕ່າງຊາດຫລາຍ ພວກເຂົາເຈົ້າໄດ້ຮັບພຣະກະຣຸນາທິຄຸນຢ່າງໃດໃນພຣະຄຣິດ? ໃນໂຣມ 12:1-8 ແນະນຳໃຫ້ຄົນຢິວແລະຄົນຕ່າງຊາດໃຫ້ທຳງານຮ່ວມກັນຫຍັງແດ່?

4. ເປັນຫຍັງໃນໂຣມ ບົດ 12 ຈຶ່ງບໍ່ໄດ້ກ່າວເຖິງການເວົ້າພາສາແປກໆ ?

# ຖ້າຢ່າງນັ້ນເຮົາຈະດຳລົງຊີວິດຢ່າງໃດ?

## ບົດຮຽນທີ 11

## ດຳເນີນຊີວິດຕາມທາງຂອງຄວາມຮັກ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 12:9-21; 13: 8-10

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ໂຣມ 12:9-21; 13:8-14

<u>ຈຸດສຳຄັນຂອງບົດຮຽນນີ້:</u> ດຳເນີນຊີວິດໃນຄວາມຮັບຜິດຊອບຕໍ່ພຣະຄຸນຂອງພຣະເຈົ້າເອີ້ນວ່າການດັດແປງຊີວິດດ້ວຍຄວາມຮັກ.

<u>ຄຳຖາມເພື່ອການສຳຣວດ:</u> ຖ້າເຮົາຫາກດຳເນີນຊີວິດໃນຄວາມຮັກແທ້ໆ, ເຮົາຈະຢູ່ຢ່າງໃດ ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອໃຈ້ແຍກໃຫ້ເຫັນເສັ້ນທາງ ວ່າເຮົາຈະເອົາຄວາມຮັກມາປະຕິບັດໃນຊີວິດແບບໃດ.

<u>ຄຳນຳ</u>

ເວລາພວກເຮົາກາຍມາເປັນຜູ້ຕິດຕາມພຣະເຢຊູແລ້ວ, ເຮົາບໍ່ໄດ້ຢູ່ຕົວຄົນດຽວ. ເຮົາເປັນພາກສ່ວນກັບຜູ້ຕິດຕາມພຣະເຢຊູອື່ນໆດ້ວຍ. ໂປໂລສອນພວກເຮົາວ່າຄວນຈະປະຕິບັດຢ່າງໃດ. ພວກເຮົາຄວນຮັກຊຶ່ງກັນແລະກັນ. ນີ້ຫມາຍຄວາມວ່າ ພວກເຮົາຮັບໃຊ້, ພວກເຮົາຮູ້ສຶກ, ພວກເຮົາເປັນຫ່ວງເປັນໃຍ, ພວກເຮົາອ້ອນວອນອະທິຖານ ເພື່ອກັນແລະກັນ. ທຸກສິ່ງທີ່ເຮົາກະທຳໄປແມ່ນກະທຳໄປດ້ວຍຄວາມຮັກ.

<u>ຄວາມຮັກແມ່ນສິ່ງທີ່ເຮົາຄວນເຮັດ ໂຣມ 12:9-13</u>

ຄວາມຮັກບໍ່ແມ່ນແຕ່ຄຳເວົ້າ, ຄຳບັລຍາຍອອກມາເປັນສຽງເພັງ, ຄຳກອນ, ຫລື ຂຽນໃສ່ໃນ ຄາດ ເທົ່ານັ້ນ. ຮັກ ແມ່ນຄຳເວົ້າທີ່ປະກອບດ້ວຍການປະຕິບັດ, ແມ່ນຄຳເວົ້າທີ່ການເຄື່ອນໄຫວເຫນັງຕີງ.

ຮັກບໍ່ແມ່ນແນໃສ່ແຕ່ມື້ພິເສດ ຫລື ແນໃສ່ຄົນພິເສດເທົ່ານັ້ນ. ຮັກທີ່ພວກເຮົາສຳແດງອອກນີ້ແມ່ນເພາະເຮົາເປັນຄຣິສຕຽນ.

ມີປີນຶ່ງທີ່ຂ້າພະເຈົ້າໄດ້ໄປຮ່ວມ ແຄ໊ມ ຂອງພວກຄົນຫນຸ່ມ, ຊຶ່ງມີທັງຍິງແລະຊາຍ. ຂ້າພະເຈົ້າກໍໄດ້ນຳຄົນຫນຸ່ມຈາກຄຣິສຈັກຂອງຂ້າພະເຈົ້າໄປດ້ວຍ. ໃນນັ້ນມີຍິງຫນຸ່ມຄົນນຶ່ງ ຊຶ່ງແມ່ໄດ້ເສັຽຊີວິດແຕ່ລາວຍັງນ້ອຍ. ພໍ່ຂອງລາວກໍໄປແຕ່ງງານໃຫມ່, ແມ່ໃຫມ່ກໍບໍ່ໄດ້ໃຫ້ຄວາມສົນໃຈລາວເລີຍ. ລາວບໍ່ຮູ້ເຣື່ອງຄວາມຮັກຫລາຍ, ລາວເຮັດແຕ່ແນວບໍ່ດີ ແລະຕິດຕາມແຕ່ສິ່ງບໍ່ດີ. ລາວພະຍາຍາມເຮັກທຸກຢ່າງເພື່ອເຮັດໃຫ້ທຸກຄົນສົນໃຈລາວ. ແຕ່ກໍບໍ່ໄດ້ຜົນ. ໃນທີ່ສຸດລາວກໍພະຍາຍາມຈະຈູດທຳພັກ. ທຸກຄົນພະຍາຍາມສຳແດງຄວາມຮັກໃຫ້ລາວເຫັນແຕ່ລາວກໍບໍ່ຍອມເຫັນ. ໃນທີ່ສຸດຕົວຂ້າພະເຈົ້າເອງກໍຫມົດຄວາມອົດທົນເຫມືອນກັນ, ແຕ່ພຣະເຈົ້າ ໄດ້ເອົາຄວາມຮັກຂອງພຣະອົງ ເຂົ້າມາໃສ່ໃນຕົວຂ້າພະເຈົ້າອີກ ເພື່ອໃຫ້ມີຄວາມຮັກລາວອີກ. ຄືນນຶ່ງຫລັງຈາກທີ່ໄດ້ສົນທະນາກັນດົນພໍສົມຄວນແລ້ວລາວກໍຮູ້ສຶກຢາກປ່ຽນ. ແລ້ວລາວກໍໄດ້ເຊີນເອົາພຣະເຢຊູເຂົ້າມາຢູ່ໃນຊີວິດຂອງລາວ. ລາວບອກກັບເພື່ອນທັງຫລາຍວ່າ: ແຕ່ກ່ອນຂ້ອຍບໍ່ຮັກໃຜຈັກຄົນໃນທີ່ນີ້. ຂ້ອຍຢາກທຳລາຍສະຖານທີ່ນີ້. ແຕ່ພວກເຈົ້າທັງຫລາຍຮັກຂ້ອຍຫລາຍໂພດຄວາມຮັກຂອງພຣະເຈົ້າຊ່ວຍໃຫ້ພວກເຮົາຮັກກັນໄດ້ເຖິງແມ່ນຈະຍາກປານໃດກໍຕາມ.

ທຸກວັນນີ້ ຄົນທັງຫລາຍເວົ້າເຖິງ "ຕົກຫລຸມຮັກ" . ເມື່ອຮັກກັນແລ້ວກໍແຕ່ງງານກັນ ບໍ່ພໍທໍ່ໃດ ຄຳເວົ້າກໍປ່ຽນແປງໄປ "ຂ້ອຍຮັກເຈົ້າບໍ່ລົງອີກແລ້ວ". ໂປໂລສອນວ່າເຮົາຄວນດຳເນີນຊີວິດຕາມເສັ້ນທາງຮັກ. ຂໍ້10-13 ມີຢູ່ 9 ຢ່າງທີ່ພວກເຮົາສາມາດສຳແດງຄວາມຮັກ. ອ່ານຂໍ້ພຣະຄຳອີກເທື່ອນຶ່ງ. ຂີດກ້ອງຂໍ້ຄຳສັ່ງເຮົາຄວນເຮັດ.

ໃນພຣະຄັມພີ, ຄວາມຮັກມີພລັງ, ມັນເປັນຄວາມພໍໃຈ ແຕ່ມັນເປັນຄວາມພໍໃຈທີ່ຕ້ອງອາສັຍພລັງຂອງພຣະເຈົ້າ. ພວກເຮົາຢາກຮັກເຫມືອນພຣະເຈົ້າຮັກ. ຊະນິດຮັກຂອງພຣະອົງແມ່ນຮັກຄົນອື່ນຫລາຍກ່ວາ.

ຮັກແມ່ນການເອົາໃຫ້ ແລະຮັກກໍສາມາດຄວບຄຸມໃນຕົວມັນເອງ. ໂປໂລບອກວ່າຊີວິດຂອງພວກເຮົາຄວນຈະເປັນຢ່າງໃດ, ຕ້ອງເປັນຊີວິດຮັກ. ຄວາມຮັກຢ່າງນີ້ກຽດຊັງສິ່ງທີ່ຜິດ. ພວກເຮົາບໍ່ໄດ້ຊັງຄົນ. ພວກເຮົາກຽດຊັງສິ່ງທີ່ເຮັດໃຫ້ມະນຸດຊົ່ວມົວຫມອງ.

ຢາກເຫັນຮັກແທ້ນັ້ນ ໃຫ້ເບິ່ງໃນຊີວິດຂອງພຣະເຢຊູ. ພຣະເຈົ້າປະທານພຣະບຸດຂອງພຣະອົງ. ຄວາມຮັກຂອງພຣະເຈົ້າຍິ່ງໃຫຍ່ຈົນສາມາດຕາຍເທິງໄມ້ກາງແຂນໄດ້. ຄວາມຮັກສາມາດເຮັດຕາມນ້ຳພຣະທັຍຂອງພຣະເຈົ້າໄດ້ ແລະບໍ່ແມ່ນເຮັດຕາມຄົນເວົ້າຫລືໂລກເວົ້າ. ຄວາມຮັກແມ່ນສິ່ງນຶ່ງທີ່ເຮັດໃຫ້ເຮົາມີຄວາມສຸກ, ເປັນທີ່ມາຂອງຄວາມດີ. ຄວາມຮັກບໍ່ອ່ອນແອ , ຄວາມຮັກເຮັດໃຫ້ເຮົາເຂັ້ມແຂງ ແລະຄວາມຮັກສາມາດຊ່ວຍຊີວິດຂອງເຮົາດ້ວຍ.

ດັ່ງນັ້ນເມື່ອທ່ານມີຄວາມຮັກທີ່ມາຈາກພຣະເຈົ້າແລ້ວ, ຈົ່ງພະຍາຍາມເຂົ້າໃຈຄົນອື່ນດ້ວຍວ່າເຂົາຈະມີຄວາມຮູ້ສຶກຢ່າງໃດ. ພວກເຮົາຮັກຄົນອື່ນ, ພວກເຮົາຊ່ວຍຄົນອື່ນ, ພວກເຮົາເຊີນຄົນອື່ນມາກໍເພື່ອເຮົາຈະໄດ້ແບ່ງປັນຄວາມຮັກທີ່ພຣະເຈົ້າມອບໃຫ້ເຮົາ . ບາງຄັ້ງເຮົາກໍຕ້ອງໄດ້ໄປແບ່ງປັນຕາມບ່ອນທີ່ເຂົາເຈົ້າຢູ່ດ້ວຍ.

## <u>ຈົ່ງເຂົ້າໃຈວ່າຄົນອື່ນມີຄວາມຮູ້ສຶກຢ່າງໃດ (ໂຣມ 12: 14-16 )</u>

ເປັນການງ່າຍທີ່ເຮົາຈະຮັກຄົນທີ່ຮັກເຮົາແມ່ນບໍ່? ແຕ່ໂປໂລສອນພວກເຮົາວ່າ ຖ້າພວກເຮົາຢາກເຫມືອນພຣະເຈົ້າແທ້ໆນັ້ນ ຕ້ອງໃຫ້ມີແນວຄິດເຫມືອນພຣະອົງ. ພວກເຮົາຈຶ່ງຈະສາມາດຮັກ ຜູ້ທີ່ມັກສ້າງບັນຫາ, ຜູ້ທີ່ບໍ່ລົງເອີ່ຍກັບເຮົາ. ພຣະເຈົ້າຢາກໃຫ້ພວກເຮົາເປັນຄົນທີ່ຊິດຊ່ວຍຄົນອື່ນ. ພວກເຮົາເປັນຄົນຂອງພຣະເຈົ້າ. ພຣະອົງຊົງຮູ້ວ່າເຮົາມີເສັ້ນຜົມຈັກເສັ້ນ. ເວລາຄົນມີຄວາມຍິນດີເຮົາກໍຈະຍິນດີກັບເຂົາເຈົ້າ. ເວລາຄົນມີຄວາມໂສກເສົ້າເຮົາກໍຄວນໂສກເສົ້າກັບເຂົາເຈົ້າດ້ວຍ.

ພວກເຮົາຄວນຢູ່ຢ່າງສັນຕິສຸກກັບຄົນອື່ນ. ບໍ່ມີຄຣິສຕຽນຄົນໃດທີ່ລົ້ນລື່ນກັນ. ພວກເຮົາເປັນລູກຂອງພຣະອົງຄືກັນຫມົດ ບໍ່ມີຜູ້ໃດເປັນຫລານຫລືເຫລັນ.ຈົ່ງເບິ່ງຄົນອື່ນເຫມືອນພຣະເຢຊູເບິ່ງ. ພຣະເຢຊູເປັນຜູ້ຕົ້ນແລະເປັນຜູ້ປາຍ. ພຣະອົງສຳແດງການຮັບໃຊ້ຂອງພຣະອົງ. ຈຳໄດ້ບໍ່ ພຣະອົງໄດ້ລ້າງຕີນພວກສາວົກ? ຈົ່ງຄິດວ່າບໍ່ມີຜູ້ໃດຢູ່ໃຕ້ເຮົາ. ຈົ່ງຄິດເຖິງທຸກຄົນທີ່ພຣະເຢຊູໄດ້ຕາຍເພື່ອເຂົາ.

## <u>ພຣະເຈົ້າຈະຈັດການກັບຄົນຊົ່ວເອງ (ໂຣມ12:17-21)</u>

ໂປໂລໄດ້ບອກຄຣິສຕຽນທີ່ຢູ່ກຸງໂຣມວ່າ ຢ່າເຮັດຊົ່ວຕອບແທນການຊົ່ວ. ແທນທີ່ຈະທຳຢ່າງນັ້ນ ຈົ່ງກະທຳແຕ່ສິ່ງທີ່ດີຕອບ ເຖິງແມ່ນວ່າ ຄົນອື່ນຈະບໍ່ເຮັດກໍຕາມ.

ໂປໂລຮູ້ດີວ່າບາງທີກໍຍາກເຕັມທີທີ່ມະນຸດທັງຫລາຍຈະຢູ່ຮ່ວມກັນດ້ວຍສັນຕິວິທີໄດ້. ພວກເຮົາຕ້ອງລໍຄອຍໃຫ້ພຣະເຈົ້າທຳງານ ຕາມວິທີແລະ ຕາມເວລາຂອງ ພຣະອົງເອງ. ເພາະເຣື່ອງມານຊາຕານນັ້ນແມ່ນຫນ້າທີ່ຂອງພຣະເຈົ້າ ບໍ່ແມ່ນຫນ້າທີ່ຂອງພວກເຮົາ.

ດັ່ງນັ້ນພວກເຮົາບໍ່ຄວນຈະສູ້ຮົບກັບຊາຕານ. ເຮົາຄວນຈະສຳແດງຄວາມຮັກໃຫ້ເຂົາເຫັນເທົ່ານັ້ນກໍພໍ. ໂປໂລບອກວ່າ ຖ້າສັດຕຣູຫິວເຂົ້າເຮົາກໍຄວນໃຫ້ເຂົາກິນເຂົ້າ, ຖ້າເຂົາຢາກນ້ຳ ກໍຄວນໃຫ້ເຂົາກິນ. ນີ້ລະຄືວິທີ

ທາງດຽວທີ່ຈະເອົາຊະນະຄວາມຊົ່ວໄດ້. ສຳແດງຄວາມຮັກ ຮັກແບບພຣະເຈົ້າ.

## ພວກເຮົາເປັນໜີ້ຄວນຮັກຊຶ່ງມີຕໍ່ກັນ (13: 8-10)

ເວລາເຮົາເປັນໜີ້ຄົນເຮົາຕ້ອງຈ່າຍແມ່ນບໍ? ຖ້າບໍ່ຢາກຈ່າຍເຮົາກໍບໍ່ຕ້ອງເປັນໜີ້. ສິ່ງທີ່ເປັນໜີ້ທີ່ແທ້ຈິງນັ້ນ ຄວນຈະແມ່ນຄວາມຮັກ ຄືພວກເຮົາຕ້ອງຮັກທຸກໆຄົນ. ຄວາມຮັກແມ່ນສິ່ງນຶ່ງທີ່ເຮົາບໍ່ສາມາດຈ່າຍໃຫ້ໝົດທຸກຢ່າງໄດ້. ພວກເຮົາຄວນຮັກຄົນອື່ນໄປຈົນຕລອດຊີວິດ.

ພຣະເຈົ້າໄດ້ມອບກົດໝາຍໃຫ້ພວກເຮົາ, ຊຶ່ງພວກເຮົາເອີ້ນວ່າພຣະບັນຍັດ. ກົດໝາຍຂໍ້ນີ່ງສັ້ນໆ ແຕ່ມີຄວາມໝາຍຫລາຍນັ້ນຄືວ່າ ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ. ເພື່ອນບ້ານໝາຍຄວາມວ່າທຸກຄົນທີ່ຢູ່ອ້ອມຂ້າງ ແລະຕ້ອງການຄວາມຊ່ວຍເຫລືອຈາກພວກເຮົາ. ທຸກຄົນ ໝາຍຄວາມວ່າ ທັງຄົນຍິວແລະຄົນຕ່າງຊາດ, ຮັ່ງແລະທຸກ, ໜຸ່ມຫລືແກ່, ຜູ້ຊາຍຫລືຜູ້ຍິງ.

ພວກເຮົາຮຽນມາຫລາຍກ່ຽວກັບຄວາມຮັກ ວ່າພຣະເຢຊູ ເຮັດຫຍັງແດ່ ແລະໂປໂລຂຽນໄວ້ຢ່າງໃດແດ່. ຄວາມຮັກນີ້ແມ່ນຄວາມຮັກທີ່ບໍ່ຕ້ອງການສິ່ງໃດຕອບແທນທັງສິ້ນ. ແມ່ນຄວາມຮັກບໍ່ມີການເລືອກຊັ້ນວັນນະ. ເຖິງແມ່ນວ່າຄົນທີ່ເຮົາຮັກນັ້ນ ຫາກບໍ່ເຮັດຕາມຄວາມປາຖນາຂອງເຮົາກໍຕາມພວກເຮົາກໍຍັງຮັກເຂົາຢູ່. ຖ້າຄວາມຮັກຂອງພວກເຮົາຫາກສືບຕໍ່ໄປ ທຸກສິ່ງທຸກຢ່າງກໍຈະລົງເອີ່ຍແລະຕອບສນອງຕາມເວລາອັນສົມຄວນເອງ. ຢ່າເມື່ອຍລ້າໃນຄວາມຮັກ, ຢ່າຢຸດຢັ້ງ, ແລະຈົ່ງມີຄວາມຫວັງໄວ້ສເມີໄປ. ທ່ານເຄີຍເຫັນໃຜບໍ່ທີ່ມີຄວາມຮັກຢ່າງນີ້ ? ຄວາມຮັກຄືການເອົາໃຫ້ ແລະຮັກຕລອດໄປ. ຈົ່ງດຳເນີນຊີວິດໃນເສັ້ນທາງແຫ່ງຄວາມຮັກເຖີດ.

## ຄຳຖາມທີ່ຄວນຄິດ:

1. ຜູ້ທີ່ມີຄວາມເຊື່ອຈະສຳແດງຄວາມຮັກແລະຄວາມຊັງອອກມາພ້ອມກັນດ້ວຍວິທີໃດ ?

2. ທ່ານເຄີຍຮູ້ເຫັນຜູ້ໃດທີ່ສຳແດງຄວາມຮັກ?

3. ໃນອາທິດຈະມານີ້ທ່ານຈະສຳແດງຄວາມຮັກຢ່າງໃດແດ່ ?

4. ທ່ານຮູ້ໃຜແດ່ ຜູ້ທີ່ທ່ານສາມາດສຳແດງຄວາມຮັກຕໍ່ເຂົາໄດ້ ?

## ທ່ານຄວນເຮັດໃນອາທິດນີ້

1. ອ່ານພຣະຄັມພີ 1 ໂກຣິນໂທ ບົດ 13. ແລ້ວໃຫ້ຂຽນ ວ່າໂປໂລ ສອນກ່ຽວກັບຄວາມຮັກຢ່າງໃດ ?

2. ອ່ານພຣະຄັມພີ ລູກາ 10:30-37 ພຣະເຢຊູກ່າວກ່ຽວກັບການຮັກເພື່ອນບ້ານຢ່າງໃດແດ່ ?

# ຖ້າຢ່າງນັ້ນເຮົາຈະດໍາລົງຊີວິດຢ່າງໃດ?

ບົດຮຽນທີ 12

## ຄວາມສັມພັນລະຫວ່າງຄຣິສຕຽນກັບຜູ້ປົກຄອງ

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ໂຣມ 13:1-7

<u>ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:</u> ໂຣມ 13:1-7

<u>ຈຸດສໍາຄັນຂອງບົດຮຽນນີ້:</u> ຄຣິສຕຽນຕ້ອງຍອມຢູ່ໃຕ້ອໍານາດຂອງຜູ້ປົກຄອງ ເພາະຜູ້ທີ່ມີອໍານາດກໍແມ່ນພຣະເຈົ້າຊົງແຕ່ງຕັ້ງຂຶ້ນ.

<u>ຄໍາຖາມເພື່ອການສໍາຣວດ:</u> ແມ່ນຫຍັງຄືສິ່ງສໍາຄັນໃນຄວາມສັມພັນລະຫວ່າງຄຣິສຈັກແລະການປົກຄອງ ແລະ ລະຫວ່າງຄຣິສຕຽນແລະຜູ້ປົກຄອງຂອງເຂົາເຈົ້າ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສິດສອນໃຫ້ຮູ້ຈັກຄວາມສັມພັນລະຫວ່າງຄຣິສຈັກ ແລະ ການປົກຄອງ ແລະ ລະຫວ່າງຄຣິສຕຽນແລະຜູ້ປົກຄອງຂອງເຂົາເຈົ້າ.

<u>ຄໍານໍາ</u>

ພວກເຮົາໄດ້ຮຽນວ່າຄຣິສຕຽນ ໄດ້ມີການປ່ຽນແປງ ແລະເຂົ້າມາເປັນພາກສ່ວນຂອງພຣະກາຍຂອງພຣະຄຣິດແລ້ວ ໃນ ຕອນຕົ້ນຂອງໂຣມ 12 . ແຕ່ວ່າພວກເຮົາຊໍ້າພັດຍັງຢູ່ໃນໂລກນີ້ຢູ່ ຊຶ່ງເປັນໂລກແຫ່ງຜູ້ປົກຄອງຄື ຜູ້ມີອໍານາດທີ່ນໍາພາຢູ່. ພຣະເຈົ້າໄດ້ມອບວຽກນີ້ໃຫ້ຜູ້ປົກຄອງເພື່ອໃຫ້ມະນຸດທັງຫລາຍຢູ່ຮ່ວມກັນຢ່າງດີ. ພຣະເຈົ້າຍັງໄດ້ມອບອໍານາດ ໃຫ້ພວກເຂົາອີກດ້ວຍ. ພວກເຮົາເປັນຜູ້ຕິດຕາມພຣະເຢຊູ. ພວກເຮົາຢູ່ຮ່ວມກັບຜູ້ທີ່ບໍ່ຕິດຕາມພຣະເຢຊູ. ພວກເຮົາຄວນຈະປອງດອງກັບເຂົາ ແລະສໍາແດງໃຫ້ເຂົາເຫັນການດໍາເນີນຊີວິດທີ່ຖືກຕ້ອງຂອງເຮົາ.

<u>ຍອມເຊື່ອຟັງຜູ້ມີອໍານາດປົກຄອງ (13: 1-2)</u>

ຈະເປັນຢ່າງໃດ ຖ້າຫາກທຸກຄົນຂັບຣົດຕາມໃຈໃຜລາວ ຢາກຂັບຂ້າງໃດກໍຂັບ ຢາກຂັບທາງຂຶ້ນທາງລົງກໍຂັບ ຫລືຢາກຂັບສວນທາງຫນ້າທາງຫລັງກໍຂັບ? ຫລືວ່າ ແມ່ນຫຍັງຈະເກີດຂຶ້ນຖ້າຫາກບໍ່ມີການຈໍາກັດຄວາມໄວໃນການຂັບຣົດ ? ໃຜຜູ້ນຶ່ງຢາກຂັບໄວຕາມໃຈຕົວເອງເດ ຈະເປັນແນວໃດ ?

ພວກເຮົາຕ້ອງການລະບຽບ ແລະກົດຫມາຍ ແລະຜູ້ນໍາ. ນີ້ລະຄືແຜນການຂອງພຣະເຈົ້າ. ມີອໍານາດຫລາຍຊະນິດຢູ່ໃນໂລກນີ້. ແຕ່ວ່າອໍານາດທີ່ເຫນືອກວ່າຫມູ່ທີ່ສຸດນັ້ນຄືພຣະເຈົ້າ.

ຫລາຍຄົນກໍບໍ່ຢາກລົງຮອຍກັບຜູ້ປົກຄອງ ຫລືວ່າອີກແນວນຶ່ງກໍຄື ບໍ່ຢາກເຫັນພ້ອມນໍາການປົກຄອງ. ພວກເຂົາຕ້ອງຮຽນວ່າພຣະເຈົ້າໃຫ້ອໍານາດແກ່ຜູ້ປົກຄອງຢ່າງໃດ. ພວກເຮົາຮັກພຣະເຢຊູ ແລະພວກເຮົາກໍຢາກເຊື່ອຟັງພຣະອົງ. ພຣະອົງສອນພວກເຮົາ ໃຫ້ຮູ້ຈັກບັງຄັບຕົນເອງ ແລະໃຫ້ເຊື່ອຟັງພຣະອົງ.ໃນທໍານອງນີ້ພວກເຮົາຈຶ່ງຈະສາມາດປະຕິບັດຕາມຜູ້ປົກຄອງທີ່ພຣະເຈົ້າໄດ້ໃຫ້ອໍານາດແກ່ພວກເຂົາເຈົ້າ

ບາງຄັ້ງຄາວພຣະເຢຊູຍັງໄດ້ເຕືອນຜູ້ປົກຄອງວ່າພວກເຂົາໄດ້ກະທໍາຜິດ.ພຣະອົງກໍຍັງໄດ້ເຕືອນສາວົກຂອງພຣະອົງ ວ່າອັນໃດເປັນຂອງຜູ້ປົກຄອງຈົ່ງໃຫ້ເຂົາໄປ ແລະອັນໃດເປັນຂອງພຣະເຈົ້າກໍຈົ່ງໃຫ້ພຣະເຈົ້າຄືນ. ເວລາພຣະເຢຊູຖືກໄຕ່ສວນຢູ່ຕໍ່ຫນ້າປີລາດ. ເຂົາຖາມພຣະອົງວ່າ: " ເຈົ້າບໍ່ຮູ້ຫລືວ່າເຮົາມີສິດອໍານາດ

ຈະປ່ອຍເຈົ້າແລະມີສິດອຳນາດຄຶງເຈົ້າໄວ້ທີ່ໄມ້ກາງແຂນ" ພຣະເຢຊູຊົງຕອບເຂົາວ່າ: ທ່ານຈະບໍ່ມີສິດອຳນາດເໜືອເຮົາຈັກປະການ ເວັ້ນແຕ່ອຳນາດນັ້ນຈະຊົງປະທານແຕ່ທາງເທິງໃຫ້ແກ່ທ່ານ" ໂຢຮັນ 19:10

ໜ້າທີ່ຂອງຜູ້ປົກຄອງ (13:3-4)

ເວລາພວກເຮົາບໍ່ມີຄວາມຜິດ ພວກເຮົາກໍບໍ່ຢ້ານຜູ້ປົກຄອງຫລືຜູ້ມີອຳນາດ. ເຂົາເຈົ້າຈະລົງໂທດແກ່ຄົນຊົ່ວແລະຄົນເຮັດຜິດ ເພື່ອປ້ອງກັນຄົນດີ. ຖ້າເຂົາເຈົ້າຫາກບໍ່ເຮັດຕາມໜ້າທີ່ ເຂົາເຈົ້າກໍຈະຖືກລົງໂທດ.

ເຂົາເຈົ້າຍັງໄດ້ເຕືອນພວກເຮົາວ່າ ພວກເຮົາຕ້ອງຖືກພິພາກສາໃນວັນນຶ່ງຂ້າງໜ້າ. ນີ້ເປັນໜ້າທີ່ຂອງຜູ້ປົກຄອງ ວ່າທຸກຄົນທີ່ໄດ້ເຮັດຜິດຈຳເປັນຕ້ອງຖືກ. ນີ້ເປັນໜ້າທີ່ຂອງຜູ້ປົກຄອງວ່າຜູ້ທີ່ກະທຳດີແລ້ວຄວນຈະໄດ້ຮັບຄວາມປອດພັຍ.

ຜູ້ນຳແມ່ນຜູ້ທຳງານໃຫ້ພຣະເຈົ້າ. ຜູ້ນຳຈະຕ້ອງມີບັນຫາ ຫາກເຂົາມີການລືມຕົວວ່າອຳນາດ ບໍ່ໄດ້ມາຈາກພຣະເຈົ້າ. ເຂົາເຈົ້າຄວນຈົດຈຳທຸກເວລາ ຄືຄວນຍົກທີ່ສູງສຸດໃຫ້ກັບພຣະເຈົ້າສເມີ.

ພວກເຮົາບໍ່ອາດສາມາດເຂົ້າໃຈໄດ້ທຸກສິ່ງທຸກຢ່າງດອກວ່າ ພຣະເຈົ້າໃຊ້ຜູ້ປົກຄອງຢ່າງໃດ. ຜູ້ປົກຄອງຄົນຍິວໃນສມັຍເປັນຂ້າທາດ ນັ້ນເປັນຄົນບໍ່ດີ. ແຕ່ພວກເຮົາຈະເຫັນໄດ້ໃນພຣະຄັມພີທີ່ພຣະເຈົ້າກ່າວວ່າ: ເພາະເຫດນີ້ແຫລະ ເຮົາຈຶ່ງໄດ້ຍົກເຈົ້າຂຶ້ນ ເພື່ອເຮົາຈະໄດ້ສະແດງຣິດຂອງເຮົາໃຫ້ປາກົດທາງຕົວເຈົ້າ ແລະເພື່ອໃຫ້ນາມຂອງເຮົາປະກາດກ່າວໄປທົ່ວໂລກ."ໂຣມ 9:17

ຜູ້ປົກຄອງອີກຄົນນຶ່ງຊື່ວ່າ ເນບູກັດເນັດຊາ ຄິດວ່າຕົນເອງດີກວ່າພຣະເຈົ້າ. ເພິ່ນໄດ້ເອົາເງິນ, ຄຳໄປຈາກວິຫານກຸງເຢຣູຊາເລັມ. ໃນບັ້ນສຸດທ້າຍຂອງຊີວິດ ເພິ່ນໄດ້ປ່ຽນເພາະວ່າມີແຕ່ພຣະເຈົ້າອົງດຽວເທົ່ານັ້ນທີ່ມີອຳນາດສູງສຸດ. ເພິ່ນກໍໄດ້ບັນທຶກກ່ຽວກັບພຣະເຈົ້າແລະກ່າວວ່າ: .....ແລະບໍ່ມີຜູ້ໃດຢັບຢັ້ງພຣະຫັດຂອງພຣະອົງໄດ້ " ດານີເອນ 4:35

ມີຫລາຍຄັ້ງຫລາຍຄາວທີ່ໂປໂລເຫັນຜູ້ນຳເຮັດຜິດພາດ. ເຂົາເຈົ້າບໍ່ໄດ້ໃຊ້ອຳນາດທີ່ພຣະເຈົ້າມອບໃຫ້ໄປໃນທາງທີ່ຖືກຕ້ອງ. ໂປໂລບອກວ່າພວກທ່ານເຮັດຜິດແລ້ວ. ອ່ານ ກິຈການ 16:35-40

ເປໂຕແລະໂຢຮັນໄດ້ບອກຜູ້ນຳບາງຄົນ ວ່າພວກເຮົາຕ້ອງເຊື່ອຟັງພຣະເຈົ້າ ບໍ່ແມ່ນເຊື່ອຟັງພວກທ່ານເພາະກົດໝາຍອອກມາຈາກທ່ານບໍ່ແມ່ນອອກມາຈາກພຣະເຈົ້າ.

ພວກເຮົາຈຳເປັນຕ້ອງເຮັດສິ່ງທີ່ຖືກຕ້ອງແລະກໍຄວນຈະທຳ (13: 5-7

ເມື່ອພຣະເຈົ້າມອບໃຫ້ເຮັດຜູ້ນຳກໍຄວນຈະເຮັດ. ບໍ່ມີໃຜດອກທີ່ຈະສ້າງກົດໝາຍຂຶ້ນເພື່ອບັງຄັບຕົນເອງ. ແລະກໍບໍ່ມີໃຜເວົ້າດອກວ່າກົດໝາຍແມ່ນເພື່ອຄົນອື່ນບໍ່ແມ່ນຕັ້ງໃສ່ຂ້ອຍເອງ. ຖ້າພວກເຮົາເຮັດດັ່ງນັ້ນພວກເຮົາກໍຈະມີບັນຫາ.

ພວກເຮົາເຊື່ອວ່າຄວາມຈິງແລະຄວາມດີເປັນສິ່ງທີ່ຄວນຈະທຳ. ພວກເຮົາບໍ່ແມ່ນພຣະເຈົ້າ ພວກເຮົາບໍ່ສາມາດຮູ້ທຸກຢ່າງໄດ້. ພວກເຮົາຢາກໃຫ້ຈິດໃຈເປັນສຸກ. ຄຣິສຕຽນຄວນຈະເປັນຊົນຊາດທີ່ດີຂອງພຣະເຈົ້າ. ພວກເຮົາຮູ້ວ່າອຳນາດຂອງຜູ້ປົກຄອງມາຈາກພຣະເຈົ້າ. ພວກເຮົາຮູ້ວ່າອຳນາດປົກຄອງກວມລວມພວກເຮົາດ້ວຍ.

ຕໍ່ມາ, ພວກເຮົາຍັງຖືກສິດສອນໃຫ້ເສັຽພາສີລາຍໄດ້. ພຣະເຢຊູໄດ້ສອນພວກເຮົາໃນ ມັດທາຍ 22:21. ບາງຄົນກໍຈົ່ມດ້ວຍຄວາມບໍ່ພໍໃຈ. ແຕ່ຄົນນຶ່ງຊ້ຳພັດວ່າ, ຈົ່ງຮູ້ສຶກຕົວວ່າທ່ານຕ້ອງຈ່າຍຄືນ ເພາະທ່ານມີລາຍໄດ້. ຖ້າທ່ານບໍ່ມີລາຍໄດ້ ທ່ານກໍບໍ່ຈຳເປັນຕ້ອງເສັຽ.ເງິນທີ່ຈ່າຍໄປແມ່ນໄປເຖິງຜູ້ປົກຄອງ ພວກເຮົາໄດ້ຮັບຫລາຍຢ່າງຈາກການປົກຄອງ: ຖນົນຫົນທາງ, ໂຮງຮຽນ, ຂີ້ເຫຍື້ອ, ຣົດດັບເພີງ, ຕຳຣວດ, ສວນສາທາຣະນະ ແລະອື່ນໆອີກ.

ຍັງສິ່ງນຶ່ງທີ່ພວກເຮົາຍັງເປັນໜີ້ຢູ່ກໍຄືພຣະເຈົ້າໂດຍຜ່ານພຣະເຢຊູ. ພວກເຮົາຄວນຊົດຊ່ວຍຜູ້ທີ່ເຮັດ

ວຽກໃຫ້ກັບພຣະເຈົ້າ ໃນຖານະເປັນອາຈານຂອງທ່ານ. ຍັງມີອີກຫລາຍຜູ້ຫລາຍຄົນທີ່ພວກເຮົາຄວນໃຫ້ການເຄົາຣົບນັບຖື. ວິທີການປະຕິບັດຕໍ່ຄົນອື່ນທີ່ມີອຳນາດ ແມ່ນສະແດງເຖິງຕົວເຮົາເອງວ່າເຮົາເປັນຄົນປະເພດໃດ. ພວກເຮົາເປັນລູກຂອງພຣະເຈົ້າ. ພວກເຮົາຄວນຈະເປັນເຫມືອນພຣະອົງ.

ພວກເຮົາເປັນຊົນຊາດຂອງປະເທດທີ່ເຮົາອາສັຍຢູ່ໃນໂລກນີ້. ພວກເຮົາຄວນຮັກປະເທດຂອງພວກເຮົາ. ໃນເວລາດຽວກັນ, ຄຣິສຕຽນກໍເປັນຊົນຊາດຂອງແຜ່ນດິນສວັນ. ພວກເຮົາເຮັດສິ່ງທີ່ພຣະເຈົ້າຕ້ອງການແລະຕ້ອງເຂົ້າໃຈວ່າພຣະເຈົ້າຜູ້ດຽວຈະເປັນຜູ້ມີອຳນາດປົກຄອງຕລອດໄປ.

## ຄຳຖາມທີ່ຄວນຄິດ:

1. ມີຫຍັງແດ່ທີ່ຜູ້ປົກຄອງເຮັດສິ່ງທີ່ດີສຳຫລັບທ່ານ? ທ່ານຈະຂອບພຣະຄຸນພຣະເຈົ້າວິທີໃດທີ່ພຣະເຈົ້າມອບຜູ້ປົກຄອງໃຫ້ແກ່ທ່ານ?

2. ວິທີໃດແດ່ທີ່ທ່ານຢູ່ພາຍໃຕ້ການນຳພາຂອງຜູ້ປົກຄອງແຕກຕ່າງກັນ ?

3. ມີຜູ້ປົກຄອງໃດແດ່ທີ່ທ່ານເຫັນວ່າດີຫລາຍທີ່ສຸດ? (ເທົ່າທີ່ທ່ານຮູ້ມາ)

4. ຜູ້ປົກຄອງທີ່ດີທີ່ສຸດ, ຮັກປະຊາຊົນ ໃນປະເທດລາວເຮົາ ແມ່ນໃຜ?

5. ເປໂຕກ່າວວ່າ, " ພວກເຮົາຄວນເຊື່ອຟັງພຣະເຈົ້າ ແທນທີ່ຈະຟັງມະນຸດ " ອ່ານອີກເທື່ອນຶ່ງ ກິຈການ 4:18-20

## ເຫັນພ້ອມ ຫລື ບໍ່ເຫັນພ້ອມ

1. "ຄວາມຮັກ ແມ່ນຫນີ້ສິນທີ່ຕ້ອງຈ່າຍແບບທະວີຄູນ" (ອໍກັສຕິນ)

2. ຜູ້ປົກຄອງທີ່ບໍ່ດີນັ້ນແມ່ນ ຜູ້ປົກຄອງເກືອບດີກວ່າທຸກຄົນ

3. ຖ້າພວກເຮົາຢາກຮູ້ພຣະພອນຂອງພຣະເຈົ້າ ແລະຄວາມສຸກຂອງພຣະເຈົ້າ
ຖ້າພວກເຮົາຢາກໃຫຍ່ຂຶ້ນໃນຄວາມເຊື່ອ
ຖ້າພວກເຮົາຫາກໃຫ້ພຣະເຢຊູຄຣິດເປັນເຈົ້າຊີວິດຂອງເຮົາຈິງໆ
ທ່ານຈຳເປັນຕ້ອງໄດ້ສະລະທຸກສິ່ງທຸກຢ່າງ
ບໍ່ແມ່ນຈະຈ່າຍແຕ່ພາສີລາຍໄດ້ທີ່ພຣະຄັມພີບອກເທົ່ານັ້ນ
ແຕ່ຕ້ອງເສັຽພາສີໃຫ້ກັບພຣະເຈົ້າດ້ວຍ, ເພາະພຣະເຈົ້າຊົງເປັນພຣະເຈົ້າ
ແລະພຣະອົງໄດ້ຊົງສ້າງໂລກ
ແລະພວກເຮົາກໍເປັນຜູ້ຮັບໃຊ້ພຣະອົງ

# ຖ້າຢ່າງນັ້ນເຮົາຈະດຳລົງຊີວິດຢ່າງໃດ?

ບົດຮຽນທີ 13

## ຮັບຮູ້ຄຣິສຕຽນທີ່ແຕກຕ່າງກັບທ່ານ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 14:1-4, 13-19; 15:1-7

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ໂຣມ 14:1--15:1-7

<u>ຈຸດສຳຄັນຂອງບົດຮຽນນີ້:</u> ຄຣິສຕຽນຕ້ອງເອົາແບບຢ່າງພຣະເຢຊູໃນການຕ້ອນຮັບຮູ້ຄົນອື່ນ ຜູ້ທີ່ກຳລັງຝຶກຝົນຕົນເອງໃນແນວທາງໃຫມ່.

<u>ຄຳຖາມເພື່ອການສຳຣວດ:</u> ທ່ານຈະຮັບຮູ້ເຂົາຢ່າງໃດ ເມື່ອເຂົາຫາກເປັນຄຣິສຕຽນທີ່ປະຕິບັດແຕກຕ່າງກັບທ່ານ ?

### <u>ຄຳນຳ</u>

ໃນພຣະທັມຄັມພີ ໂຣມ, ໂປໂລໄດ້ກ່າວເຖິງແຜນການຄວາມລອດພົ້ນຂອງພຣະເຈົ້າຕໍ່ຄົນຢິວແລະຄົນຕ່າງຊາດ. ໂດຍຜ່ານພຣະເຢຊູແລ້ວ ພຣະເຈົ້າໄດ້ເຊື້ອເຊີນທຸກໆຄົນໃຫ້ຄືນດີກັນກັບພຣະອົງ. ເວລາໃຜຜູ້ນຶ່ງໄດ້ຮັບເຊື່ອໃນອົງພຣະເຢຊູຄຣິດແລ້ວ ເຂົາກໍຢູ່ໃນຄອບຄົວດຽວກັນກັບເຮົາ. ແຕ່ເວລາເຂົາມານັ້ນ ເຂົາໄດ້ນຳຄວາມແຕກຕ່າງນັ້ນຕິດຕົວເຂົາມາພ້ອມ. ພວກເຮົາຄືກັນຢ່າງນຶ່ງ ຄືຕ້ອງການພຣະເຢຊູ. ພວກເຮົາຄວນຮຽນທີ່ຈະຮັກກັນ. ພວກເຮົາເປັນພາກສ່ວນຂອງຮ່າງກາຍຂອງພຣະຄຣິດ.

ເວລານະມັສການ ບາງຄົນກໍມັກດົນຕຣີແບບນຶ່ງ, ບາງຄົນຊ້ຳພັດມັກໄປອີກແບບນຶ່ງ. ບາງຄົນກໍມັກເທສນາແບບນຶ່ງ ແຕ່ບາງຄົນພັດມັກແນວນຶ່ງ. ສຳຄັນທີ່ສຸດທີ່ຄວນຈະຮູ້ເຖິງຄວາມແຕກຕ່າງນັ້ນ.

ພວກເຮົາຄວນຈະຮຽນທີ່ຈະຮັກຊຶ່ງກັນແລະກັນ ແລະນະມັສການດ້ວຍກັນ ແລະຮັບໃຊ້ຊຶ່ງກັນແລະກັນ. ວິທີນີ້ເປັນວິທີທີ່ດີແລະເປັນວິທີທີ່ສຳຄັນ ທີ່ພວກເຮົາຄວນຈະນະມັສການພຣະເຈົ້າ.

### <u>ຄຣິສຕຽນມີແນວຄິດແຕກຕ່າງບໍ່ວ່າຈະອ່ອນຫລືແຂງ ໂຣມ 14:1-4</u>

ໂປໂລໄດ້ຂຽນຈົດຫມາຍໄປຫາຄຣິສຕຽນຊາວກຸງໂຣມ. ຄຣິສຕຽນທີ່ເປັນຊາດຢິວ ແລະບໍ່ເປັນຊາດຢິວໄດ້ມີການຖົກຖຽງກັນກ່ຽວກັບກົດຫມາຍຂອງຢິວ. ຄົນຢິວກໍຢາກຮັກສາກົດຫມາຍຂອງຢິວກ່ຽວກັບເລື່ອງອາຫານ ແລະວັນພິທີຕ່າງໆ.

ໂປໂລໄດ້ເອີ້ນພວກທີ່ຢາກຮັກສາກົດຣະບຽບເກົ່ານັ້ນວ່າ ພວກ "ອ່ອນ". ລາວເອີ້ນອີກພວກນຶ່ງວ່າ ພວກ "ແຂງ". ລາວບໍ່ໄດ້ຫລາຍຄວາມວ່າໃຜຜິດໃຜຖືກ ລາວບໍ່ໄດ້ຕັດສິນໃຜທັງນັ້ນ. ພຽງແຕ່ລາວເອີ້ນວ່າ ອ່ອນ ແມ່ນຢາກຮັກສາແບບເດີມ. ແຕ່ວ່າພວກແຂງນີ້ແມ່ນພວກບໍ່ໄດ້ສົນໃຈກັບທີ່ຈະອົດອາຫານຫລືມື້ວັນຕ່າງໆ. ໂປໂລໄດ້ຂຽນໄວ້ຫລາຍເທື່ອ ເວົ້າແລ້ວເວົ້າອີກກ່ຽວກັບ ຄົນເວົ້າວ່າ ຈະເປັນຄຣິສຕຽນຕ້ອງເຮັດຢ່າງນັ້ນຢ່າງນີ້, ອົດຢ່າງນັ້ນ ກິນອັນນີ້. ໂປໂລບອກວ່າ ພວກເຂົາເວົ້າຜິດ. (ເບິ່ງຄາລາເຕັຽ 2:11-14; 4:21-5:4). ໂປໂລໄດ້ປະຕິບັດກົດຫມາຍເກົ່າງນັ້ນມາແລ້ວ. ແຕ່ເພື່ອຄວາມແນ່ໃຈ ເພື່ອຢາກໃຫ້ທຸກຄົນເຂົ້າໃຈວ່າບໍ່ຈຳເປັນຕ້ອງປະຕິບັດຕາມກົດຫມາຍເກົ່າທຸກຢ່າງດອກເພື່ອຈະມາເປັນຄຣິສຕຽນ. 1 ໂກຣິນໂທ 9:19-23; ກິຈການ 15:1-29)

ໂປໂລບອກກັບພວກທີ່ ແຂງ ວ່າ ຕ້ອງຮັກພວກທີ່ຍັງ ອ່ອນ ຢູ່. ລາວກ່າວວ່າ ຖ້າທ່ານຫາກປະຕິບັດຢູ່ເໜືອພວກເຂົາ (ອ່ອນ) ພວກທ່ານກໍກະທຳຜິດ. ສຳລັບພວກທີ່ ອ່ອນ ກໍຢ່າໄດ້ຕັດສິນໃສ່ຜູ້ນຶ່ງ ວ່າຄົນນັ້ນຜິດຄົນນີ້ຜິດ ເພາະກິນອັນນັ້ນ ແລະບໍ່ຮັກສາວັນນີ້. ທ່ານອາດຈະມີຄວາມຄິດແຕກຕ່າງກັນ ແຕ່ບໍ່ແມ່ນຈຸດໝາຍສຳຄັນ. ຈຸດສຳຄັນນັ້ນກໍຄື ທັງສອງພວກເປັນຄຣິສຕຽນດ້ວຍກັນ. ທັງສອງພວກຄວນຈະຮັບໃຊ້ຊຶ່ງກັນແລະກັນ. ການຕັດສິນນັ້ນແມ່ນໜ້າທີ່ຂອງພຣະຄຣິດເອງ. ຖ້າພວກເຮົາຫາກທຳໜ້າທີ່ເປັນຜູ້ຕັດສິນ ພວກເຮົາກໍກຳລັງຍາດແຍ່ງເອົາໜ້າທີ່ຂອງພຣະຄຣິດໄປ. ພວກເຮົາເປັນຂອງພຣະຄຣິດ(ໂຣມ 14:4). ພາຍລຸນມາພວກເຮົາທຸກຄົນຈະໄດ້ໄປຊ້ອງໜ້າພຣະຄຣິດແລ້ວພຣະອົງຈະເປັນຜູ້ຕັດສິນພວກເຮົາເອງ. (ໂຣມ 14:8-12 ແລະ 2ໂກຣິນໂທ 5:10)

## ຈົ່ງປັກຕາເບິ່ງສິ່ງທີ່ສຳຄັນ (ໂຣມ 14: 13-19 )

ໂປໂລໄດ້ບອກພວກຄຣິສຕຽນ ທັງແຂງແລະອ່ອນໃຫ້ຮູ້ວ່າ ສິ່ງທີ່ສຳຄັນນັ້ນກໍຄືຈະເຣີ່ມເຕີບໂຕຂຶ້ນ ໃຫ້ເໝືອນພຣະຄຣິດ ແທນທີ່ຈະມາບັງຄັບໃຫ້ແຕ່ລະຄົນຕ້ອງຄິດຄືກັນໝົດ, ແລ້ວກໍເຫັນບາງສິ່ງສຳຄັນຄືກັນໝົດ ແມ່ນເປັນໄປໄດ້ຍາກ. ອາຫານ, ໜ້າທີ່, ວັດຖຸສິ່ງຂອງ ສິ່ງເຫລົ່ານີ້ ບໍ່ມີຄວາມສຳຄັນເລີຍ.

ຄຣິສຕຽນທຸກຄົນແມ່ນຢູ່ໃນເສັ້ນທາງເດີນ ກ້າວໄປຫາອົງພຣະເຢຊູຄຣິດ. ເຮົາບໍ່ຄວນເອົາສິ່ງໃດສິ່ງນຶ່ງໄປວາງໃສ່ຄໍຂອງຄົນອື່ນ. ຈົ່ງຄິດວ່າຄົນອື່ນສຳຄັນກວ່າເຮົາສເມີ. ບາງຄົນອາດຈະຄິດໃສ່ເຮົາໃນທາງທີ່ຜິດເຊັ່ນກັນ ຖ້າພວກເຮົາຫາກໃຊ້ເວລາມົວແຕ່ຕັດສິນຄົນອື່ນ.

ພວກເຮົາຄວນໜູນໃຈ ແລະ ມີຄວາມຮັກ ແລະ ຊ່ວຍເຫລືອຊຶ່ງກັນແລະກັນ. ບໍ່ຄວນຈະຕັດເສັ້ນທາງເດີນຂອງຕົວເອງ.

ແຜ່ນດິນຂອງພຣະເຈົ້າຄວນຈະເຕັມໄປດ້ວຍຄົນທີ່ມີສັນຕິສຸກ ແລະຄົນທີ່ມີຄວາມຍິນດີ ໃນພຣະວິນຍານບໍຣິສຸດ. ພວກເຮົາຮັບໃຊ້ພຣະຄຣິດ ພຣະບິດາຜູ້ຊົງສະຖິດໃນສວັນກໍຊົງຍິນດີກັບພວກເຮົາດ້ວຍ.ແລະພວກອື່ນທີ່ເຫັນເຮົາກໍຄົງຈະມີຄວາມຍິນດີກັບເຮົາເໝືອນກັນ.

## ຢູ່ເພື່ອກັນແລະກັນ ແລະຊ່ວຍເຫລືອຊຶ່ງກັນແລະກັນ (ໂຣມ15:1-7)

ໃນຖານະທີ່ພວກເຮົາເປັນຄຣິສຕຽນ ພວກເຮົາຈຳເປັນຕ້ອງຊ່ວຍເຫລືອຄົນອື່ນ. ພຣະເຢຊູບໍ່ໄດ້ຢູ່ເພື່ອພຣະອົງເອງ. ໂປໂລບອກຄຣິສຕຽນ ໃນກຸງໂຣມວ່າບໍ່ໃຫ້ຢູ່ເພື່ອຕົນເອງ. ພວກເຮົາຕ້ອງຢູ່ຢ່າງພຣະຄຣິດ.

ໂປໂລໃຊ້ຄຳເວົ້າທີ່ຂັດອອກມາຈາກເພັງສັລເສີນ 69:9. ພວກເຮົາຕ້ອງໃຊ້ພຣະຄຳຂອງພຣະເຈົ້າ ເພື່ອໜູນໃຈ. ສິ່ງນີ້ເປັນສິ່ງທີ່ຊ່ວຍໃຫ້ເຮົາຮັບໃຊ້ດ້ວຍຄວາມເຊື່ອໄດ້. (ໂຣມ 15:3-4)

ຄຣິສຕຽນບໍ່ສາມາດເຮັດອັນໃດໄປໄດ້ດີກວ່ານີ້ອີກ ນອກຈາກຈະຢູ່ຢ່າງພຣະຄຣິດ ຄື ຮັບໃຊ້ຄົນອື່ນ. ພວກເຮົາກໍຄວນຄິດເໝືອນພຣະເຢຊູຄິດ ທີ່ມີຈິດໃຈສົງສານແລະຄວາມຮັກ. ສິ່ງນີ້ລະ ທີ່ຈະເຮັດໃຫ້ຄົນອື່ນສົນໃຈແລະກໍເປັນຄວາມຕ້ອງການຂອງຝູງຊົນທົ່ວໄປ. ບາງຄັ້ງ ເວລາເຮົາຕິດຕາມພຣະເຢຊູ ເຮົາກໍຕ້ອງມີຄວາມທຸກທໍຣະມານ ເໝືອນພຣະເຢຊູທີ່ທົນທຸກທໍຣະມານ. ພວກເຮົາຄວນຖືກຕ້ອງປອງດອງກັນກັບອ້າຍເອື້ອຍນ້ອງຂອງພວກເຮົາ ດ້ວຍຄວາມເຊື່ອ ເຖິງແມ່ນວ່າແນວຄິດຈະບໍ່ເປັນໄປທຳນອງດຽວກັນກໍຕາມ.

ຢ່າທໍ້ຖອຍ ພຣະເຈົ້າຊົງຊ່ວຍພວກເຮົາ. ຂໍ້ທີ 4 ວ່າຢ່າງນີ້ "ດ້ວຍວ່າທຸກສິ່ງທີ່ຂຽນໄວ້ໃນສມັຍກ່ອນນັ້ນກໍຂຽນໄວ້ເພື່ອສັ່ງສອນພວກເຮົາ ເພື່ອເຮົາຈະໄດ້ມີຄວາມຫວັງໃນຄວາມພຽນ ແລະຄວາມຊ່ອຍຊູໃຈ ດ້ວຍທາງພຣະຄັມພີນັ້ນ."

ອ່ານພຣະຄັມພີ ແລະຮຽນທີ່ຈະມີຄວາມຫວັງ. ແມ່ຕູ້ຂອງຂ້າພະເຈົ້າ ໄດ້ອະທິຖານເປັນເວລາຫລາຍປີເພື່ອລູກຊາຍຂອງເພິ່ນຄົນນຶ່ງທີ່ຈາກໄປເປັນເວລານານ. ລາວບໍ່ໄດ້ຢຸດຢ່ອນ, ລາວບໍ່ໄດ້ທໍ້ຖອຍ, ລາວເຊື່ອໃນ

ພຣະຄັມພີ. ພຣະຄັມພີເທົ່ານັ້ນທີ່ເຮັດໃຫ້ລາວມີຄວາມຫວັງ. ໃນທີ່ສຸດ, ວັນນຶ່ງລູກຊາຍຂອງລາວກໍກັບມາອີ່ຫລີ. ລາວເວົ້າວ່າ "ຂ້ອຍຮູ້ແລ້ວວ່າວັນນຶ່ງລູກຂ້ອຍຈະຕ້ອງກັບມາ."

ຂໍ້ 5 ກ່າວວ່າ ພຣະເຈົ້າບໍ່ໄດ້ປະທານຄວາມທໍ້ຖອຍໃຫ້ແກ່ເຮົາ ແຕ່ພຣະອົງປະທານຄວາມພຽນ ຄວາມຊ່ອຍຊູໃຈ ແລະ ຊິດຊ່ອຍເຮົາເວລາເຮົາຄິດ. ເວລາເຮົາເຮັດຢ່າງນີ້ ຈະຖືກໃຈຜູ້ອື່ນຫລືບໍ່, ມັນຈະບໍ່ເປັນພິດເປັນພັຍຫຍັງບໍ່, ຫລືມັນມີຜົນສະທ້ອນຫຍັງຕໍ່ຜູ້ອື່ນຫລືບໍ່. ຈົ່ງມີຄວາມພາກພຽນ ອົດທົນ.

ພວກເຮົານະມັສການພຣະເຈົ້າຜູ້ຊົງເປັນພຣະບິດາຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາ.ນີ້ຄືສິ່ງທີ່ໂປໂລຕ້ອງການ. ຍັງບໍ່ພໍທໍ່ນັ້ນ ພວກເຮົາຍັງໄດ້ສຶກສາ ຈາກສິ່ງທີ່ພຣະວິນຍານບໍຣິສຸດ ໄດ້ກ່າວໄວ້ ແລະຈາກຊີວິດຈິງຂອງພຣະເຢຊູຄຣິດ. ພວກເຮົາຄວນຈະວາງຄວາມຄິດຂອງພວກເຮົາທີ່ຄິດເຂົ້າຂ້າງຕົວເອງຫລາຍເກີນໄປ. ພວກເຮົາຄວນຈະຕ້ອນຮັບ ແລະ ຮັບຮູ້ຄຣິສຕຽນທຸກໆຄົນ. ພວກເຂົາເປັນອ້າຍນ້ອງຂອງພວກເຮົາ. ອ່ານໂຣມ 14:1 ອີກເທື່ອນຶ່ງ.

ໂປໂລຂຽນຢ້ຳແລ້ວຢ້ຳອີກ ລາວຄົງຈະຮູ້ວ່າພວກເຮົາຕ້ອງການສິ່ງນີ້ຫລາຍແທ້. ຈົ່ງຮຽນທີ່ຈະຮັບເອົາທຸກໆຄົນ. ພຣະເຢຊູຕາຍເພື່ອທຸກຄົນ ບໍ່ແມ່ນເພື່ອທ່ານຄົນດຽວ.

ພ້ອມກັນນະມັສການພຣະເຢຊູ ຜູ້ສິ້ນພຣະຊົນຢູ່ເທິງໄມ້ກາງແຂນ ແລະຄືນມາໃນວັນຖ້ວນສາມ ແລະຊົງພຣະຊົນຢູ່. ພຣະອົງຄົນດຽວທີ່ເປັນຄວາມຈິງ ແລະຈະເປັນຜູ້ຕັດສິນ ທັງຄົນເປັນແລະຄົນຕາຍ. ພຣະອົງຜູ້ດຽວຈະເປັນຜູ້ປົກຄອງມະນຸສໂລກທັງຫມົດ.

## <u>ຄຳຖາມຊວນຄິດ:</u>

1. ໃນຄຣິສຈັກຂອງທ່ານຈະມີການນະມັສການຢູ່ຈັກແບບ? ຖ້າແຕ່ລະຄົນຫາກອອກແບບຕາມແນວຄິດຂອງໃຜຂອງລາວ
2. ອ່ານ ຄາລາເຕັຽ 1:6-12 ແລະ ອ່ານ 1ໂກຣິນໂທ 9: 19-23 ແມ່ນຫຍັງທີ່ສຳຄັນກວ່າຫມູ່ໃນພຣະຄັມພີຕອນນີ້.
3. ໃນ ໂຣມ 14 ແມ່ນຫຍັງທີ່ໂປໂລເວົ້າວ່າບໍ່ສຳຄັນປານໃດ ?
4. ໃນການຊ່ວຍເຫລືອຄົນອື່ນ ທ່ານຄວນຈະເຮັດຢ່າງໃດ ?

## <u>ທ່ານຄວນເຮັດໃນອາທິດນີ້</u>

ລອງເຮັດກັບໃຜຜູ້ນຶ່ງລອງເບິ່ງໃນອາທິດນີ້ ເພື່ອສຳແດງຄວາມຮັກ